

ບົດລາຍງານຫຍໍ້ການຕິດຕາມການສຶກສາໂລກ 2021/2

ບົດບາດຂອງພາກສ່ວນທີ່ບໍ່ແມ່ນພາກລັດ ໃນວຽກງານການສຶກສາ:

ໃຜເປັນຜູ້ເລືອກ? ໃຜເປັນຜູ້ສູນເສຍ?

unesco

ເປົ້າໝາຍ
ການພັດທະນາ
ແບບຍືນຍົງ

Global
Education
Monitoring
Report

ບົດລາຍງານຫຍໍ້ການຕິດຕາມການສຶກສາໂລກ

2021/2

ບົດບາດຂອງພາກສ່ວນທີ່ບໍ່ແມ່ນພາກລັດ ໃນວຽກງານການສຶກສາ:

ໃຜເປັນຜູ້ເລືອກ? ໃຜເປັນຜູ້ສູນເສຍ?

ຖະແຫຼງການອິນຊອນ (Incheon) ແລະ ຂອບປະຕິບັດງານດ້ານການສຶກສາຮອດປີ 2030 ກຳນົດໃຫ້ໃຊ້ບົດລາຍງານການຕິດຕາມການສຶກສາໂລກ ເປັນ “ກົນໄກ ສຳລັບການຕິດຕາມ ແລະ ການລາຍງານກ່ຽວກັບເປົ້າໝາຍທີ 4 ຂອງເປົ້າໝາຍການພັດທະນາແບບຍືນຍົງ ແລະ ເປົ້າໝາຍອື່ນໆ ທີ່ກ່ຽວຂ້ອງກັບການສຶກສາ” ໂດຍມີຄວາມຮັບຜິດຊອບຕໍ່ “ການລາຍງານກ່ຽວກັບການປະຕິບັດຍຸດທະສາດແຫ່ງຊາດ ແລະ ສາກົນ ເພື່ອຊ່ວຍໃຫ້ຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງຮັບຜິດຊອບຕໍ່ພັນທະສັນຍາຂອງຕົນ ຊຶ່ງເປັນສ່ວນໜຶ່ງຂອງການຕິດຕາມ ແລະ ທົບທວນເປົ້າໝາຍການພັດທະນາແບບຍືນຍົງທັງໝົດ”. ບົດລາຍງານສະບັບນີ້ ໄດ້ຖືກຈັດຂຶ້ນ ໂດຍທີມງານອິດສະຫຼະທີ່ອຸຍແນສໂກ ອຳນວຍຄວາມສະດວກໃຫ້.

ການແຕ່ງຕັ້ງ ແລະ ການນຳສະເໜີເນື້ອໜາ ແລະ ຮູບພາບຕ່າງໆໃນບົດລາຍງານສະບັບນີ້ ບໍ່ໄດ້ອອກມາຈາກຄວາມຄິດເຫັນໃດໆໃນສ່ວນຂອງອຸຍແນສໂກ ທີ່ກ່ຽວພັນ ເຖິງສະຖານະພາບດ້ານກົດໝາຍຂອງປະເທດໃດໜຶ່ງ, ເຂດນ້ຳແດນດິນ, ເມືອງ ຫຼື ພື້ນທີ່ໃດໜຶ່ງ, ຫຼື ສິດອຳນາດໃນການປົກຄອງ ຫຼື ກ່ຽວຂ້ອງກັບເສັ້ນພົມແດນ ຫຼື ເຂດແດນຂອງເຂົາເຈົ້າ.

ທີມງານບົດລາຍງານການຕິດຕາມການສຶກສາໂລກ ເປັນຜູ້ຮັບຜິດຊອບໃນການຄັດເລືອກ ແລະ ສະເໜີຂໍ້ມູນຄວາມເປັນຈິງທີ່ບັນຈຸໄວ້ໃນປຶ້ມຫົວນີ້ ແລະ ລວມເຖິງ ຂໍ້ຄິດເຫັນທັງໝົດໃນບົດລາຍງານນີ້, ຊຶ່ງບໍ່ຈຳເປັນຕ້ອງເປັນຄວາມຄິດຄວາມເຫັນຂອງອຸຍແນສໂກ ແລະ ບໍ່ໄດ້ກ່ຽວຂ້ອງກັບອົງການແຕ່ປະການໃດ. ຄວາມຮັບຜິດຊອບ ທັງໝົດຕໍ່ທັດສະນະ ແລະ ແນວຄວາມຄິດທີ່ສະແດງອອກໃນບົດລາຍງານສະບັບນີ້ ເປັນຂອງຜູ້ອຳນວຍການໂຄງການ.

ທີມງານບົດລາຍງານການຕິດຕາມການສຶກສາໂລກ

ຜູ້ອຳນວຍການໂຄງການ: ມານອສ ແອນໂຕນິນິສ

ດານຽວ ແອັບຟຽວ, ບີໂລວ ບາຣາແຄດ, ມາເຊີລາ ມາເຣຍ ບາຣິເອສ ຣິເວຣາ, ມາເດລິນ ແບຣີ, ແຄັດຫລີນ ແມັກ, ນິກໂຄ ເບວລາ, ຊິເລຍ ອູຈິເນຍ ຄາໂອ ກູເທຍເລສ, ດານຽວ ຄາໂຣ ວາສເກສ, ແອນນາ ຄູສຕິນາ ດາດິໂອ, ດາມິຕຣາ ດາຟາເຣຍ, ເດມີຫຼີ ເດວິດ, ຟານສິສກາ ເອຊູຊີ, ຄອນສະແຕນຊາ ຈີເນສຕຼາ, ແຊນນີ ເຈນ, ປຣິຍາດາຊານີ ໂຈຊີ, ມາເຣຍ-ຣາແຟລາ ການດິ, ໂຈເຊຟິນ ຄິເຢນເຈ, ແຄ້ ແລດ, ເຄຕີ ລາຊາໂຣ, ເຄເລັ່ງຄ໌ງສ, ຕານິລາ ລິມາ ເດີ ໂມແລສ, ຄາຊິອານີ ໄລແທ້ງໂກໄມນິສ, ອານີສາ ເມັດທາຣ, ຄລໍດີນ ມຸກີຊວາ, ຢູກິ ມູລະກະມິ, ມານູເອລາ ປອມໂປ ໂປລັ່ງໂກ, ຈູດິດ ແລນເດຼຍອານາໂທອາວິນາ, ເຄດ ເຣດແມນ, ມາເຣຍ ຣິສນິບ, ລິວລາ ສຕິບປັນໂນວິກ, ອໍຣິດ ເຈນສ ວັນ ວູເຣນ, ຈູເຣຍນາ ຊາປາຕາ, ເລີມາ ເຊີກເກຼຢາ ແລະ ເຈຍເຮັ່ງ ໂຈ.

ບົດລາຍງານການຕິດຕາມການສຶກສາໂລກ ແມ່ນບົດພິມປະຈຳປີທີ່ເປັນເອກະລາດ. ບົດລາຍງານ ໄດ້ຮັບທຶນຈາກກຸ່ມລັດຖະບານ, ອົງການຈັດຕັ້ງຮ່ວມມືພາຍຝ່າຍ ແລະ ມູນນິທິເອກະຊົນ ພ້ອມທັງໄດ້ຮັບການອຳນວຍຄວາມສະດວກ ແລະ ສະໜັບສະໜູນຈາກ ອຸຍແນສໂກ.

ໃບອະນຸຍາດໃນປັດຈຸບັນແມ່ນເພື່ອນຳໃຊ້ກັບເນື້ອໃນຂອງບົດລາຍງານນີ້ເທົ່ານັ້ນ. ສຳລັບການນຳໃຊ້ຮູບພາບ ຈະຕ້ອງໄດ້ຮັບການອະນຸຍາດກ່ອນ.

ອຸຍແນສໂກເປັນຜູ້ຈັດພິມທີ່ເຂົ້າເຖິງໄດ້ທົ່ວໄປ ແລະ ທຸກໆສິ່ງພິມສາມາດເຂົ້າເຖິງໄດ້ທາງອອນລາຍ ແລະ ໃນສູນເອກະສານຂອງອຸຍແນສໂກ ແລະ ຈະບໍ່ໄດ້ເສຍຄ່າໃຊ້ຈ່າຍໃດໆ. ການຈຳໜ່າຍສິ່ງພິມຂອງອຸຍແນສໂກ ແມ່ນເພື່ອເກັບຄືນຕົ້ນທຶນທີ່ເປັນຄ່າໃຊ້ຈ່າຍຕົວຈິງສຳລັບການພິມ ຫຼື ສຳເນົາເນື້ອໃນລົງໃສ່ເຈ້ຍ ຫຼື ແຜ່ນຊີດີ ແລະ ການແຈກຢາຍ ບໍ່ມີເຈດຕະນາສ້າງຜົນກຳໄລໃດໆ.

ຊື່ບົດລາຍງານຕົ້ນສະບັບເປັນພາສາອັງກິດ: *Global Education Monitoring Report Summary 2021/2022: Non-state actors in education: Who chooses? Who loses?*
ຂໍ້ມູນອ້າງອີງສຳລັບລາຍງານສະບັບນີ້: UNESCO. 2021. Global Education Monitoring Report Summary 2021/2022: Non-state actors in education: Who chooses? Who loses? Paris, UNESCO.

© UNESCO, 2022
ສະບັບແກ້ໄຂຄັ້ງທີ 2
ຈັດພິມໃນປີ 2022 ໂດຍອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ
7, ປລາສ ເດ ຟອງເຕີນອຍ, 75352 ປາຣີ 07 ເອສພີ, ປະເທດຝຣັ່ງ

ຈັດພິມໂດຍ ອຸຍແນສໂກ
ແປເປັນພາສາລາວໂດຍ ຫ້ອງການຄະນະກຳມາທິການແຫ່ງຊາດລາວ ເພື່ອອຸຍແນສໂກ
ອອກແບບກາຣາຍຟິກໂດຍ ບໍລິສັດທີ່ປຶກສາການອອກແບບອອບຕິມາ
ເຂົ້າໜ້າສະບັບພາສາອັງກິດໂດຍ ບໍລິສັດທີ່ປຶກສາການອອກແບບອອບຕິມາ
ເຂົ້າໜ້າສະບັບພາສາລາວໂດຍ ວິງວິໄລ ສຸນທະວົງ

ຮູບປົກ: ເຈບ ຈໍລິສ ເອນ/ ບໍລິສັດຖ່າຍຮູບ ຊູເປີ ຟໍໂມຊາ
ຄຳບັນລະຍາຍ: ເສັ້ນທາງໄປໂຮງຮຽນທີ່ແຕກຕ່າງກັນ, ປະເທດເນເທີແລນ

ພາບປະກອບໂດຍ ຮູຊາໂຕນິກ ເອສອາແອວ ຢູນິເຟັຊັນແນວ
ກາຕູນໂດຍ ຈູລິໂອ ຄາຣິອອນ ເຄີວາ (ກາຣີ)
ແລະ ມີເກວ ມໍລະເລດສ ມາຊິການ
ອິນໂຟກຼາບຟິກໂດຍ ຮູຊາໂຕນິກ ເອສອາແອວ ຢູນິເຟັຊັນແນວ

ED-2021/WS/38

ບົດລາຍງານນີ້ ສາມາດເຂົ້າເຖິງໄດ້ທົ່ວໄປ ພາຍໃຕ້ໃບອະນຸຍາດຈາກແຫຼ່ງທີ່ມາ ShareAlike 3.0 IGO (CC-BY-SA 3.0 IGO) (http://creativecommons.org/licenses/by-sa/3.0/igo/). ການນຳໃຊ້ເນື້ອຫາຂອງບົດພິມນີ້, ຜູ້ນຳໃຊ້ຈະຕ້ອງປະຕິບັດຕາມ ເງື່ອນໄຂຂອງການນຳໃຊ້ແຫຼ່ງຂໍ້ມູນເປີດຂອງ ອຸຍແນສໂກ (http://www.unesco.org/open-access/terms-use-ccbysa-en).

ໃບອະນຸຍາດໃນປັດຈຸບັນແມ່ນກ່ຽວກັບນຳໃຊ້ກັບເນື້ອໃນຂອງສິ່ງພິມນີ້ສະເພາະເທົ່ານັ້ນ. ສຳລັບການນຳໃຊ້ອຸປະກອນໃດໜຶ່ງທີ່ບໍ່ໄດ້ກຳນົດຢ່າງຊັດເຈນວ່າເປັນຂອງ ອຸຍແນສໂກ ຈະຕ້ອງໄດ້ຮັບການອະນຸຍາດຈາກ: publication.copyright@unesco.org ຫຼື UNESCO Publishing, 7, place de Fontenoy, 75352 Paris 07 SP France.

ຊຸດບົດລາຍງານການຕິດຕາມການສຶກສາໂລກ

2021/2	ບົດບາດຂອງພາກສ່ວນທີ່ບໍ່ແມ່ນພາກລັດໃນວຽກງານການສຶກສາ: ໃຜເປັນຜູ້ເລືອກ? ໃຜເປັນຜູ້ສູນເສຍ?
2020	ການຮວມເອົາທຸກຄົນ ແລະ ການສຶກສາ: ທຸກຄົນກໍຄືທ້ັງໝົດ
2019	ການຍົກຍ້າຍຖິ່ນຖານ, ການພັດພາກຖິ່ນຖານ ແລະ ການສຶກສາ: ສ້າງຂົວ, ບໍ່ແມ່ນສ້າງກຳແພງ
2017/8	ຄວາມຮັບຜິດຊອບໃນການສຶກສາ: ເພື່ອບັນລຸຕາມຄຳໝັ້ນສັນຍາຂອງພວກເຮົາ
2016	ການສຶກສາສຳລັບປວງຊົນ ແລະ ໂລກ: ສ້າງອະນາຄົດແບບຍືນຍົງສຳລັບທຸກຄົນ

ຊຸດບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ:

2015	ການສຶກສາເພື່ອທຸກຄົນ 2000-2015: ຜົນສຳເລັດ ແລະ ສິ່ງທ້າທາຍ
2013/4	ການຮຽນ ແລະ ການສອນ: ການບັນລຸຄຸນນະພາບການສຶກສາເພື່ອທຸກຄົນ
2012	ຊາວໜຸ່ມ ແລະ ທັກສະ: ນຳໃຊ້ການສຶກສາ ເພື່ອປະກອບອາຊີບ
2011	ວິກິດການເຊື່ອງຊ້ອນ: ຄວາມຂັດແຍ່ງດ້ວຍອາວຸດ ແລະ ການສຶກສາ
2010	ການເຂົ້າເຖິງຜູ້ດ້ອຍໂອກາດ
2009	ການເອົາຊະນະກັບຄວາມບໍ່ມີຄຸນນະພາບ ເປັນຫຍັງການບໍລິຫານຄຸ້ມຄອງຈຶ່ງເປັນບັນຫາສຳຄັນ
2008	ການສຶກສາເພື່ອທຸກຄົນໃນປີ 2015: ພວກເຮົາຈະສາມາດບັນລຸໄດ້ບໍ່?
2007	ການວາງພື້ນຖານທີ່ເຂັ້ມແຂງ: ການລ້ຽງດູ ແລະ ການສຶກສາເດັກກ່ອນໄວຮຽນ
2006	ການຮູ້ໜັງສືຕະຫຼອດຊີວິດ
2005	ການສຶກສາເພື່ອທຸກຄົນ: ຄວາມຈຳເປັນດ້ານຄຸນນະພາບ
2003/4	ຄວາມສະເໝີພາບຍິງ-ຊາຍ ແລະ ການສຶກສາ ເພື່ອທຸກຄົນ: ກ້າວກະໂດດເພື່ອຄວາມສະເໝີພາບ
2002	ການສຶກສາເພື່ອທຸກຄົນ: ໂລກຂອງເຮົາໄປຖຶກທິດທາງແລ້ວບໍ່?

ບົດລາຍງານຫຍໍ້ ແລະ ເອກະສານທີ່ກ່ຽວຂ້ອງສາມາດດາວໂຫຼດໄດ້ທີ່: Bit.ly/2021gemreport



ບົດບາດຂອງພາກສ່ວນທີ່ບໍ່ແມ່ນພາກລັດໃນວົງການການສຶກສາ 1

ຂໍ້ຄວາມສຳຄັນ 1

ການສະໜັບສະໜູນການສຶກສາຂອງລັດແມ່ນມີຄວາມເຂັ້ມແຂງ 3

ຄວາມຄິດເຫັນທີ່ຫຼາກຫຼາຍນຳໄປສູ່ການໂຕ້ຖຽງ ກ່ຽວກັບການສະໜັບສະໜູນ ຫຼື ຄັດຄ້ານການສະໜອງທີ່ບໍ່ແມ່ນພາກລັດໃຫ້ແກ່ການສຶກສາ 3

ຍັງຄົງມີຄວາມເຊື່ອກ່ຽວກັບອົງການຈັດຕັ້ງຂອງລັດ ແລະ ພາກສ່ວນທີ່ບໍ່ແມ່ນພາກລັດໃນຂົງເຂດການສຶກສາ 5

ການໃຫ້ບໍລິການ 9

ການປົກຄອງ ແລະ ລະບຽບການ 10

ການເງິນ 11

ອິດທິພົນ 13

ການດູແລ ແລະ ການສຶກສາກ່ອນໄວຮຽນ 14

ການສຶກສາຊັ້ນສູງ 15

ການສຶກສາດ້ານເຕັກນິກວິຊາຊີບ, ອາຊີວະສຶກສາ ແລະ ການສຶກສາຜູ້ໃຫຍ່ 16

ຂໍ້ສະເໜີແນະຕ່າງໆ 17

ການຕິດຕາມວົງການການສຶກສາໃນເປົ້າໝາຍການພັດທະນາແບບຍືນຍົງ 21

ປະເທດຕ່າງໆ ໄດ້ສິ່ງມາດຖານ SDG 4 ແຫ່ງຊາດ 21

ໂຄວິດ-19 22

ຄາດໝາຍທີ 4.1. ການສຶກສາຊັ້ນປະຖົມ ແລະ ມັດທະຍົມສຶກສາ 25

ຄາດໝາຍທີ 4.2. ການສຶກສາກ່ອນໄວຮຽນ 25

ຄາດໝາຍທີ 4.3. ການສຶກສາດ້ານເຕັກນິກວິຊາຊີບ, ອາຊີວະສຶກສາ ການສຶກສາຊັ້ນສູງ ແລະ ການສຶກສາຜູ້ໃຫຍ່ .. 26

ຄາດໝາຍທີ 4.4. ທັກສະສຳລັບການເຮັດວຽກ 27

ຄາດໝາຍທີ 4.5. ຄວາມສະເໝີພາບ 27

ຄາດໝາຍທີ 4.6. ການຮູ້ໜັງສື ແລະ ການຄິດໄລ່ເລກ 28

ຄາດໝາຍທີ 4.7. ການພັດທະນາແບບຍືນຍົງ ແລະ ການເປັນພົນລະເມືອງໂລກ 29

ຄາດໝາຍທີ 4.ກ. ສິ່ງອຳນວຍຄວາມສະດວກດ້ານການສຶກສາ ແລະ ສະພາບແວດລ້ອມການຮຽນຮູ້ 29

ຄາດໝາຍທີ 4.ຂ. ທຶນການສຶກສາ 29

ຄາດໝາຍທີ 4.ຄ. ຄູ 30

ການສຶກສາຢູ່ໃນເປົ້າໝາຍ SDG ອື່ນໆ 30

ການຕິດຕາມດ້ານການເງິນ 31



ເຄດິດ: ຢູນິເຊບ/ໂອລິວີ ແອສເຊລີ

ບົດບາດຂອງພາກສ່ວນທີ່ບໍ່ແມ່ນພາກລັດ ໃນວົງການການສຶກສາ

ຂໍ້ຄວາມສຳຄັນ

ບໍ່ມີການສຶກສາສ່ວນໃດທີ່ບໍ່ມີພາກສ່ວນທີ່ບໍ່ແມ່ນພາກລັດມີສ່ວນຮ່ວມ.

ເວົ້າງ່າຍໆ ຖ້າບໍ່ມີພາກສ່ວນທີ່ບໍ່ແມ່ນພາກລັດ ການສຶກສາຂອງເດັກນ້ອຍກວ່າ 350 ລ້ານຄົນ ຈະຕົກຢູ່ໃນຄວາມຮັບຜິດຊອບຂອງລັດ. ແຕ່ການມີສ່ວນຮ່ວມຈາກພາກສ່ວນທີ່ບໍ່ແມ່ນພາກລັດ ຍັງສົ່ງຜົນກະທົບຕໍ່ປຶ້ມແບບຮຽນທີ່ເດັກນ້ອຍໃຊ້, ອາຫານໃນໂຮງອາຫານ, ການສະໜັບສະໜູນເພີ່ມທີ່ພວກເຂົາໄດ້ຮັບ, ທັກສະທີ່ພວກເຂົາຮຽນຮູ້ ແລະ ອື່ນໆອີກ.

ຄົນສ່ວນຫຼາຍສະໜັບສະໜູນການສຶກສາຂອງພາກລັດ.

3 ໃນ 4 ຄົນ ໃນ 34 ປະເທດທີ່ມີລາຍໄດ້ປານກາງ ແລະ ລາຍໄດ້ສູງ ຕ້ອງການໃຫ້ລາຍຈ່າຍຂອງພາກລັດໃນດ້ານການສຶກສາເພີ່ມຂຶ້ນຫຼາຍກວ່ານີ້ ແລະ ການສະໜັບສະໜູນຄວນຈະເນັ້ນໜັກເພີ່ມຂຶ້ນໃນປະເທດທີ່ຄວາມເທົ່າທຽມຍັງຢູ່ໃນລະດັບຕ່ຳ. ເກືອບ 9 ໃນ 10 ຄົນ ຄິດວ່າການສຶກສາຄວນຈະເປັນຂອງພາກລັດ.

ແຕ່ການສະໜັບສະໜູນດັ່ງກ່າວໄດ້ຄ່ອຍໆຫຼຸດລົງໃນຫຼາຍປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ.

ຢູ່ບ່ອນທີ່ໂຮງຮຽນລັດຂາດການສະໜອງ ແລະ ຄຸນນະພາບຫຼຸດລົງ, ຫຼາຍຄອບຄົວຈະຕັດສິນໃຈຢຸດໃຊ້ບໍລິການ. ສັດສ່ວນຂອງສະຖາບັນເອກະຊົນໃນທົ່ວໂລກເພີ່ມຂຶ້ນ 7 ຈຸດສ່ວນຮ້ອຍໃນປະມານ 10 ປີ: ໃນຊັ້ນປະຖົມສຶກສາ ເປັນ 17% ໃນປີ 2013 ແລະ ໃນຊັ້ນມັດທະຍົມສຶກສາ ເປັນ 26% ໃນປີ 2014 ແລະ ຕັ້ງແຕ່ນັ້ນມາກໍຍັງຄົງທີ່. ໃນອາຊີກາງ ແລະ ອາຊີໃຕ້, ສັດສ່ວນການລົງທະບຽນເຂົ້າຮຽນໃນໂຮງຮຽນເອກະຊົນ, ໃນຊັ້ນປະຖົມສຶກສາ ແມ່ນ 36% ແລະ ໃນຊັ້ນມັດທະຍົມສຶກສາ ແມ່ນ 48%.

ການສຶກສາຂອງລັດ ຍັງບໍ່ແມ່ນການຮຽນແບບບໍ່ເສຍຄ່າ.

ລາຍຈ່າຍການສຶກສາໃນຄົວເຮືອນທັງໝົດໃນທົ່ວໂລກ ຄິດເປັນອັດຕາສ່ວນ 30% ແລະ 39% ໃນປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງລະດັບຕ່ຳ. ສ່ວນໜຶ່ງແມ່ນຍ້ອນຄອບຄົວທີ່ຮັ່ງມີພະຍາຍາມໃຫ້ລູກຂອງຕົນໄດ້ປຽບໃນການແຂ່ງຂັນ. ແຕ່ສ່ວນໃຫຍ່ແມ່ນໃຊ້ຈ່າຍໃນການສຶກສາຊັ້ນກ່ອນປະຖົມ, ປະຖົມ ແລະ ມັດທະຍົມ ທີ່ລັດຖະບານໃຫ້ຄຳໝັ້ນສັນຍາທີ່ຈະສະໜອງການສຶກສາໂດຍບໍ່ເສຍຄ່າ. ຄອບຄົວກູ້ຢືມເພື່ອຈ່າຍຄ່າການສຶກສາປະມານ 8%, ເພີ່ມຂຶ້ນເປັນ 12% ໃນປະເທດທີ່ມີລາຍໄດ້ຕ່ຳ ແລະ 30% ຫຼື ຫຼາຍກວ່ານັ້ນ ໃນປະເທດໄຮຕິ, ເຄນຢາ, ຟີລິບປິນ ແລະ ອູກັນດາ.

ການສຶກສາຂອງລັດມັກຈະບໍ່ທົ່ວເຖິງ.

ລະບົບການສຶກສາຂອງລັດຈຳນວນຫຼາຍລົ້ມເຫຼວໃນການປ້ອງກັນການແບ່ງແຍກຊົນຊັ້ນ ແລະ ການແບ່ງແຍກ. ດັດຊະນີຄວາມຫຼາກຫຼາຍທາງດ້ານສັງຄົມໃນໂຮງຮຽນ ໂດຍອີງຕາມຂໍ້ມູນໂຄງການການປະເມີນນັກຮຽນນານາຊາດ (PISA) ພົບວ່າ ປະເທດອາເຈນຕິນາ, ເປຼຊິນ, ຊີລີ ແລະ ເມັກຊິໂກ ມີຄວາມຫຼາກຫຼາຍທາງຊົນຊັ້ນຢູ່ໃນໂຮງຮຽນຢູ່ໃນລະດັບສູງທີ່ຄ້າຍຄືກັນໃນປີ 2018, ເຖິງແມ່ນວ່າຈະມີພຽງແຕ່ປະເທດຊີລີເທົ່ານັ້ນ ທີ່ມີທ່າອ່ຽງຖືກວິພາກວິຈານເຖິງສັດສ່ວນທີ່ສູງຂອງສະຖາບັນສຶກສາເອກະຊົນໃນລະບົບຂອງຕົນ.

ບໍ່ມີຜູ້ໃຫ້ບໍລິການປະເພດໃດໜຶ່ງ ທີ່ໃຫ້ການສຶກສາທີ່ມີຄຸນນະພາບດີກວ່າປະເພດອື່ນ.

ຂໍ້ມູນຈາກ 30 ປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ ສະແດງໃຫ້ເຫັນວ່າ ເມື່ອພິຈາລະນາລັກສະນະຂອງຄົວເຮືອນແລ້ວ, ຄ່ານິຍົມການເຂົ້າໂຮງຮຽນເອກະຊົນຈະຫຼຸດລົງຢ່າງຈະແຈ້ງເຖິງເຄິ່ງໜຶ່ງຫາສອງສ່ວນສາມ. ໃນຕົວຢ່າງຂອງ 49 ປະເທດ, ຜູ້ທີ່ຮັ່ງມີທີ່ສຸດມີໂອກາດຮຽນໃນໂຮງຮຽນເອກະຊົນຫຼາຍກວ່າເກືອບສິບເທົ່າຂອງຜູ້ທີ່ທຸກຍາກ ແລະ ພໍ່ແມ່ທີ່ສາມາດເລືອກໂຮງຮຽນໄດ້ກໍເຮັດແນວນັ້ນ ຍ້ອນຄວາມເຊື່ອທາງສາສະໜາ, ຄວາມສະດວກສະບາຍ ແລະ ລັກສະນະທາງປະຊາກອນຂອງນັກຮຽນຫຼາຍກວ່າຄຸນນະພາບ ຊຶ່ງພວກເຂົາບໍ່ຄ່ອຍມີຂໍ້ມູນພຽງພໍ.

ຄວາມສາມາດໃນການກຳນົດດ້ານລະບຽບການ, ການຕິດຕາມກວດກາ ແລະ ການບັງຄັບໃຊ້ ມີທ່າອ່ຽງຕ່ຳໃນບ່ອນທີ່ມີຄວາມຕ້ອງການສູງ.

ການວິເຄາະລະບົບການສຶກສາ 211 ລະບົບ ໃນເວັບໄຊ PEER ສະແດງໃຫ້ເຫັນວ່າ ກົດລະບຽບມີທ່າອ່ຽງທີ່ຈະສຸມໃສ່ການລົງທະບຽນ, ການອະນຸມັດ ຫຼື ອອກໃບອະນຸຍາດ (98%), ການຢັ້ງຢືນຄູ (93%), ໂຄງສ້າງພື້ນຖານ (80%) ແລະ ອັດຕາສ່ວນນັກຮຽນຕໍ່ຄູ (74%). ກົດລະບຽບທີ່ຈະເນັ້ນໃສ່ຄຸນນະພາບ ຫຼື ຄວາມສະເໝີພາບມີໜ້ອຍທີ່ສຸດ: 67% ກຳນົດຄ່າທຳນຽມ, 55% ປ້ອງກັນຂະບວນການຄັດເລືອກນັກຮຽນໃນໂຮງຮຽນທີ່ບໍ່ແມ່ນຂອງລັດ, 27% ຫ້າມສ້າງຜົນກຳໄລ ແລະ ມີພຽງ 7% ທີ່ມີໂກຕ້າສະໜັບສະໜຸນການເຂົ້າເຖິງຂອງກຸ່ມດ້ອຍໂອກາດ. ການສອນພິເສດແມ່ນບໍ່ມີລະບຽບການຢູ່ໃນ 48% ຂອງປະເທດຕ່າງໆ ແລະ ມີພຽງແຕ່ໃນກົດໝາຍການຄ້າໃນ 11% ຂອງປະເທດຕ່າງໆ.

ພາກສ່ວນທີ່ບໍ່ແມ່ນພາກລັດປະກົດມີຫຼາຍຂຶ້ນຢູ່ໃນການສຶກສາກ່ອນໄວຮຽນ, ເຕັກນິກວິຊາຊີບ, ການສຶກສາຊັ້ນສູງ ແລະ ການສຶກສາຜູ້ໃຫຍ່.

ສິ່ງນີ້ໃນບາງໂອກາດກໍເປັນການກໍ່ໃຫ້ເກີດການສູນເສຍຄວາມສະເໝີພາບ ແລະ ຄຸນນະພາບ. ໂດຍທົ່ວໄປແລ້ວ ຄ່າໃຊ້ຈ່າຍທີ່ສູງຂຶ້ນຂອງການສຶກສາກ່ອນໄວຮຽນ ແລະ ການສຶກສາຊັ້ນສູງຂອງເອກະຊົນນັ້ນ ໝາຍຄວາມວ່າ ຄົນຊັ້ນສູງໃນຕົວເມືອງມີຈຳນວນຫຼາຍເກີນໄປໃນສະຖາບັນເຫຼົ່ານີ້. ຢູ່ໃນສະຫະລັດອາເມລິກາ, ມະຫາວິທະຍາໄລທີ່ຫວັງສ້າງຜົນກຳໄລສູງສຸດ ຈະຕິດພັນກັບຜົນການຮຽນທີ່ຖົດຖອຍຂອງນັກສຶກສາ. ສະຖາບັນທີ່ສະໜອງການຝຶກອົບຮົມພິເສດໂດຍຜ່ານລະບົບການແຂ່ງຂັນໃນຕະຫຼາດ ຫຼື ການພັດທະນາທັກສະ, ເຊັ່ນ: ໂຄງການເງິນກູ້ TVET FEE-HELP ຂອງອິດສະຕາລີ ແລະ ບໍລິສັດພັດທະນາສີມືແຮງງານແຫ່ງຊາດຂອງອິນເດຍ, ຈຳຕ້ອງຄິດຄືນໃໝ່ກ່ຽວກັບຂະບວນການຮັບຜິດຊອບ ແລະ ການຕິດຕາມ ເພື່ອເພີ່ມຄຸນນະພາບຂອງການສະໜອງຂອງພາກເອກະຊົນ ແລະ ປັບປຸງຜົນໄດ້ຮັບຂອງການຈ້າງງານ.

ລັດຖະບານ ຕ້ອງເບິ່ງແຍງສະຖາບັນການສຶກສາ, ນັກຮຽນ ແລະ ຄູອາຈານທັງໝົດເປັນສ່ວນໜຶ່ງຂອງລະບົບດຽວ.

ມາດຕະຖານ, ຂໍ້ມູນຂ່າວສານ, ສິ່ງຈູງໃຈ ແລະ ຄວາມຮັບຜິດຊອບຄວນຊ່ວຍໃຫ້ລັດຖະບານປົກປ້ອງ, ເຄົາລົບ ແລະ ປະຕິບັດສິດໃນການສຶກສາຂອງທຸກຄົນ ແລະ ຄວນປ້ອງກັນພວກເຂົາບໍ່ໃຫ້ເບິ່ງເຫັນແຕ່ອະພິສິດ ຫຼື ການຊູດຮີດ. ການສຶກສາທີ່ໄດ້ຮັບທຶນຈາກລັດ ບໍ່ຈຳເປັນຕ້ອງສະໜອງໂດຍລັດ, ແຕ່ຄວາມບໍ່ສະເໝີພາບໃນຂະບວນການສຶກສາ, ຜົນໄດ້ຮັບຂອງນັກຮຽນ ແລະ ເງື່ອນໄຂການເຮັດວຽກຂອງຄູຄວນໄດ້ຮັບການແກ້ໄຂໂດຍກົງ. ປະສິດທິພາບ ແລະ ນະວັດຕະກຳ ບໍ່ຄວນເປັນຄວາມລັບທາງການຄ້າ; ແຕ່ຄວນຈະໄດ້ຮັບການແຜ່ກະຈາຍ ແລະ ປະຕິບັດໂດຍທຸກຄົນ. ເພື່ອບັນລຸໄດ້ແນວນັ້ນ, ຕ້ອງຮັກສາຄວາມໂປ່ງໃສ ແລະ ຄວາມຊື່ສັດໃນຂະບວນການກຳນົດນະໂຍບາຍການສຶກສາຂອງພາກລັດ.

ລັດຖະບານບໍ່ແມ່ນຜູ້ນຳພາການສຶກສາສະເໝີໄປ. ໃນປະຫວັດສາດ, ການສຶກສາໄດ້ຖືກຈັດຕັ້ງຢ່າງເປັນທຳມະຊາດແບບທັນທີທັນໃດ ແລະ ບໍ່ເປັນທາງການໂດຍສາສະໜາ, ຄອບຄົວ ແລະ ສະມາຄົມວິຊາຊີບ. ຈາກທ້າຍສະຕະວັດທີ 18, ລັດຕ່າງໆໄດ້ເຫັນໂອກາດທີ່ຈະພັດທະນາ ເສດຖະກິດຂອງຕົນຜ່ານແຮງງານທີ່ມີການສຶກສາ ແລະ ເພື່ອພັດທະນາ ແລະ ເສີມສ້າງຄວາມເປັນເອກະລັກຂອງຊາດ ໂດຍຜ່ານໂຮງຮຽນຂອງລັດ. ລັດຖະບານໄດ້ກຽມພ້ອມທີ່ຈະໃຊ້ຕົ້ນທຶນສູງໃນການສົ່ງເສີມການບໍລິການ ສາທາລະນະດ້ານນີ້ ເນື່ອງຈາກເປັນປະໂຫຍດຕໍ່ສັງຄົມ ແລະ ເສດຖະກິດ ໃນວົງກວ້າງ. ສຳລັບປະເທດທີ່ເປັນເອກະລາດໃໝ່ໃນສະຕະວັດທີ 20, ການສ້າງລະບົບການສຶກສາຂອງລັດຖືເປັນຈຸດເດັ່ນຂອງການປົດປ່ອຍຈາກ ລັດທິອານານິຄົມ. ການສຶກສາຂອງລັດແມ່ນແນໃສ່ສົ່ງເສີມອຸດົມການອັນສູງສົ່ງ ຫຼື ອຸດົມການທາງການປົກຄອງຢ່າງບໍ່ປ່ຽນແປງ. ໂຄງສ້າງໃໝ່ໄດ້ເຂົ້າມາແທນທີ່ ແລະ ຊຶມຊັບເອົາໂຄງສ້າງການສຶກສາແບບດັ້ງເດີມ.

ແຕ່ການສຶກສາກໍຍັງເປັນຜະລິດຕະພັນສ່ວນບຸກຄົນ. ການບໍລິໂພກການ ສຶກສາຫຼາຍຂຶ້ນຈະຊ່ວຍປັບປຸງໂອກາດຂອງບຸກຄົນ ແລະ ອາດຈະກີດກັ້ນ ຄົນອື່ນຈາກໂອກາດດັ່ງກ່າວ. ບັນດາຜູ້ທີ່ສາມາດປີນຂັ້ນໄດການສຶກສາໄດ້ ຈະຢູ່ໃນຕຳແໜ່ງທີ່ດີກວ່າທີ່ຈະບັນລຸມາດຕະຖານຊີວິດທີ່ສູງຂຶ້ນ ແລະ ຜົນຕອບແທນທີ່ສູງຂຶ້ນ. ເນື່ອງຈາກລະບົບການສຶກສາບໍ່ສາມາດຮອງຮັບ ທຸກຄົນໃຫ້ຢູ່ໃນລະດັບທີ່ສູງຂຶ້ນ, ຄອບຄົວຈະເຮັດທຸກສິ່ງທີ່ສາມາດເຮັດໄດ້ ເພື່ອຮັບປະກັນວ່າລູກຫຼານຂອງຕົນແມ່ນຜູ້ທີ່ໄປສູ່ຈຸດສູງສຸດ. ການແຂ່ງຂັນ ດັ່ງກ່າວ ເຮັດໃຫ້ເກີດຄວາມຕ້ອງການຊຶ່ງນຳໄປສູ່ການສະໜອງສິນຄ້າ ແລະ ການບໍລິການດ້ານການສຶກສາ. ອີງຕາມສະພາບການ ແລະ ທ່າອ່ຽງ ຂອງຊາດ, ຕະຫຼາດໃນການສະໜອງການບໍລິການດ້ານການສຶກສາໂດຍ ກົງທີ່ໃຫ້ຜົນປະໂຫຍດກໍຈະເກີດຂຶ້ນ.

ການສະໜັບສະໜູນການສຶກສາຂອງລັດແມ່ນມີຄວາມ ເຂັ້ມແຂງ

ທາງເລືອກດ້ານການສຶກສາກຳນົດຊີວິດຂອງເດັກນ້ອຍ. ຜູ້ປົກຄອງ ບໍ່ພຽງແຕ່ ຄຳນວນຕົ້ນທຶນທາງການເງິນ ແລະ ຜົນປະໂຫຍດຢ່າງງ່າຍໆເທົ່ານັ້ນ ແຕ່ຍັງຕ້ອງພິຈາລະນາຫຼາຍປັດໄຈທີ່ກ່ຽວຂ້ອງກັນ. ການເລືອກກ່ຽວກັບ ສິ່ງທີ່ສອນ, ວິທີການ, ໂດຍໃຜ ແລະ ບ່ອນໃດ ສ່ອງແສງເຖິງທັດສະນະ ຂອງການແຂ່ງຂັນໃນໂລກ ແລະ ຄວາມປາຖະໜາຂອງຜູ້ປົກຄອງ ແລະ ຜູ້ມີສ່ວນຮ່ວມໃນການສຶກສາອື່ນໆ ຊຶ່ງກ່ຽວຂ້ອງກັບ 2 ມິຕິຕົ້ນຕໍຄື: ການຄວບຄຸມ ແລະ ການແຈກຢາຍຊັບພະຍາກອນ, ຄຸນຄ່າ ແລະ ຄວາມເຊື່ອໃນການປ່ຽນແປງສັງຄົມ. ທາງເລືອກດ້ານການສຶກສາແມ່ນ ມີຄວາມໝາຍທາງດ້ານການເມືອງຢ່າງສູງ ແລະ ຖືກສ່ອງແສງໃຫ້ເຫັນ ຢ່າງຈະແຈ້ງ ຫຼື ໂດຍທາງອ້ອມໃນວາລະທາງການເມືອງ. ນອກເໜືອ ຈາກປັດໄຈດ້ານອຸດົມການຂອງບຸກຄົນ ແລະ ດ້ານສະພາບແວດລ້ອມແລ້ວ, ຄວາມເຂົ້າໃຈກ່ຽວກັບສິ່ງທ້າທາຍທາງສັງຄົມ ແລະ ວິທີທີ່ລັດ, ປະຊາຊົນ ແລະ ສະຖາບັນ ຄວນຈະມີການພົວພັນຊຶ່ງກັນ ແລະ ກັນແນວໃດນັ້ນ ແຕກຕ່າງກັນໄປໃນແຕ່ລະປະເທດ. ຄວາມເຂົ້າໃຈເຫຼົ່ານີ້ ມີອິດທິພົນຕໍ່ ທັດສະນະຄະຕິກ່ຽວກັບການຕັດສິນໃຈວ່ານະໂຍບາຍໃດທີ່ລັດຖະບານ ຄວນດຳເນີນການ ແລະ ໃຜຄວນໄດ້ຮັບຜົນປະໂຫຍດຈາກນະໂຍບາຍເຫຼົ່ານັ້ນ.

ມີການຄຶ້ນຄວ້າກ່ຽວກັບການສະໜັບສະໜູນການສຶກສາຂອງປະເທດທີ່ມີ ລາຍໄດ້ສູງຫຼາຍທີ່ສຸດ. ການສຳຫຼວດທັດສະນະຄະຕິໃນເດັນມາກ, ຝຣັ່ງ, ເຢຍລະມັນ, ໄອແລນ, ອິຕາລີ, ສະເປນ, ສະວີເດນ ແລະ ສະຫະລາຊະອານາຈັກ ໄດ້ສະແດງໃຫ້ເຫັນວ່າ ເມື່ອໃຫ້ຜູ້ຕອບແບບສອບຖາມຈັດລຳດັບຄວາມສຳຄັນ ໜຶ່ງໃນແປດຂົງເຂດທີ່ມີທ່າແຮງສຳລັບການໃຊ້ຈ່າຍເພີ່ມເຫັນວ່າ ການສຶກສາ ເປັນທາງເລືອກສູງສຸດເຖິງ 28% ແລະ ການດູແລສຸຂະພາບເປັນອັນດັບ ສອງ 22%. ໃນຂະນະທີ່ 77% ຂອງຜູ້ຕອບສະໜັບສະໜູນການເລືອກ ໂຮງຮຽນ, ຫຼາຍກວ່າ 60% ຄັດຄ້ານນິດບາດສຳຄັນຂອງໂຮງຮຽນເອກະຊົນ ໃນລະບົບການສຶກສາແຫ່ງຊາດ.

ການວິເຄາະຂໍ້ມູນໂມດູນພິເສດ ຂອງໂຄງການສຳຫຼວດກ່ຽວກັບແຜນງານ ສັງຄົມສາກົນ (International Social Survey Programme ຫຼື ISSP) ປີ 2016 ກ່ຽວກັບບົດບາດຂອງລັດຖະບານ ຊຶ່ງຖືກມອບໝາຍ ສຳລັບບົດລາຍງານນີ້ ໄດ້ກ່າວເຖິງການສະໜັບສະໜູນການສຶກສາຂອງລັດ ໂດຍໃຊ້ຕົວຢ່າງຂອງ 35 ປະເທດ, ລວມທັງ 10 ປະເທດ ທີ່ມີລາຍໄດ້ ປານກາງ. ໂດຍລວມແລ້ວ, 89% ຂອງຜູ້ຕອບແບບສອບຖາມທີ່ເປັນ ຜູ້ໃຫຍ່ກ່າວວ່າ ຄວາມຮັບຜິດຊອບຕົ້ນຕໍສຳລັບການສະໜອງການສຶກສາ ໃນໂຮງຮຽນແມ່ນລັດຖະບານ, ໃນຂະນະທີ່ 6% ກ່າວວ່າແມ່ນຄອບຄົວ ແລະ 5% ແມ່ນສະຖາບັນອື່ນໆ (ບໍລິສັດເອກະຊົນ ແລະ ອົງການຈັດຕັ້ງ ເພື່ອຫວັງຜົນກຳໄລ; ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ, ການກຸສົນ ແລະ ສະຫະກອນ; ແລະ ອົງການຈັດຕັ້ງທາງສາສະໜາ). ແຕ່ຜູ້ຕອບໃນ ປະເທດອິນເດຍ (46%), ຟີລິບປິນ (63%) ແລະ ຊີລີ (76%) ໄດ້ ສະແດງການສະໜັບສະໜູນຕ່ຳສຸດສຳລັບການສະໜອງຂອງພາກລັດ **(ຮູບທີ 1)** ສະທ້ອນໃຫ້ເຫັນເຖິງການເປີດເຜີຍຢ່າງຊັດເຈນຕໍ່ການ ສະໜອງທີ່ບໍ່ແມ່ນຂອງພາກລັດ.

ຄວາມຄິດເຫັນທີ່ຫຼາກຫຼາຍນຳໄປສູ່ການໂຕ້ຖຽງ ກ່ຽວກັບການສະໜັບສະໜູນ ຫຼື ຄັດຄ້ານການ ສະໜອງທີ່ບໍ່ແມ່ນພາກລັດໃຫ້ແກ່ການສຶກສາ.

ຝ່າຍສະໜັບສະໜູນ ແລະ ຝ່າຍຄັດຄ້ານການປະກອບສ່ວນຂອງ ພາກສ່ວນທີ່ບໍ່ແມ່ນພາກລັດໃນການສຶກສາ ໄດ້ໂຕ້ແຍ້ງກໍລະນີຕ່າງໆ ກ່ຽວກັບຄວາມສາມາດ ແລະ ຖືກຕ້ອງຕາມກົດໝາຍຂອງພາກລັດ ແລະ ພາກສ່ວນທີ່ບໍ່ແມ່ນພາກລັດ ເພື່ອສົ່ງເສີມປະສິດທິພາບ, ຄວາມສະເໝີພາບ ແລະ ທົ່ວເຖິງ, ແລະ ນະວັດຕະກຳໃນການສຶກສາ. ບັນຫາເຫຼົ່ານີ້ ແມ່ນ ເຫັນໄດ້ໂດຍຜ່ານທັດສະນະຂອງຜູ້ທີ່ເຊື່ອວ່າການສຶກສາແມ່ນສິນຄ້າ ຫຼື ການບໍລິການທີ່ຖືກຈັດຊື້ຜ່ານຕະຫຼາດ ແລະ ປະຊາຊົນຄວນຈະສາມາດ ເລືອກການສຶກສາໄດ້ ຫຼື ບໍ່.


ພາກສ່ວນທີ່ບໍ່ແມ່ນພາກລັດໃຊ້ຈ່າຍໃນການສຶກສາຄຸ້ມຄ່າກວ່າບໍ?
ຜູ້ສະໜັບສະໜູນກົດຈະກຳຂອງພາກສ່ວນທີ່ບໍ່ແມ່ນພາກລັດໃນດ້ານ ການສຶກສາໂຕ້ຖຽງວ່າ ເປັນສິ່ງທີ່ຫຼີກລ່ຽງບໍ່ໄດ້ເນື່ອງຈາກລັດບໍ່ສາມາດ ຕອບສະໜອງຄວາມຕ້ອງການດ້ານການສຶກສາໄດ້ຄົບຖ້ວນ. ບໍ່ວ່າພາກສ່ວນ ທີ່ບໍ່ແມ່ນພາກລັດຈະໄດ້ຮັບແຮງຈູງໃຈຈາກການກຸສົນ, ຄວາມເຊື່ອ ແລະ ຄວາມຄິດ, ຫຼື ຜົນກຳໄລ, ຖ້າການສະໜອງສິນຄ້າ ແລະ ການບໍລິການ ດ້ານການສຶກສາ ຕອບສະໜອງກັບຄວາມຕ້ອງການ, ຕະຫຼາດແມ່ນ ເປັນໄປໄດ້ - ຖ້າບໍ່ແມ່ນຕະຫຼາດທົ່ວໄປ, ຢ່າງໜ້ອຍກໍແມ່ນຕະຫຼາດທີ່ ອາງແຜນໄວ້. ໂດຍຜ່ານຕະຫຼາດ, ຈຸດປະສົງກ່ຽວກັບຄ່າໃຊ້ຈ່າຍທີ່ມີ ປະສິດທິພາບຈະສາມາດບັນລຸໄດ້.

[1]ບົດລາຍງານສະບັບພາກພື້ນກ່ຽວກັບ ພາກສ່ວນທີ່ບໍ່ແມ່ນພາກລັດໃນການສຶກສາ ຈະແນໃສ່ອາຊີໃຕ້.

ຮູບທີ 1:

ໃນປະເທດສ່ວນໃຫຍ່ທີ່ໄດ້ສຶກສາ, ຫຼາຍກວ່າ 80% ສະໜັບສະໜູນການສະໜອງການສຶກສາຂອງລັດ

ເປີເຊັນຂອງຜູ້ໃຫຍ່ທີ່ຕອບວ່າ ຄວາມຮັບຜິດຊອບຕົ້ນຕໍສຳລັບການສະໜອງການສຶກສາໃນໂຮງຮຽນແມ່ນລັດຖະບານ, 2016.



GEM StatLink: https://bit.ly/GEM2021_Summary_fig1

ແຫຼ່ງຂໍ້ມູນ: Edlund ແລະ Lindh (2021) ໂດຍອີງຕາມ 2016 ISSP.

ຜູ້ຄັດຄ້ານກິດຈະກຳຂອງພາກສ່ວນທີ່ບໍ່ແມ່ນພາກລັດໃນການສຶກສາໄດ້ໂຕ້ຖຽງວ່າ, ຖ້າມີການປະຕິບັດໃຊ້ຈ່າຍແບບປະຫຍັດ, ການປະຕິບັດກໍຄວນຈະຖືກກະຈາຍໄປທົ່ວລະບົບການສຶກສາ ແລະ ປະຕິບັດໃນໂຮງຮຽນທຸກແຫ່ງທັ້ງຂອງລັດ ແລະ ບໍ່ແມ່ນຂອງລັດຄືກັນ. ຖ້າກໍລະນີທີ່ອາດເຮັດໃຫ້ຄູໃນທົ່ວປະເທດໄດ້ຮັບຄ່າຈ້າງຫຼາຍເກີນໄປ, ນີ້ຄວນຈະເປັນບັນຫາຂອງນະໂຍບາຍລັດທີ່ຈະຕ້ອງແກ້ໄຂ, ບໍ່ແມ່ນເຫດຜົນທີ່ຈະປ່ຽນແປງຮູບແບບການສະໜອງ. ພາກສ່ວນທີ່ບໍ່ແມ່ນພາກລັດ ອາດຈະເພີ່ມການໃຊ້ຈ່າຍແບບປະຫຍັດ ໂດຍການຈ້າງຄູສອນໜຸ່ມ ຫຼື ບໍ່ມີຄຸນວຸດທິ, ຊຶ່ງບໍ່ແມ່ນການແກ້ໄຂທີ່ຍືນຍົງ. ການປຽບທຽບຄ່າໃຊ້ຈ່າຍລະຫວ່າງໂຮງຮຽນຂອງລັດ ແລະໂຮງຮຽນທີ່ບໍ່ແມ່ນຂອງລັດ ເປັນສິ່ງທ້າທາຍ. ໂຮງຮຽນຂອງລັດມີທ່າອ່ຽງຮັບໃຊ້ປະຊາກອນທີ່ດ້ອຍໂອກາດຫຼາຍກວ່າ ຊຶ່ງມີຄ່າໃຊ້ຈ່າຍໃນການສຶກສາສູງກວ່າ.

ພາກສ່ວນທີ່ບໍ່ແມ່ນພາກລັດ ໄດ້ສ້າງຄວາມສະເໝີພາບ ແລະ ທົ່ວເຖິງໃນການສຶກສາບໍ? ຜູ້ສະໜັບສະໜູນການສະໜອງຈາກພາກສ່ວນທີ່ບໍ່ແມ່ນພາກລັດໄດ້ໂຕ້ຖຽງວ່າ ຜູ້ໃຫ້ບໍລິການຈາກພາກສ່ວນທີ່ບໍ່ແມ່ນພາກລັດຊ່ວຍໃນການປະຕິບັດຕາມສິດໃນການສຶກສາ. ໃນຫຼາຍສະພາບການ, ພາກສ່ວນທີ່ບໍ່ແມ່ນພາກລັດໄດ້ເຕີມເຕັມຊ່ອງວ່າງອັນແທ້ຈິງໃນການສະໜອງການສຶກສາ ຊຶ່ງມັກເກີດຂຶ້ນກັບກຸ່ມຜູ້ດ້ອຍໂອກາດທີ່ຖືກລະເລີຍໂດຍລະບົບລັດ. ລັດຖະບານມັກຈະລັງເລທີ່ຈະຕັ້ງໂຮງຮຽນຢູ່ໃນບ່ອນຕັ້ງຖິ່ນຖານທີ່ບໍ່ເປັນທາງການ ຄືກັບໃນປະເທດປາກິສະຖານ. ບັນດາພາກສ່ວນທີ່ບໍ່ແມ່ນພາກລັດ ຍັງໄດ້ປະກອບສ່ວນທີ່ມີຄຸນຄ່າໃນວິກິດການ ແລະ ສະພາບການສຸກເສີນ ເຊັ່ນ: ໄພພິບັດຫຼັງການເກີດແຜ່ນດິນໄຫວທີ່ເນປານ ໃນປີ 2015. ໃນ ເອວຊາວາດໍ, ໃນເຂດຕິວເມືອງທີ່ໄດ້ຮັບຜົນ

ກະທົບຈາກຄວາມຮຸນແຮງ ແລະ ກຸ່ມແກ໊ງ, ສັດສ່ວນການເຂົ້າຮຽນໃນ
ໂຮງຮຽນທີ່ບໍ່ແມ່ນຂອງລັດ ເພີ່ມເປັນສອງເທົ່າຂອງຄ່າສະເລ່ຍແຫ່ງຊາດ.

ຜູ້ທີ່ຄັດຄ້ານໂຮງຮຽນທີ່ບໍ່ແມ່ນຂອງລັດຊີ້ໃຫ້ເຫັນບັນຫາທີ່ເກີດຈາກການ
ເລືອກໂຮງຮຽນ. ຖ້າຜູ້ປົກຄອງສາມາດເລືອກໂຮງຮຽນທີ່ເຂົາເຈົ້າຕ້ອງການ
ໂດຍບໍ່ມີກົດລະບຽບແນະນຳ, ຜູ້ທີ່ຮັ່ງມີທີ່ສຸດແມ່ນມີຄວາມສາມາດທີ່ຈະ
ເຂົ້າໂຮງຮຽນທີ່ດີທີ່ສຸດ ຊຶ່ງມັກຈະເປັນໂຮງຮຽນທີ່ບໍ່ແມ່ນຂອງລັດ, ເຮັດໃຫ້ເກີດ
ຄວາມບໍ່ເທົ່າທຽມກັນ, ການແບ່ງຊັ້ນ ແລະ ການແບ່ງແຍກທີ່ທະວີຄວາມ
ຮຸນແຮງຂຶ້ນ. ການຕັດສິນໃຈຂອງຜູ້ປົກຄອງຈຳເປັນຕ້ອງມີຂໍ້ມູນທີ່ດີ, ແຕ່ຂໍ້ມູນ
ກ່ຽວກັບຄຸນລັກສະນະຂອງໂຮງຮຽນແມ່ນຂາດແຄນ ຫຼື ຖ້າມີ, ກໍສະໜອງ
ໃຫ້ບໍ່ເທົ່າທຽມກັນ, ປະຊາຊົນທີ່ດ້ອຍໂອກາດມີການເຂົ້າເຖິງໜ້ອຍກວ່າ.
ຍິ່ງໄປກວ່ານັ້ນ, ຍັງມີປະຊາຊົນທີ່ຍາກທີ່ຈະເຂົ້າເຖິງຫຼາຍກຸ່ມ ທີ່ຜູ້ໃຫ້ບໍລິການ
ອາດຈະລັງເລທີ່ຈະໃຫ້ບໍລິການ.

ບາງຄົນທີ່ຄິດວ່າ ລັດຖະບານບໍ່ຄວນມີບົດບາດຕົ້ນຕໍໃນການສະໜອງ
ການສຶກສາ ທ້າທາຍສິດອຳນາດຂອງລັດໃນການຕັດສິນໃຈກ່ຽວກັບເນື້ອໃນ
ຂອງການສຶກສາ ຫຼື ຄວາມສາມາດໃນການສະໜອງການສຶກສາຕາມ
ມາດຕະຖານທີ່ຕ້ອງການ. ຜູ້ປົກຄອງອາດຈະຕັ້ງຂໍ້ສົງໄສສຳລັບການສະໜອງ
ແບບແຍກຕ່າງຫາກ ແລະ ທີ່ບໍ່ແມ່ນຂອງລັດ ເນື່ອງຈາກຄວາມກັງວົນວ່າ
ໂຮງຮຽນຂອງລັດໃນທ້ອງຖິ່ນຈະເປັນໄພຂົ່ມຂູ່ຕໍ່ຄ່ານິຍົມຂອງຊຸມຊົນທາງ
ດ້ານວັດທະນະທຳ, ຊົນເຜົ່າ, ພາສາ ຫຼື ສາສະໜາ ທີ່ພວກເຂົາຕ້ອງການ
ລ້ຽງດູລູກຫຼານຂອງຕົນ. ແຕ່ລັດຖະບານອາດຈະໂຕ້ຖຽງວ່າ ສິ່ງດັ່ງກ່າວ
ຂັດແຍ່ງກັບພັນທະຂອງຕົນ ເພື່ອຮັບປະກັນການສຶກສາທີ່ສະເໝີພາບ
ແລະ ທົ່ວເຖິງ ແລະ ຂັດຂວາງຄວາມສາມາດໃນການນຳໃຊ້ມາດຕະຖານ
ທີ່ເປັນເອກະພາບໃນຄວາມພະຍາຍາມທີ່ຈະສະໜອງຄຸນນະພາບການສຶກສາ
ດຽວກັນໃຫ້ກັບເດັກນ້ອຍທຸກຄົນ ໂດຍບໍ່ມີຂໍ້ຍົກເວັ້ນ.

ພາກສ່ວນທີ່ບໍ່ແມ່ນພາກລັດນຳເອົານະວັດຕະກຳມາສູ່ການສຶກສາຫຼາຍຂຶ້ນບໍ?
ຜູ້ສະໜັບສະໜູນການມີສ່ວນຮ່ວມຂອງພາກສ່ວນທີ່ບໍ່ແມ່ນພາກລັດໃນ
ການສຶກສາຢືນຢັນວ່າ ມັນຊ່ວຍເພີ່ມນະວັດຕະກຳ. ແນວຄວາມຄິດຫຼາຍ
ຢ່າງທີ່ໄດ້ຫັນປ່ຽນຄວາມເຂົ້າໃຈຂອງການສອນເກີດຂຶ້ນຢູ່ໃນຂອບຂອງ
ລະບົບການສຶກສາຂອງລັດ ຫຼື ຕະຫຼອດຈົນຮອດພາຍນອກຂອງລະບົບ.
ລະບົບການສຶກສາຂອງລັດ ໄດ້ເຕີບໃຫຍ່ຂຶ້ນ ເປັນລະບົບການຈັດຕັ້ງ
ຂະໜາດໃຫຍ່ທີ່ລວມສູນ ທີ່ອາດຈະເຮັດໃຫ້ເບິ່ງບໍ່ເຫັນປະຊາຊົນທີ່
ຕ້ອງການຮັບໃຊ້. ການວິພາກວິຈານທົ່ວໄປຄື ພວກເຂົາມີໂຄງການລິເລີ່ມ
ທີ່ບໍ່ຈະແຈ້ງ, ບັງຄັບໃຫ້ມີມາດຕະຖານດຽວກັນ ແລະ ເຮັດໃຫ້ນັກຮຽນ
ແລະ ຄູອາຈານໝົດກຳລັງໃຈ.

ການສະໜອງນະວັດຕະກຳແມ່ນວຽກງານທີ່ຊັບຊ້ອນສຳລັບລະບົບການ
ສຶກສາຂອງລັດ. ການປ່ຽນແປງຕ້ອງໄດ້ຮັບການທົດລອງ ແລະ ທົດສອບ
ສຳລັບການຂະຫຍາຍຂະໜາດ. ສິ່ງທ້າທາຍອາດລວມມີ ອຸປະສັກທາງດ້ານ
ຂັ້ນຕອນໃນການດຳເນີນການ, ຊ່ອງວ່າງດ້ານຄວາມສາມາດຂອງອົງການ
ຈັດຕັ້ງ, ການຂາດແຮງຈູງໃຈຂອງຄູ ແລະ ຜູ້ປົກຄອງ, ຊ່ອງທາງດ້ານ
ການເງິນທີ່ຈຳກັດ ແລະ ການແຊກແຊງທາງດ້ານການເມືອງ ແລະ ການ
ຕໍ່ຕ້ານ. ຢ່າງໃດກໍຕາມ, ລະບົບການສຶກສາຂອງລັດບໍ່ໄດ້ມີອິດທິພົນໃນ
ທາງລົບຕໍ່ນະວັດຕະກຳໂດຍການອອກແບບ ແລະ ບາງພາກສ່ວນທີ່ບໍ່
ແມ່ນພາກລັດກຳລັງທົດສອບວ່າ ນະວັດຕະກຳບາງຢ່າງໃຊ້ໄດ້ຜົນຢູ່ໃນ
ການສຶກສາຂອງລັດ ຫຼື ບໍ.


ບັນຫາທີ່ເປັນຂໍ້ໂຕ້ຖຽງກ່ຽວກັບນະວັດຕະກຳ ມັກຈະຖືກປົດບັງໂດຍ
ແນວຄວາມຄິດຕ່າງໆທີ່ຖືກໃຊ້ເປັນບ່ອນອີງໃນການສະແດງຄວາມເຫັນ
ກົງກັນຂ້າມ. ການຫັນເປັນມາດຕະຖານດຽວກັນ ຖືກກ່າວຫາໂດຍກຸ່ມຄົນ
ທີ່ມີແນວຄິດຄັດຄ້ານ ທີ່ເຫັນວ່າລະບົບການສຶກສາຂອງພາກລັດມີຄວາມ
ຕາຍໂຕ ເຄັ່ງຄັດຕາມກົດລະບຽບ ແລະ ບໍ່ມີຄວາມແຕກຕ່າງ, ແຕ່ຖືກ
ປົກປ້ອງຈາກຜູ້ສະໜັບສະໜູນຫຼັກສູດຫຼັກທົ່ວໄປ ເພື່ອຮັບປະກັນວ່າທຸກໆ
ໂຮງຮຽນມີມາດຕະຖານ ແລະ ເປັນຜູ້ທີ່ນຳສະເໜີວ່າ ມັນເປັນຄວາມ
ກົດດັນດ້ານການແຂ່ງຂັນ ເຊິ່ງມັກຈະຖືກກະຕຸ້ນໂດຍຜູ້ສະໜອງພາກ
ເອກະຊົນ ທີ່ກ່ຳໃຫ້ເກີດການເລັ່ງກະແສຕາມມາ. ທ້າຍສຸດແລ້ວ, ການຫັນ
ເປັນມາດຕະຖານດຽວກັນ ບໍ່ໄດ້ເຮັດໃຫ້ເກີດນະວັດຕະກຳ ຫຼືບໍ່ນັ້ນ ມັນຂຶ້ນກັບ
ການໃຫ້ຄວາມໝາຍຂອງຄຳວ່າມາດຕະຖານ. ຄຳສັບທີ່ວ່າ 'ຄວາມ
ຮັບຜິດຊອບ', 'ຄວາມເປັນອິດສະຫຼະ' ແລະ 'ທາງເລືອກ' ຖືກເບິ່ງເປັນ
ທັງຂໍ້ດີ ແລະ ຂໍ້ເສຍ ຂອງຫຼັກການຈັດຕັ້ງຂອງການສຶກສາ. ເຖິງວ່າ
ປະເດັນເຫຼົ່ານີ້ສາມາດນຳມາວາດສອບໄດ້, ແຕ່ມັນບໍ່ສາມາດນຳມາເປັນ
ສິ່ງຢັ້ງຢືນເຖິງບົດບາດທີ່ກວ້າງຂວາງເພີ່ມຂຶ້ນຂອງການສະໜອງການ
ສຶກສາທີ່ບໍ່ແມ່ນຂອງລັດ ໂດຍສະເພາະພາກເອກະຊົນ.

ຍັງຄົງມີຄວາມເຊື່ອກ່ຽວກັບອົງການຈັດຕັ້ງຂອງລັດ ແລະ ພາກສ່ວນທີ່ບໍ່ແມ່ນພາກລັດໃນຂົງເຂດການສຶກສາ

ຕະຫຼອດບົດລາຍງານສະບັບນີ້ ຍັງມີການຕັ້ງຄຳຖາມຕໍ່ກັບຄວາມເຊື່ອ
10 ເລື່ອງ ກ່ຽວກັບບົດບາດຂອງອົງການຈັດຕັ້ງພາກລັດ ແລະ ພາກສ່ວນ
ທີ່ບໍ່ແມ່ນພາກລັດໃນຂົງເຂດການສຶກສາ.


ຄວາມເຊື່ອທີ 1.

**ອົງການຈັດຕັ້ງພາກລັດ ແລະ ພາກສ່ວນທີ່ບໍ່ແມ່ນພາກລັດ ສາມາດ
ຈຳແນກກັນໄດ້ຢ່າງຊັດເຈນ.**



ການສົນທະນາຂອງພາກສ່ວນທີ່ບໍ່ແມ່ນພາກລັດໃນຂົງເຂດການສຶກສາ
ໂດຍປົກກະຕິແລ້ວຈະປະກອບມີ 2 ປະເດັນ: ໂຮງຮຽນຂອງລັດ ແລະ
ໂຮງຮຽນເອກະຊົນ. ໃນພາກປະຕິບັດຕົວຈິງ, ສິ່ງດັ່ງກ່າວນີ້ ແມ່ນມີຄວາມ
ສະລັບສັບຊ້ອນ ແລະ ຄວາມແຕກຕ່າງຫຼາຍຢ່າງກໍບໍ່ທັນຈະແຈ້ງ. ພາກສ່ວນ
ທີ່ບໍ່ແມ່ນພາກລັດແມ່ນມີຄວາມຫຼາກຫຼາຍທີ່ສຸດ. ພວກເຂົາເຂົ້າມາເປັນສ່ວນ
ໜຶ່ງໃນຂະແໜງການສຶກສາຍ້ອນຫຼາຍເຫດຜົນແຕກຕ່າງກັນ ທີ່ກ່ຽວຂ້ອງກັບ
ແນວຄວາມຄິດ, ຄ່ານິຍົມ, ຄວາມເຊື່ອ ແລະ ຜົນປະໂຫຍດ. ຫຼາຍໆຄົນ
ເຂົ້າມາໃນຮູບແບບອົງການຈັດຕັ້ງທີ່ເປັນທາງການ ຫຼື ບໍ່ເປັນທາງການ
ເພື່ອເຮັດວຽກຮ່ວມກັບລັດຖະບານ, ລວມທັງການເຮັດວຽກຕາມສັນຍາ
ແລະ ໃນຮູບແບບການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ຊຶ່ງເຮັດ
ໃຫ້ ການຈຳແນກຄວາມແຕກຕ່າງຍາກຂຶ້ນ.

ຄວາມເຊື່ອທີ 2.
ຂອບເຂດຂອງການເປັນເອກະຊົນແມ່ນຈະແຈ້ງ.




ຄຳອະທິບາຍກ່ຽວກັບທ່າອ່ຽງຕໍ່ກັບບົດບາດຂອງພາກສ່ວນທີ່ບໍ່ແມ່ນພາກລັດ ມັກຈະອີງໃສ່ສັດສ່ວນຂອງສະຖາບັນເອກະຊົນໃນສະຖິຕິການຈົດທະບຽນທັງໝົດ. ບັນດາປະເທດ ຈະສາມາດເກັບກຳສະຖິຕິຄູອາຈານໃນໂຮງຮຽນຂອງລັດ ທີ່ຫາລາຍໄດ້ເສີມຈາກການສອນນັກຮຽນນອກຊົ່ວໂມງເຮັດວຽກ ໄດ້ຄືແນວໃດ? ລະບົບການສຶກສາຈະຍັງຄົງເປັນຂອງລັດໄດ້ຄືແນວໃດ ເມື່ອປຶ້ມແບບຮຽນ, ການປະເມີນຜົນ, ການຄຸ້ມຄອງຂໍ້ມູນ ຫຼື ແມ່ນແຕ່ການຈັດຫາອາຫານ ແລະ ການຂົນສົ່ງ ແມ່ນລ້ວນແລ້ວແຕ່ຈັດຊື້-ຈັດຈ້າງ ມາຈາກທາງນອກ? ນະໂຍບາຍຂອງລັດຖະບານທີ່ຂຽນໂດຍ ນັກວິ້ງເຕັ້ນໂຄສະນາຊວນເຊື່ອຍັງຈະຖືວ່າເປັນລັດບໍ?

ຄວາມເຊື່ອທີ 3.
ພາກເອກະຊົນຖືກຕຳນິວ່າແມ່ນຕົ້ນຕໍຂອງການທັນການສຶກສາເປັນເອກະຊົນ.




ຜູ້ໃຫ້ບໍລິການທີ່ເປັນພາກເອກະຊົນ ສ່ວນໃຫຍ່ແມ່ນໂຮງຮຽນທີ່ມີເຈົ້າຂອງພຽງຄົນດຽວ. ໂຮງຮຽນເອກະຊົນໄດ້ປະກົດຕົວຂຶ້ນມາ ເພື່ອຕອບສະໜອງຄວາມກັງວົນຂອງຜູ້ປົກຄອງຢ່າງແທ້ຈິງກ່ຽວກັບຄຸນນະພາບຂອງໂຮງຮຽນຂອງລັດທີ່ຫຼຸດລົງຍ້ອນຖືກປ່ອຍປະລະເລີຍ. ເມື່ອການຫຼຸດລົງຂອງຄຸນນະພາບໄດ້ກາຍເປັນສິ່ງທີ່ຊັດເຈນ, ຄອບຄົວທີ່ຮັ່ງມີ ແລະ, ໃນສັດສ່ວນທີ່ໜ້ອຍກວ່າ, ຄອບຄົວທີ່ທຸກຍາກ ໄດ້ປະລະການຮຽນໃນໂຮງຮຽນຂອງລັດ ຊຶ່ງສຸດທ້າຍແລ້ວແມ່ນບໍ່ໄດ້ຮັບການສະໜັບສະໜູນ ແລະ ຂາດທຶນຮອນ. ໃນບັນດາຜູ້ນຳທາງການເມືອງຈາກຊົນຊັ້ນສູງຍອມຮັບເພີ່ມຂຶ້ນ ກ່ຽວກັບຄວາມບໍ່ສະເໝີພາບ ແລະ ຫຼຸດຜ່ອນຄຳໝັ້ນສັນຍາຂອງຕົນ ເພື່ອປົກປ້ອງການສຶກສາຂອງລັດ ແລະ ປະຊາຊົນທີ່ດ້ອຍໂອກາດທີ່ໄດ້ຮັບຜົນປະໂຫຍດຈາກສິ່ງດັ່ງກ່າວ.

ຄວາມເຊື່ອທີ 4.
ການສຶກສາຂອງລັດມີຄວາມສະເໝີພາບ.




ຄົວເຮືອນມັກຈະມີຄ່າໃຊ້ຈ່າຍໃນການສຶກສາສູງຈາກຄ່າທຳນຽມທີ່ບໍ່ເປີດເຜີຍ, ລາຍຈ່າຍທີ່ຫຼີກເວັ້ນໄດ້ ແລະ ຄ່າໃຊ້ຈ່າຍເພີ່ມເຕີມເພື່ອຊົດເຊີຍສິ່ງທີ່ໂຮງຮຽນຂອງລັດບໍ່ໄດ້ສະໜອງໃຫ້. ໃນຂະນະທີ່ມັນເປັນເລື່ອງທຳມະດາທີ່ຈະວິພາກວິຈານລະບົບການສຶກສາທີ່ໄດ້ເປີດປະຕູໃຫ້ຜູ້ສະໜອງທີ່ບໍ່ແມ່ນພາກລັດ ຊຶ່ງເຮັດໃຫ້ຄວາມບໍ່ເທົ່າທຽມກັນຍິ່ງຮ້າຍແຮງຂຶ້ນ, ແຕ່ລະບົບການສຶກສາຂອງລັດຈຳນວນຫຼາຍບໍ່ສາມາດປ້ອງກັນການແບ່ງຊັ້ນ ແລະ ການແບ່ງແຍກ.

ຄວາມເຊື່ອທີ 5.
ພໍ່ແມ່ເລືອກໂຮງຮຽນບົນພື້ນຖານຂໍ້ມູນທີ່ຄົບຖ້ວນ-ສົມບູນ ກ່ຽວກັບຄຸນນະພາບ.



ການໃຫ້ສົມມຸດຖານພື້ນຖານຂອງບັນດາຜູ້ສະໜັບສະໜູນໂຮງຮຽນທີ່ບໍ່ແມ່ນຂອງລັດ ແລະ ການເລືອກໂຮງຮຽນ ເຊື່ອວ່າພໍ່ແມ່ກໍປຽບເໝືອນຜູ້ບໍລິໂພກ, ມີການເຂົ້າເຖິງຂໍ້ມູນກ່ຽວກັບໂຮງຮຽນທີ່ດີທີ່ສຸດ ແລະ ນຳໃຊ້ມັນຢ່າງມີປະສິດທິພາບ. ໃນພາກປະຕິບັດຕົວຈິງ, ຂໍ້ມູນກ່ຽວກັບຜົນກະທົບຂອງໂຮງຮຽນແມ່ນມີຄວາມສັບສົນເກີນກວ່າປະເທດສ່ວນໃຫຍ່ຈະຄຸ້ມຄອງ ແລະ ສື່ສານໄດ້. ພໍ່ແມ່ມັກຈະບໍ່ສົນໃຈຂໍ້ມູນດັ່ງກ່າວ ໂດຍເລືອກໂຮງຮຽນທີ່ດຶງດູດພວກເຂົາຍ້ອນເຫດຜົນອື່ນໆເຊັ່ນ: ຄວາມເຊື່ອທາງສາສະໜາ, ຄວາມສະດວກສະບາຍ ແລະ ລັກສະນະທາງດ້ານປະຊາກອນນັກຮຽນ.

ຄວາມເຊື່ອທີ 6.
ການແຂ່ງຂັນນຳໄປສູ່ການປັບປຸງໂຮງຮຽນ.




ຄວາມຮັບຜິດຊອບ ແລະ ການແຂ່ງຂັນທີ່ດີ ກະຕຸ້ນໃຫ້ບາງຄົນເກີດການປັບປຸງ. ໃນຂົງເຂດເສດຖະກິດ, ບໍລິສັດແຂ່ງຂັນເພື່ອຄວາມຢູ່ລອດ, ຍ້ອນວ່າການສ້າງຜົນກຳໄລແມ່ນເຫດຜົນທີ່ພວກເຂົາມີ. ແຕ່ບໍ່ເປັນທີ່ຈະແຈ້ງວ່າການເຄື່ອນໄຫວດັ່ງກ່າວມີຜົນດີຕໍ່ການສຶກສາແນວໃດ. ການສຶກສາວິໄຈ ໄດ້ຊີ້ໃຫ້ເຫັນວ່າການແຂ່ງຂັນທີ່ສົ່ງຜົນກະທົບຕໍ່ທີ່ລະບົບຂອງການສຶກສາແມ່ນມີໜ້ອຍ, ເນື່ອງຈາກຄວາມຊັບຊ້ອນຂອງຫົວຂໍ້ ແລະ ຜົນຂອງການຄົ້ນຄວ້າຍັງບໍ່ສາມາດສະຫຼຸບໄດ້. ຮ້າຍແຮງໄປກວ່ານັ້ນ, ການແຂ່ງຂັນສາມາດເຮັດໃຫ້ໂຮງຮຽນທີ່ບໍ່ແມ່ນຂອງລັດສາມາດຕື່ມເຕັມຄວາມມຸ່ງຫວັງຂອງພໍ່ແມ່ ແຕ່ຂັດກັບການປະຕິບັດການສິດສອນທີ່ດີ.

ຄວາມເຊື່ອທີ 7.
ໂຮງຮຽນເອກະຊົນ ແລະ ມະຫາວິທະຍາໄລເອກະຊົນແມ່ນດີກວ່າ.




ການປຽບທຽບອັດຕາການສອບເສັງຜ່ານໂຮງຮຽນພາກລັດ ແລະ ເອກະຊົນແມ່ນຫຼັກຖານທີ່ວ່ໄປທີ່ໃຊ້ເປັນບ່ອນອີງໃນການຈັດລຳດັບໂຮງຮຽນ ຊຶ່ງສື່ມວນຊົນນຳໃຊ້ເປັນຂໍ້ມູນລາຍງານຂ່າວ ແລະ ພໍ່ແມ່ຜູ້ປົກຄອງກໍໄດ້ອ່ານ. ໃນພາກປະຕິບັດຕົວຈິງ, ການເຂົ້າຮຽນແມ່ນມີຄວາມຫຼາກຫຼາຍ ໂດຍຜູ້ປົກຄອງທີ່ມີຖານະທາງການເງິນດີ, ມີການສຶກສາດີ ແລະ ມີແຮງບັນດານໃຈສູງ ມັກຈະເລືອກໂຮງຮຽນເອກະຊົນ. ໃນທາງກົງກັນຂ້າມ, ໂຮງຮຽນເອກະຊົນອາດຈະຄັດເລືອກເອົານັກຮຽນເພື່ອໃຫ້ຜົນການຮຽນອອກມາດີທີ່ສຸດ. ເມື່ອໃດປັດໄຈດັ່ງກ່າວຖືກຄວບຄຸມແລ້ວ, ຊ່ອງວ່າງລະຫວ່າງໂຮງຮຽນຂອງລັດ ແລະ ເອກະຊົນກໍຈະຫຼຸດລົງ ຫຼື ຖືກລົບລ້າງ.

ຄວາມເຊື່ອທີ 8.
ພາກເອກະຊົນແມ່ນທາງອອກສຳລັບການແກ້ໄຂສິ່ງທ້າທາຍຂອງການອອກໂຮງຮຽນ.



ດ້ວຍຈຳນວນນັກຮຽນຊັ້ນປະຖົມ ແລະ ມັດທະຍົມ ຫຼາຍກວ່າ 350 ລ້ານຄົນ ໄດ້ເຂົ້າຮຽນໃນສະຖາບັນເອກະຊົນ, ຖ້າວ່ານັກຮຽນເຫຼົ່ານັ້ນປ່ຽນໄປຮຽນຢູ່ໃນລະບົບການສຶກສາຂອງໂຮງຮຽນລັດ ມັນຈະກໍ່ໃຫ້ເກີດວິກິດການ. ຢ່າງໃດກໍຕາມ, ໂຮງຮຽນເອກະຊົນກຳລັງຂະຫຍາຍຕົວຢູ່ໃນຕົວເມືອງ, ບ່ອນທີ່ລະດັບການລົງທະບຽນຮຽນແມ່ນໃກ້ຄຽງກັບລະດັບສາກົນ. ສ່ວນຢູ່ໃນເຂດຊົນນະບົດ ແມ່ນບໍ່ມີໂຮງຮຽນເອກະຊົນ. ໃນບັນດາ ປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ, ເດັກນ້ອຍຈາກຄອບຄົວທີ່ຮັ່ງມີທີ່ສຸດ 20% ມີທ່າອ່ຽງທີ່ຈະເຂົ້າໂຮງຮຽນເອກະຊົນ 10 ເທົ່າ ຖ້າທຽບກັບເດັກນ້ອຍທີ່ມາຈາກຄອບຄົວທຸກຍາກທີ່ສຸດ 20%.

ຄວາມເຊື່ອທີ 9.
ພາກເອກະຊົນແມ່ນທາງອອກສຳລັບການແກ້ໄຂຊ່ອງວ່າງດ້ານການເງິນຂອງການສຶກສາ.



ມັກມີຄວາມຫວັງທີ່ວ່າ ພາກເອກະຊົນສາມາດມີບົດບາດສຳຄັນໃນການສະໜອງທຶນໃນການສຶກສາເພື່ອຊ່ວຍໃຫ້ບັນລຸເປົ້າໝາຍ SDG 4. ມາຮອດປັດຈຸບັນຍັງບໍ່ມີຫຼັກຖານໃດໆທີ່ຊີ້ໃຫ້ເຫັນວ່າ ໂຮງຮຽນເອກະຊົນມີຄວາມເຕັມໃຈ ຫຼື ສາມາດເຮັດໄດ້ຄືແນວນັ້ນ. ແຕ່ກໍສາມາດປະກອບສ່ວນໃນດ້ານອື່ນໆ ເຊັ່ນ ການປະກອບສ່ວນຜ່ານການຈ່າຍພາສີ ໂດຍສະເພາະໃນປະເທດທີ່ມີລາຍໄດ້ປານກາງລະດັບຕ່ຳ ແລະ ລາຍໄດ້ຕ່ຳ ຊຶ່ງອັດຕາການລະດົມໄຫຼວຽນຂອງລາຍຮັບພາຍໃນຍັງຕ່ຳ ແລະ ໂອກາດສຳລັບການລົບຫຼີກ ແລະ ການຫຼີກລ່ຽງພາສີແມ່ນມີຫຼາຍ. ພາກເອກະຊົນສາມາດເປັນຜູ້ນຳທີ່ເຂັ້ມແຂງໃນການພັດທະນາລະບົບພາສີທີ່ມີແຮງງານ ແລະ ການບໍລິການດູແລເດັກຕາມກົດລະບຽບຫຼັກການແຫ່ງຊາດ.

ຄວາມເຊື່ອທີ 10.
ກົດລະບຽບສາມາດແກ້ໄຂຄວາມກັງວົນທັງໝົດກ່ຽວກັບການສະໜອງບໍລິການຂອງພາກສ່ວນທີ່ບໍ່ແມ່ນພາກລັດ.



ມີຄວາມເຫັນດີເຫັນພ້ອມວ່າກົດຈະກຳການສຶກສາຂອງພາກສ່ວນທີ່ບໍ່ແມ່ນພາກລັດຄວນໄດ້ຮັບການຄວບຄຸມ. ແຕ່ລະບຽບການດັ່ງກ່າວບໍ່ສາມາດແກ້ໄຂຢ່າງຈິງຈັງກ່ຽວກັບວິທີການສິ່ງເສີມຄວາມເທົ່າທຽມ ແລະ ຄຸນນະພາບການສຶກສາໃນທົ່ວລະບົບ. ມີລັດຖະບານຈຳນວນໜຶ່ງ ທີ່ຕິດຕາມຄົວເຮືອນທີ່ມີຖານະການເງິນດີກວ່າເຂົ້າຮຽນໃນໂຮງຮຽນເອກະຊົນ ຊຶ່ງເປັນການແບ່ງແຍກລະບົບການສຶກສາ ຫຼື ອາດເວົ້າໄດ້ວ່າ ການໃຊ້ຈ່າຍເຂົ້າໃນການສຶກສາຂອງຄົວເຮືອນດັ່ງກ່າວເພີ່ມຄວາມບໍ່ເທົ່າທຽມ. ລັດຖະບານຈຳນວນຫຼາຍອະນຸຍາດໃຫ້ຮັບນັກຮຽນເຂົ້າໂຮງຮຽນຕາມໃຈ. ໂດຍລັດຖະບານຈຳນວນໜຶ່ງ ມີການຄວບຄຸມຄ່າຮຽນເພີ່ມສ່ວນຕົວ ຫຼື ການວິ້ງເຕັ້ນ ຊຶ່ງສ່ວນໃຫຍ່ຍັງບໍ່ໄດ້ຮັບການກຳນົດພາຍໃຕ້ການເປັນຄູ່ຮ່ວມງານ. ມີພຽງລັດຖະບານຈຳນວນໜ້ອຍກວ່ານັ້ນທີ່ມີຊັບພະຍາກອນພຽງພໍໃນການປະຕິບັດ ແລະ ບັງຄັບໃຊ້ລະບຽບການຢ່າງມີປະສິດທິຜົນ.

ປະມານ 25 ປີກ່ອນໜ້ານີ້ໃນປະເທດສະຫະລັດອາເມລິກາ, ໄດ້ເລີ່ມມີຫຼັກຖານເກີດຂຶ້ນກ່ຽວກັບຜົນກະທົບທີ່ບໍ່ເທົ່າທຽມກັນຂອງຮູບແບບອົງການຈັດຕັ້ງໃໝ່ໃນການສຶກສາຂອງລັດໂດຍອີງໃສ່ການເລືອກໂຮງຮຽນ, ຜູ້ຊຽນຜົນການສຶກສາເບື້ອງຕົ້ນໄດ້ສະໜອງຜົນການຄົ້ນພົບຢ່າງເໝາະສົມດ້ວຍສອງຄຳຖາມ: ໃຜເປັນຜູ້ເລືອກ? ໃຜເປັນຜູ້ສູນເສຍ? (Fuller and Elmore, 1996). ເມື່ອມີຫຼັກຖານຫຼາຍຂຶ້ນກ່ຽວກັບກົນໄກ, ຄວາມມີປະສິດທິຜົນ ແລະ ຜົນສະທ້ອນຂອງການເລືອກໂຮງຮຽນໃນທົ່ວໂລກ, ບົດລາຍງານການຕິດຕາມການສຶກສາໂລກ ໄດ້ເອົາຄຳຖາມເຫຼົ່ານີ້ໄປຖາມເປົ້າໝາຍໃນທົ່ວໂລກ. ສີ່ອົງປະກອບທີ່ສຳຄັນຂອງກົດຈະກຳຂອງພາກສ່ວນທີ່ບໍ່ແມ່ນພາກລັດ - ການໃຫ້ບໍລິການ, ລະບຽບການ, ການເງິນ ແລະ ອິດທິພົນ - ໂດຍສະເພາະເລັ່ງໃສ່ການສຶກສາຊັ້ນປະຖົມ ແລະ ມັດທະຍົມ, ຕາມດ້ວຍການວິໄຈລົງເລິກບັນດາລັກສະນະເຫຼົ່ານີ້ໃນລະດັບການສຶກສາອື່ນໆ, ຊຶ່ງມັກຈະໄດ້ຮັບຄວາມສົນໃຈໜ້ອຍເຊັ່ນ: ການສຶກສາກ່ອນໄວຮຽນ, ການສຶກສາຊັ້ນສູງ, ການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ, ແລະ ການສຶກສາຜູ້ໃຫຍ່.

ການໃຫ້ບໍລິການ

ການລົງທະບຽນໃນໂຮງຮຽນທີ່ບໍ່ແມ່ນຂອງລັດ ໄດ້ເພີ່ມຂຶ້ນ. ສັດສ່ວນຂອງສະຖາບັນເອກະຊົນໃນທົ່ວໂລກເພີ່ມຂຶ້ນ 7 ຈຸດສ່ວນຮ້ອຍໃນປະມານ 10 ປີ, ຈາກ 10% ໃນປີ 2002 ເປັນ 17% ໃນປີ 2013 ໃນຊັ້ນປະຖົມສຶກສາແລະ ຈາກ 19% ໃນປີ 2004 ເປັນ 26% ໃນປີ 2014 ໃນຊັ້ນມັດທະຍົມສຶກສາ, ແຕ່ນັບຕັ້ງແຕ່ນັ້ນມາຍັງຄົງຮັກສາລະດັບເດີມ **(ຮູບທີ 2)**.


ຄວາມເປັນເຈົ້າຂອງ, ການຄຸ້ມຄອງບໍລິຫານ ແລະ ການເງິນ ແມ່ນມາດຖານເງື່ອນໄຂທີ່ວ່ໄປໃນການໃຫ້ນິຍາມກ່ຽວກັບພາກສ່ວນທີ່ບໍ່ແມ່ນພາກລັດ. ຄວາມສຳພັນຂອງຜູ້ໃຫ້ບໍລິການກັບລັດ, ແຮງຈູງໃຈ ແລະ ລາຄາສາມາດຖືກນຳໃຊ້ເພື່ອຈັດກຸ່ມພວກເຂົາ. ການວິເຄາະຈາກບົດລາຍງານນີ້ໄດ້ພົບເຫັນວ່າ ໂຮງຮຽນສາສະໜາ ມີຢູ່ໃນ 124 ປະເທດ ຈາກ 196 ປະເທດ. ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ໂຮງຮຽນຊຸມຊົນ ມີຢູ່ໃນ 74 ປະເທດ ຈາກ 196 ປະເທດ, ໂດຍມັກຈະຢູ່ໃນສະພາບເງື່ອນໄຂສຸກເສີນ. ໂຮງຮຽນເພື່ອຫວັງຜົນກຳໄລແມ່ນມີຈຳນວນໜ້ອຍ, ຍົກເວັ້ນໃນບາງປະເທດ, ເຊັ່ນ: ສະຫະລັດອາຣັບເອມິເຣດ. ໂຮງຮຽນເອກະຊົນທີ່ມີລະດັບລາຄາຕ່ຳ ສ່ວນຫຼາຍແມ່ນໂຮງຮຽນທີ່ມີເຈົ້າຂອງພຽງຄົນດຽວໃນປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງໃນອະນຸພາກພື້ນຊາຮາຣາອາຟຣິກາ ແລະ ອາຊີ ແມ່ນເປັນທີ່ຮູ້ຈັກກັນໃນນາມໂຮງຮຽນເອກະຊົນທີ່ມີຄ່າຮຽນຕ່ຳ.

ໂຮງຮຽນຂອງລັດ ແລະ ໂຮງຮຽນທີ່ບໍ່ແມ່ນຂອງລັດ ມີຄວາມແຕກຕ່າງໃນການເຂົ້າຮຽນ ແລະ ຊັບພະຍາກອນຂອງໂຮງຮຽນ. ເດັກນ້ອຍຜູ້ທຸກຍາກຈຳນວນໜ້ອຍມີທາງເລືອກທີ່ຈະເຂົ້າໂຮງຮຽນເອກະຊົນ. ຜູ້ປົກຄອງປະເມີນຄຸນນະພາບຂອງປະສົບການການສຶກສາບົນພື້ນຖານຂະໜາດຂອງຫ້ອງຮຽນ, ຄຸນນະພາບ ແລະ ຄວາມພະຍາຍາມ ຂອງຄູອາຈານ, ການຕອບສະໜອງຂອງໂຮງຮຽນ, ລະບຽບວິໄນ ແລະ ຄວາມປອດໄພ, ພາສາທີ່ໃຊ້ໃນການສິດສອນ, ສາດສະໜາ, ຊົນເຜົ່າ ແລະ ວັດທະນະທຳ. ໃນສະຫະລາຊະອານາຈັກ, ການວິໄຈໃນໂຮງຮຽນໃນປະເທດອັງກິດ ຈຳນວນ 18,000 ໂຮງຮຽນ ໂດຍປຽບທຽບລະຫວ່າງ ໂຮງຮຽນຂອງລັດ ກັບ ໂຮງຮຽນຂອງລັດທີ່ບໍລິຫານຄຸ້ມຄອງໂດຍເອກະຊົນ ພົບຄູທີ່ບໍ່ມີຄຸນວຸດທິທີ່ເໝາະສົມໃນອັດຕາສ່ວນສູງໃນໂຮງຮຽນປະເພດຫຼັງ.

ຮູບທີ 2:

ອັດຕາສ່ວນການລົງທະບຽນຮຽນໃນໂຮງຮຽນເອກະຊົນແມ່ນສູງທີ່ສຸດໃນອາຊີໃຕ້

ເປີເຊັນຂອງການລົງທະບຽນໃນສະຖາບັນເອກະຊົນ, ຈັດຕາມລະດັບການສຶກສາ, 1990-2019



GEM StatLink: https://bit.ly/GEM2021_Summary_fig2

ແຫຼ່ງຂໍ້ມູນ: ຖານຂໍ້ມູນຂອງ UIS.

ໂຮງຮຽນຂອງລັດ ແລະ ໂຮງຮຽນເອກະຊົນ ອາດຈະມີຄວາມແຕກຕ່າງ ກັນໃນດ້ານຊັບພະຍາກອນອື່ນໆ. ໃນອາເມລິກາລາຕິນ, ຈຳນວນຄອມພິວເຕີ ສະເລ່ຍຕໍ່ນັກຮຽນໜຶ່ງຄົນ ໃນໂຮງຮຽນເອກະຊົນແມ່ນສອງເທົ່າທຽບກັບ ໂຮງຮຽນຂອງລັດ.

ຫຼັກຖານສ່ວນໃຫຍ່ສະແດງໃຫ້ເຫັນວ່າຄວາມໄດ້ປຽບຂອງການຮຽນຮູ້ຈາກ ການເຂົ້າໂຮງຮຽນເອກະຊົນແມ່ນມີຈຳກັດ. ຂໍ້ມູນຈາກ 31 ປະເທດທີ່ມີ ລາຍໄດ້ຕ່ຳ ແລະ ປານກາງ ສະແດງໃຫ້ເຫັນວ່າ ອັດຕາຄ່ານິຍົມທີ່ ຄາດຄະເນຈາກການເຂົ້າໂຮງຮຽນເອກະຊົນຫຼຸດລົງຈາກເຄິ່ງໜຶ່ງຫາສອງ ສ່ວນສາມ ຫຼັງຈາກມີການປັບປ່ຽງລະດັບຄວາມຮັ່ງມີຂອງຄົວເຮືອນ. ຍິ່ງໄປ ກວ່ານັ້ນ, ໃນຂະນະທີ່ການໃຫ້ບໍລິການການສຶກສາຫຼັກຂອງໂຮງຮຽນທີ່ ບໍ່ແມ່ນຂອງລັດ ສາມາດອັດຊ່ອງວ່າງໃນໄລຍະສັ້ນ ຫຼື ກາງ, ແຕ່ນັ້ນ ກໍສາມາດນຳໄປສູ່ການແບ່ງແຍກ ແລະ ກໍ່ໃຫ້ເກີດຄວາມບໍ່ເທົ່າທຽມກັນ. ໃນປະເທດສະວີເດນ, 29 ຕິວເມືອງຈາກ 30 ຕິວເມືອງໃຫຍ່ ມີໂຮງຮຽນ ມັດທະຍົມຕອນຕົ້ນພົບການແບ່ງແຍກຢ່າງຈະແຈ້ງ; ໃນ 16 ເມືອງ, ປະກົດການ ການແບ່ງແຍກ ແມ່ນມີສາເຫດເກີດຈາກການເລືອກໂຮງຮຽນ. ໃນຂະນະທີ່ ການແຂ່ງຂັນກັບໂຮງຮຽນທີ່ບໍ່ແມ່ນຂອງລັດ ຈະສາມາດ ສ້າງແຮງກະຕຸ້ນໃຫ້ໂຮງຮຽນຂອງລັດມີການປັບປຸງ, ແຕ່ການມີໂຮງຮຽນ ເອກະຊົນ ຫຼື ໂຮງຮຽນອື່ນໆຢູ່ບໍລິເວນໃກ້ຄຽງ ອາດຈະບໍ່ເປັນແຮງຈູງໃຈ ພຽງພໍສຳລັບເຈົ້າໜ້າທີ່ໂຮງຮຽນຂອງລັດທີ່ຈະລິງມືປະຕິບັດ ຖ້າພວກເຂົາ ບໍ່ມີຊັບພະຍາກອນທາງດ້ານການເງິນ ຫຼື ຄວາມເປັນອິດສະຫຼະໃນການ ຕອບສະໜອງ.

ການສອນເພີ່ມສ່ວນຕົວແມ່ນເກືອບວ່າຈະມີຢູ່ທົ່ວໄປ. ປະກົດການນີ້, ໄດ້ແຜ່ລາມຢູ່ໃນຫຼາຍປະເທດໃນອາຊີຕາເວັນອອກ ແລະ ບັນດາປະເທດ ອາຣັບແລ້ວ ກໍຍັງແຕ່ຂະຫຍາຍຢູ່ໃນເຂດທີ່ບໍ່ເຄີຍມີມາກ່ອນ ເຊັ່ນ: ອະນຸພາກພື້ນຊາຮາຣາອາຟຣິກາ ແລະ ເອີຣັບເໜືອ. ຄວາມຕ້ອງການ ສຳລັບການຮຽນເພີ່ມແມ່ນກ່ຽວຂ້ອງກັບຄວາມຕ້ອງການຂອງນັກຮຽນໃນ ການກະກຽມສຳລັບການສອບເສັງຂັ້ນສູງເພື່ອໃຫ້ໄດ້ປຽບໃນການແຂ່ງຂັນ. ແຕ່ຜົນກະທົບຂອງການສອນພິເສດຕໍ່ຜົນການຮຽນຂອງນັກຮຽນແຕ່ລະຄົນ ແມ່ນປະສົມປະສານກັນ: ການສຶກສາວິໄຈຈຳນວນໜຶ່ງ ໄດ້ກວດພົບ ຜົນກະທົບທາງບວກສຳລັບນັກຮຽນຜູ້ທີ່ຮຽນອ່ອນທີ່ສຸດ, ໃນຂະນະທີ່ ການສຶກສາວິໄຈຈຳນວນໜຶ່ງ ຊີ້ໃຫ້ເຫັນວ່າການສອນພິເສດບໍ່ມີຜົນໃນ ດ້ານບວກຢ່າງເປັນລະບົບຕໍ່ຜົນການຮຽນຂອງນັກຮຽນ. ຍິ່ງໄປກວ່ານັ້ນ, ການສອນພິເສດສາມາດກີດໜ່ວງປະສິດທິພາບຂອງລະບົບການສຶກສາ ໂດຍຈະສົ່ງຜົນກະທົບທີ່ບໍ່ດີຕໍ່ພຶດຕິກຳຂອງນັກຮຽນ ແລະ ຄູ.

ນະໂຍບາຍປຶ້ມແບບຮຽນ, ການຈັດຊື້ ແລະ ການແຈກຢາຍ ມີຄວາມ ແຕກຕ່າງກັນໄປໃນແງ່ຂອງການມີສ່ວນຮ່ວມຂອງລັດ. ໃນບາງປະເທດ, ການຈັດພິມ ແມ່ນຂຶ້ນກັບລັດວິສາຫະກິດຂອງລັດ ແລະ ວິສາຫະກິດທີ່ ລັດສາມາດຄວບຄຸມ; ໃນປະເທດອື່ນໆ, ມີລະບົບປະສົມປະສານຂອງ ການຈັດພິມ ລະຫວ່າງ ລັດ ແລະ ເອກະຊົນ. ຫຼາຍປະເທດທີ່ມີລາຍໄດ້ສູງ, ລວມທັງສະເປນ, ສ່ວນໃຫຍ່ແມ່ນມອບໃຫ້ຜູ້ຜະລິດທີ່ເປັນເອກະຊົນໃນ ການຈັດຫາປຶ້ມແບບຮຽນ, ໂດຍທີ່ລັດຖະບານມີສ່ວນຮ່ວມໃນການອອກ ຄຳແນະນຳ ແລະ ການອະນຸມັດການສະເໜີ. ໃນບັນດາປະເທດທີ່ຫຸກຍາກ ການພົວພັນລະຫວ່າງຜູ້ຈັດພິມໃນລະດັບສາກົນ, ຜູ້ໃຫ້ທຶນ ແລະ ຜົນປະໂຫຍດ ໃນທ້ອງຖິ່ນ ມັກຈະເຮັດໃຫ້ເກີດການຫັນປ່ຽນໄປສູ່ການພິມເຜີຍແຜ່ໃນ ທ້ອງຖິ່ນໃນປະເທດນັ້ນມີຄວາມສັບສົນ. ຕິວຢ່າງ, ອຸດສາຫະກຳປຶ້ມແບບຮຽນ ຂອງກາບອງ ຖືກຄອບງຳໂດຍອີດິເຊບ (Edicef) ຊຶ່ງເປັນໜ່ວຍງານຈັດ ພິມປຶ້ມແບບຮຽນຂອງ ສຳນັກພິມອາເຊັດ ລີເວີ (Hachette Livre) ທີ່ ເຈົ້າຂອງເປັນຄົນຝຣັ່ງ, ໜຶ່ງໃນຜູ້ຈັດພິມລາຍໃຫຍ່ທີ່ສຸດຂອງໂລກ.

ການຜັກດັນສຳລັບການຫັນເອົາເນື້ອໃນເຂົ້າສູ່ລະບົບດິຈິຕອນ ແມ່ນຂຶ້ນກັບ ບໍລິສັດຈັດພິມ ແລະ ບໍລິສັດເຕັກໂນໂລຊີຂະໜາດໃຫຍ່. ເພຍສັນ (Pearson), ຜູ້ນຳຕະຫຼາດໂລກໃນການພິມເຜີຍແຜ່ດ້ານການສຶກສາ, ໄດ້ ປ່ຽນຄຳຂວັນຂອງຕົນຈາກ 'ຜູ້ຈັດພິມປຶ້ມແບບຮຽນ ແລະ ອຸປະກອນການ ສອນອອນລາຍທີ່ໃຫຍ່ທີ່ສຸດຂອງໂລກ' ເປັນ 'ບໍລິສັດການຮຽນຮູ້ດິຈິຕອນ ຂອງໂລກ', ໂດຍເນັ້ນໃສ່ການຮຽນ ແລະ ການປະເມີນອອນລາຍໃຫ້ຫຼາຍຂຶ້ນ. ນອກເໜືອຈາກຜູ້ຈັດພິມປຶ້ມແບບຮຽນລະດັບໂລກ ແລະ ພາກພື້ນແລ້ວ ຍັກໃຫຍ່ດ້ານເຕັກໂນໂລຊີໄດ້ເຂົ້າສູ່ຂະແໜງການສຶກສາອອນລາຍ ມີທ່າອ່ຽງ ເພີ່ມຂຶ້ນໃນໄລຍະການລະບາດຂອງພະຍາດໂຄວິດ-19. ການວິເຄາະ ປະສົບການຈັດຊື້ເຕັກໂນໂລຊີການສຶກສາໃນສະຫະລັດອາເມລິກາພົບວ່າ ໂຮງຮຽນຢູ່ບັນດາເມືອງ ແລະ ໂຮງຮຽນທົ່ວໄປພົບກັບສະພາບທີ່ມີຜູ້ໃຫ້ ບໍລິການດ້ານເຕັກໂນໂລຊີການສຶກສານັບພັນແຫ່ງ ທີ່ມີໃນຕະຫຼາດການ ສະໜອງຜະລິດຕະພັນຈຳນວນຫຼາຍ.

ລັດຖະບານ ກຳລັງເລັ່ງຫາການສະໜັບສະໜູນໃຫ້ແກ່ການບໍລິການ ການສຶກສາເພີ່ມເຕີມຈາກພາຍນອກ. ມີຂໍ້ວິພາກວິຈານກ່ຽວກັບການຊອກຫາ ແຫຼ່ງທຶນເພີ່ມເຕີມຈາກພາຍນອກ ຈະນຳໄປສູ່ການຫັນເປັນເອກະຊົນ ຊຶ່ງ ຈະສ້າງຜົນກະທົບໃນທາງລົບຕໍ່ການບໍລິການຂອງລັດ ແລະ ຄວາມເປັນ ມືອາຊີບ. ບົດວິໄຈຂອງປະເທດອິດສະຕາລີພົບວ່າ ການເພີ່ມຈຳນວນ ສັນຍາຂອງພະນັກງານທຳຄວາມສະອາດເຮັດໃຫ້ຈຳນວນຜູ້ຮັບເໝົາ ດ້ານນີ້ເພີ່ມຂຶ້ນ ຊຶ່ງອາດເຮັດໃຫ້ຄ່າຈ້າງໆນມີອັດຕາຕ່ຳກວ່າ, ຊື່ວໂມງ ທຳຄວາມສະອາດຫຼຸດລົງ ແລະ ມາດຕະຖານດ້ານສຸຂະພາບ ແລະ ຄວາມປອດໄພ ກໍຕ່ຳລົງ.

ການປົກຄອງ ແລະ ລະບຽບການ

ການປົກຄອງຜູ້ໃຫ້ບໍລິການດ້ານການສຶກສາທີ່ບໍ່ແມ່ນພາກລັດມັກຈະຖືກ ແບ່ງແຍກ. ການຄຸ້ມຄອງບໍລິຫານທີ່ດີ ແລະ ລະບຽບການທີ່ມີປະສິດທິຜົນ ເປັນປັດໄຈທີ່ສຳຄັນທີ່ກຳນົດຄວາມສາມາດຂອງລັດຖະບານ ໃນການຈັດ ໃຫ້ມີການສຶກສາທີ່ມີຄຸນນະພາບຢ່າງເທົ່າທຽມກັນ. ໃນ 94 ປະເທດ, ແຜນການ ຫຼື ຍຸດທະສາດຂອງຂະແໜງການຕ່າງໆ ຄາດວ່າຈະມີ ໂຄງການຈາກຜູ້ກ່ຽວຂ້ອງທີ່ບໍ່ແມ່ນພາກລັດ ໃນການສະໜອງ ຫຼື ການໃຫ້ບໍລິການອື່ນໆ. ກະຊວງ ຫຼື ກົມຕ່າງໆ ໄດ້ແບ່ງປັນຄວາມ ຮັບຜິດຊອບໃນບາງປະເທດ. ການແຍກສ່ວນຄຸ້ມຄອງ, ຂາດການປະສານງານ ແລະ ຄວາມຮັບຜິດຊອບທີ່ຊ້ຳຊ້ອນກັນ ຫຼື ຄວາມບໍ່ຈະແຈ້ງ ສາມາດ ສົ່ງຜົນກະທົບທາງລົບຕໍ່ຄວາມສະເໝີພາບ ແລະ ຄຸນນະພາບ, ເຊິ່ງມີ ພຽງແຕ່ 39% ຂອງປະເທດທີ່ມີກົມ, ພະແນກ ຫຼື ໜ່ວຍງານກ່ຽວກັບ ການສຶກສາພາກເອກະຊົນໃນລະດັບຊາດພາຍໃຕ້ຂະແໜງການສຶກສາທີ່ ຮັບຜິດຊອບການສຶກສາຊັ້ນປະຖົມ ແລະ ມັດທະຍົມ. ກະຊວງສຶກສາມີ ຄວາມຮັບຜິດຊອບຕໍ່ການຮັບປະກັນຄຸນນະພາບຜູ້ໃຫ້ບໍລິການທີ່ບໍ່ແມ່ນ ພາກລັດໃນອັດຕາສ່ວນ 83% ໃນບັນດາປະເທດ, ໃນຂະນະທີ່ 13% ມີເຈົ້າໜ້າທີ່ຫຼາຍຝ່າຍ ຮັບຜິດຊອບດ້ານນີ້. ຂະແໜງສາສະໜາ, ແທນທີ່ ຈະເປັນກະຊວງສຶກສາ, ຮັບຜິດຊອບສຳລັບໂຮງຮຽນສາສະໜາໃນ 22% ຂອງປະເທດ - ແລະ 70% ໃນອາຟຣິກາເໜືອ ແລະ ອາຊີຕາເວັນຕົກ.

ກົນໄກການສະໜອງທຶນມີຜົນກະທົບຕໍ່ການປົກຄອງ. ພາກສ່ວນທີ່ບໍ່ແມ່ນ ພາກລັດໄດ້ຮັບການສະໜັບສະໜູນທາງດ້ານການເງິນຈາກລັດຖະບານ ໂດຍກົງ ຫຼື ທາງອ້ອມໃນຮູບແບບຕ່າງໆ: ການຊ່ວຍເຫຼືອນັກຮຽນ (ໃນ 79% ຂອງບັນດາປະເທດ), ເງິນອຸດໜູນສຳລັບພໍ່ແມ່ຜູ້ປົກຄອງ (23%), ການສະໜັບສະໜູນເງິນເດືອນຂອງຄູ ຫຼື ປະສົບການໃນ

ການດຳເນີນການອື່ນໆ (ປະມານ 70%) ແລະ ເງິນກູ້ຢືມ ຫຼື ເປັນຂອງຂວັນ (27%). ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ມີສ່ວນພົວພັນຫຼາຍລະດັບລະຫວ່າງແຕ່ລະພາກສ່ວນ ແລະ ມີນະໂຍບາຍ ແລະ ລະບຽບການທີ່ຫຼາກຫຼາຍ. ການທົບທວນຄືນຜົນຂອງການສຶກສາວິໄຈ ກ່ຽວກັບກົນໄກການສະໜອງທຶນພົບວ່າຜົນກະທົບມັກຈະເປັນທາງລົບ. ຢ່າງໜ້ອຍສອງສ່ວນສາມຂອງການສຶກສາວິໄຈ 98 ຄັ້ງ, ຜົນກະທົບຕໍ່ຄວາມຍຸດຕິທຳຂອງການສະໜອງເງິນອຸດໜູນ, ໂຄງການສ້າງຄູປອງສະໜອງເງິນ (voucher programme) ແລະ ໂຄງການທີ່ລັດໃຫ້ທຶນ (charter programme) ພົບວ່າມີຜົນດ້ານລົບ.

ລະບຽບການຄວນຊ່ວຍປັບປຸງຄຸນນະພາບ ແລະ ຄວາມສະເໝີພາບໃນການສຶກສາ. ເກືອບວ່າທຸກປະເທດໄດ້ມີກົດລະບຽບທີ່ກຳນົດເງື່ອນໄຂສຳລັບການດຳເນີນກິດຈະການຂອງໂຮງຮຽນທີ່ບໍ່ແມ່ນຂອງລັດ, ມີການລົງທະບຽນ ແລະ ຂໍໃບອະນຸຍາດ. ໃນ 80% ຂອງປະເທດ, ມີລະບຽບການກ່ຽວກັບການກຳນົດເງື່ອນໄຂດ້ານສະຖານທີ່, ເຊັ່ນ: ຂະໜາດຂອງຕອນດິນ ຫຼື ການກໍ່ສ້າງ ແລະ ຂະໜາດຕ່ຳສຸດຂອງພື້ນທີ່ຫ້ອງຮຽນ. ໃນລັດຣາຢານາ ຂອງອິນເດຍ, ຜູ້ທີ່ສະເໜີສ້າງຕັ້ງໂຮງຮຽນຕ້ອງມີກຳມະສິດນຳໃຊ້ ຫຼື ມີສັນຍາເຊົ່າຕຶກອາຄານຮຽນຢ່າງໜ້ອຍ 20 ປີຂຶ້ນໄປ. ລັດອື່ນເຊັ່ນ ອຸດທຣາ ປຣາເດດ ໃຊ້ສອງເງື່ອນໄຂສຳລັບການຍອມຮັບໃຫ້ເປັນໂຮງຮຽນຄື: ພື້ນທີ່ຕໍ່ນັກຮຽນຢ່າງໜ້ອຍທີ່ສຸດ ($9m^2$) ແລະ ຂະໜາດຫ້ອງຮຽນຢ່າງໜ້ອຍທີ່ສຸດ ($180m^2$). ກົດລະບຽບຍັງກວມເອົາບັນຫາດ້ານການສະໜອງນ້ຳໃຊ້ ແລະ ສຸຂະອະນາໄມ. ໃນ 47% ຂອງປະເທດທີ່ມີຂໍ້ມູນ, ຕ້ອງໃຫ້ມີຫ້ອງນ້ຳແຍກເພດຢູ່ໃນໂຮງຮຽນທີ່ບໍ່ແມ່ນຂອງລັດ. ໃນ 74% ຂອງບັນດາປະເທດ, ມີການຄວບຄຸມອັດຕາສ່ວນນັກຮຽນຕໍ່ຄູ. ປະມານ 55% ຂອງບັນດາປະເທດມີລະບຽບການກ່ຽວກັບຂັ້ນຕອນການເຂົ້າຮຽນໃນໂຮງຮຽນທີ່ບໍ່ແມ່ນຂອງລັດ, ໃນຂະນະທີ່ 67% ຄຸ້ມຄອງດ້ານຮຽນທີ່ບໍ່ແມ່ນໂຮງຮຽນຂອງລັດໃນການສຶກສາພາກບັງຄັບ. ມີຫຼາຍກວ່າເຄິ່ງໜຶ່ງມີກົດລະບຽບກ່ຽວກັບຫຼັກສູດ. ໃນໄລຍະຫຼາຍກວ່າ 10 ປີທີ່ຜ່ານມາ, 21 ປະເທດໄດ້ນຳໃຊ້ລະບຽບການກ່ຽວກັບການສ້າງຜົນກຳໄລ ແລະ 80 ປະເທດ ໃຫ້ມີໃບຢັ້ງຢືນວິຊາຊີບຂອງຄູ.

ການຈັດຕັ້ງປະຕິບັດທີ່ອ່ອນແອ ແລະ ຂາດຄວາມຮັບຜິດຊອບ ກົດໜ່ວງຄຸນນະພາບການສຶກສາ ແລະ ຄວາມສະເໝີພາບ. ການທີ່ມີກົດລະບຽບບໍ່ໄດ້ໝາຍຄວາມວ່າຜູ້ໃຫ້ບໍລິການທີ່ບໍ່ແມ່ນພາກລັດຈະປະຕິບັດຕາມ. ໃນບາງປະເທດທີ່ມີລາຍໄດ້ຕ່ຳ ແລະ ລາຍໄດ້ປານກາງລະດັບຕ່ຳ, ຂັ້ນຕອນການລົງທະບຽນທີ່ຊັບຊ້ອນ, ລາຄາແພງ ຫຼື ໃຊ້ເວລາດົນໄດ້ສ້າງຄວາມຫຍຸ້ງຍາກໃນການຂໍອະນຸຍາດຢ່າງເປັນທາງການຂອງຜູ້ໃຫ້ບໍລິການ. ລັດຖະບານຂອງລັດລາໂກສຂອງໄນຈີເຣຍໄດ້ອະນຸມັດພຽງແຕ່ 1 ໃນ 4 ຂອງໂຮງຮຽນເອກະຊົນປະມານ 20,000 ແຫ່ງໃນປີ 2021. ຢ່າງໜ້ອຍສະຖິຕິໃນ 27 ປະເທດ ຮັບຮູ້ວ່າມີໂຮງຮຽນທີ່ບໍ່ໄດ້ຈົດທະບຽນ. ປະເທດອຸກັນດາຈັດປະເພດໂຮງຮຽນທີ່ບໍ່ແມ່ນຂອງລັດອອກເປັນ ໂຮງຮຽນທີ່ມີໃບອະນຸຍາດ, ໄດ້ຈົດທະບຽນ ແລະ ບໍ່ໄດ້ຈົດທະບຽນ: 14% ຂອງໂຮງຮຽນປະຖົມ ແລະ 13% ຂອງໂຮງຮຽນມັດທະຍົມແມ່ນບໍ່ໄດ້ຈົດທະບຽນ. ການຂາດການກວດກາສາມາດສົ່ງຜົນໃຫ້ມີການຄັດເລືອກນັກຮຽນທີ່ບໍ່ເປັນທາງການ. ໃນປະເທດໂບໂກຕາ, ໂຄລົມເບຍ, ໂຄງການສຳປະທານຂອງໂຮງຮຽນທີ່ລັດໃຫ້ທຶນ, ສ້າງຕັ້ງຂຶ້ນເພື່ອຮັບໃຊ້ນັກຮຽນທີ່ມີຄວາມສ່ຽງ, ມີນະໂຍບາຍການເຂົ້າຮຽນໂດຍອີງໃສ່ການບໍ່ຈຳແນກ ແລະ ອາໄສຢູ່ໃກ້ຄຽງກັບໂຮງຮຽນ; ໃນຄວາມເປັນຈິງ, ການຄັດເລືອກຮັບນັກຮຽນ ຍັງຄັດເລືອກຍິນພື້ນຖານຂອງຜົນການຮຽນເປັນຫຼັກ.

ຂະບວນການຮັບປະກັນຄຸນນະພາບ ແລະ ມາດຕະຖານແຕກຕ່າງກັນ. ຕົວຈິງແລ້ວ ທຸກໆປະເທດບັງຄັບໃຊ້ມາດຕະຖານໂຮງຮຽນທີ່ບໍ່ແມ່ນຂອງລັດໂດຍຜ່ານການກວດກາໂຮງຮຽນ. ໃນ 81% ຂອງບັນດາປະເທດ, ພັນທະນີ້ກ່ຽວຂ້ອງກັບໂຮງຮຽນທີ່ບໍ່ແມ່ນຂອງລັດທຸກປະເພດ; ມີພຽງແຕ່ 6% ແມ່ນກ່ຽວຂ້ອງກັບໂຮງຮຽນທີ່ລັດໃຫ້ການຊ່ວຍເຫຼືອ. ນອກຈາກນັ້ນ, 81% ຂອງບັນດາປະເທດມີກົດລະບຽບບັງຄັບໃຫ້ມີການເຂົ້າຮ່ວມຂອງໂຮງຮຽນທີ່ບໍ່ແມ່ນຂອງລັດໃນການປະເມີນຂະໜາດໃຫຍ່. ໃນຫຼາຍກວ່າເຄິ່ງໜຶ່ງຂອງບັນດາປະເທດເຫຼົ່ານັ້ນ, ໃຊ້ກົດລະບຽບບັງຄັບດັ່ງກ່າວກັບໂຮງຮຽນທີ່ບໍ່ແມ່ນຂອງລັດທຸກປະເພດ, ໃນຂະນະທີ່ 12% ໃຊ້ກົດລະບຽບບັງຄັບນີ້ພຽງແຕ່ໂຮງຮຽນທີ່ລັດໃຫ້ການຊ່ວຍເຫຼືອ.

ການສ້າງກົນໄກຄວາມຮັບຜິດຊອບ, ການລົງໂທດ ແລະ ກົນໄກການຊິດເຊີຍ ກໍສາມາດຊຸກຍູ້ໃຫ້ເກີດການປະຕິບັດຕາມ. ລັດຖະບານຄວນໃຫ້ຜູ້ໃຫ້ບໍລິການການສຶກສາ ມີຄວາມຮັບຜິດຊອບຕໍ່ການປະຕິບັດຕາມມາດຕະຖານກ່ຽວກັບຄຸນນະພາບ, ຜະລິດຕະພັນ, ຄວາມປອດໄພ ແລະ ການເປີດໃຫ້ມີສ່ວນຮ່ວມຢ່າງທົ່ວເຖິງ. ເກືອບທຸກປະເທດນຳໃຊ້ການລົງໂທດ, ການປິດໂຮງຮຽນ ຫຼື ການຖອນໃບອະນຸຍາດ ຖ້າໂຮງຮຽນທີ່ບໍ່ແມ່ນຂອງລັດບໍ່ປະຕິບັດຕາມກົດລະບຽບ. ປະມານ 54% ຂອງບັນດາປະເທດຍັງກຳນົດໄລຍະເວລາຂອງການປິດດັ່ງກ່າວອີກດ້ວຍ. ປະມານ 90 ປະເທດມີກົດຈັນຍາບັນ ຫຼື ຈັນຍາບັນຄູ ແລະ ບຸກຄະລາກອນຂອງໂຮງຮຽນ ຊຶ່ງມັກຈະກວມເອົາຜູ້ໃຫ້ບໍລິການທີ່ບໍ່ແມ່ນພາກລັດ.

ການສອນພິເສດສ່ວນຕົວແມ່ນບໍ່ຄ່ອຍມີລະບຽບຄຸ້ມຄອງ. ໃນ 48% ຂອງບັນດາປະເທດ ການສອນພິເສດສ່ວນຕົວແມ່ນບໍ່ມີລະບຽບຄຸ້ມຄອງ. ມີພຽງ 53 ປະເທດ ໄດ້ກຳນົດລະບຽບຄວບຄຸມດ້ານການສຶກສາ, ໃນຂະນະທີ່ 19 ປະເທດ ໄດ້ກຳນົດໄວ້ໃນກົດໝາຍການຄ້າເທົ່ານັ້ນ. ໃນ 31% ຂອງປະເທດ, ມີການກຳນົດເງື່ອນໄຂມາດຖານຂອງຄູສອນພິເສດ ໄວ້ໃນລະບຽບການ; 10 ປະເທດ ຫ້າມບໍ່ໃຫ້ຄູອາຈານໄປສອນພິເສດຢ່າງຈະແຈ້ງ. ໃນປະເທດຈີນ, ກົດໝາຍ ສະບັບປີ 2021 ຫ້າມບໍລິສັດທີ່ສອນຫຼັກສູດການຮຽນພາກບັງຄັບບໍ່ໃຫ້ສ້າງຜົນກຳໄລ ແລະ ບໍ່ໃຫ້ມີການເພີ່ມທຶນໂດຍປ່ອງກັນການອອກໃບອະນຸຍາດໃໝ່. ບໍລິສັດຈຳເປັນຕ້ອງກາຍເປັນອົງກອນທີ່ບໍ່ຫວັງຜົນກຳໄລເພື່ອດຳເນີນການຕໍ່ໄປ. ລັດຖະບານໄດ້ສ້າງຕັ້ງພະແນກການສະເພາະສຳລັບການຄຸ້ມຄອງ ແລະ ຕິດຕາມກວດກາ ບໍລິສັດສອນພິເສດແບບສ່ວນຕົວ.

ການເງິນ

ບັນດາລັດຖະບານມີການຕັດສິນໃຈທີ່ແຕກຕ່າງກັນ ໃນການອະນຸມັດການສະໜອງທຶນຮອບ ແລະ ຈະສະໜອງທຶນໃຫ້ແກ່ຜູ້ໃຫ້ບໍລິການທີ່ບໍ່ແມ່ນພາກລັດແນວໃດ. ໃນປະເທດການາດາ, ລັດຖະບານຮອງຮັບລາຍຈ່າຍ 30% ຂອງໂຮງຮຽນເອກະຊົນ ແຕ່ 94% ຂອງໂຮງຮຽນພາກລັດ. ໃນປະເທດເນເທີແລນ, ໂຮງຮຽນທຸກແຫ່ງ ບໍ່ວ່າຈະເປັນໂຮງຮຽນປະເພດໃດກໍຕາມ ແມ່ນໄດ້ຮັບການຊ່ວຍເຫຼືອລ້ຳສຳລັບພະນັກງານ ແລະ ຄ່າໃຊ້ຈ່າຍໃນການດຳເນີນງານ ແລະ ກອງທຶນເພີ່ມເຕີມສຳລັບນັກຮຽນຈາກພື້ນຖານເສດຖະກິດສັງຄົມທີ່ດ້ອຍໂອກາດ ແລະ ມີຄວາມຕ້ອງການດ້ານການສຶກສາພິເສດ. ນັບຕັ້ງແຕ່ປີ 2000, ຫຼາຍປະເທດ, ລວມທັງປະເທດຊິລີ, ຮົງກາຣີ, ສະວີເດນ ແລະ ສະຫະລາຊະອານາຈັກ, ມີປະສົບການກ່ຽວກັບການເພີ່ມຂຶ້ນຂອງສັດສ່ວນການເຂົ້າຮຽນໃນໂຮງຮຽນເອກະຊົນຢູ່ໃນສັງກັດເຊິ່ງໂຮງຮຽນເຫຼົ່ານັ້ນໄດ້ຮັບຢ່າງໜ້ອຍ 50% ຂອງເງິນທຶນຂອງຕົນຈາກລັດຖະບານ.

ລັດຖະບານໃຫ້ທຶນສະໜັບສະໜຸນພຽງແຕ່ບາງລາຍຈ່າຍຂອງໂຮງຮຽນທີ່ບໍ່ແມ່ນຂອງລັດ. ໃນປະເທດບັງກະລາເທດ, ຫຼາຍກວ່າ 16,000 ໂຮງຮຽນມັດທະຍົມທີ່ບໍ່ແມ່ນຂອງລັດ ແລະ 7,600 ໂຮງຮຽນດ້ານສາສະໜາ (madrasas) ຊຶ່ງລວມກັນມີນັກຮຽນລົງທະບຽນເຂົ້າຮຽນ 96% ຂອງນັກຮຽນທັງໝົດ, ໄດ້ຮັບເງິນເດືອນສຳລັບຄູ. ແຕ່ໃນປະເທດໄຮຕິ ຊຶ່ງ 85% ຂອງໂຮງຮຽນປະຖົມສຶກສາບໍ່ແມ່ນໂຮງຮຽນຂອງລັດ, ລັດທະບານ

ບໍ່ໄດ້ຮອງຮັບເງິນເດືອນຂອງຄູ. ໃນປະເທດອິນເດຍ, ພຽງແຕ່ 6% ຂອງ ໂຮງຮຽນປະຖົມ ແລະ ມັດທະຍົມທີ່ໄດ້ຮັບການຊ່ວຍເຫຼືອລ້ຳສຳລັບເງິນ ເດືອນຂອງຄູໃນປີ 2019/20. ໃນປະເທດອິນໂດເນເຊຍ, ໂຮງຮຽນດ້ານ ສາສະໜາ (madrasas) ແລະ ໂຮງຮຽນກິນນອນອິດສະລາມ, ທີ່ເອີ້ນວ່າ ເປຊານເຕຼນ (pesantren) ກວມເອົາ 35% ຂອງໂຮງຮຽນເອກະຊົນ ທັງໝົດບໍ່ໄດ້ຖືກກວມເອົາເຂົ້າໃນບາງກົນໄກການສະໜອງທຶນ.

ລັດຖະບານບາງແຫ່ງສະໜັບສະໜຸນນັກຮຽນທີ່ດ້ອຍໂອກາດເຂົ້າໂຮງຮຽນ ທີ່ບໍ່ແມ່ນຂອງລັດ. ໃນປະເທດອິນເດຍ, ກົດໝາຍວ່າດ້ວຍສິດທິໃນການ ສຶກສາປີ 2009 ໄດ້ກຳນົດໃຫ້ໂຮງຮຽນເອກະຊົນຕ້ອງສະໜອງບ່ອນຮຽນ 25% ຂອງຊັ້ນປະຖົມສຶກສາປີທີ 1 ໃຫ້ແກ່ເດັກນ້ອຍຈາກຄອບຄົວທີ່ມີ ລາຍໄດ້ຕ່ຳ ຊຶ່ງລັດຖະບານໄດ້ຈ່າຍຄືນຄ່າຮຽນຂອງພວກເຂົາ. ໃນທາງ ກົງກັນຂ້າມ, ປະເທດກົດດີວົວ, ບ່ອນທີ່ຈຳນວນນັກຮຽນໃນໂຮງຮຽນມັດທະຍົມ ໄດ້ຮັບເງິນອຸດໜູນເພີ່ມຂຶ້ນສີ່ເທົ່າລະຫວ່າງປີ 2010/11 ແລະ 2017/18, ບໍ່ໄດ້ກຳນົດເປົ້າໝາຍການເຂົ້າຮຽນທີ່ເທົ່າທຽມກັນ.

ຄົວເຮືອນປະເຊີນກັບພາລະອັນໃຫຍ່ຫຼວງ ແລະ ທາງເລືອກທີ່ຫຍຸ້ງຍາກ. ໃນສັດສ່ວນຂອງລວມຍອດຜະລິດຕະພັນພາຍໃນ (GDP), ການໃຊ້ຈ່າຍ ດ້ານການສຶກສາຂອງຄົວເຮືອນເທົ່າກັບ 0.3% ໃນປະເທດທີ່ມີລາຍໄດ້ສູງ ແລະ 1% ໃນປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ. ມັນກວມເອົາ 1.2% ຂອງລວມຍອດຜະລິດຕະພັນພາຍໃນ (GDP) ໃນປະເທດເອວຊາວາດໍ, 1.5% ໃນປະເທດໂມລັອກໂຄ, 1.8% ໃນປະເທດອິນເດຍ ແລະ 2.5% ໃນປະເທດການາ. ໃນຂະນະທີ່ 20% ຂອງຄົວເຮືອນທີ່ທຸກຍາກທີ່ສຸດບໍ່ ໄດ້ໃຊ້ຈ່າຍຫຍັງໃນການສຶກສາຢູ່ໃນປະເທດອາເຈນຕິນາ, ຄອສຕາລິກາ, ຟີລິບປິນ ແລະ ຊຳເບຍ, ຄົວເຮືອນທີ່ຮັ່ງມີທີ່ສຸດ 20% ໃຊ້ຈ່າຍລະຫວ່າງ 0.5% ຫາ 1.7% ຂອງລວມຍອດຜະລິດຕະພັນພາຍໃນ (GDP).

ການສຶກສາຂອງລັດສ່ວນຫຼາຍແລ້ວຍັງມີຄ່າໃຊ້ຈ່າຍ. ປະມານໜຶ່ງສ່ວນສາມ ຂອງລາຍຈ່າຍຄົວເຮືອນໃນປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ ແມ່ນມາຈາກຄອບຄົວທີ່ມີເດັກນ້ອຍຢູ່ໃນໂຮງຮຽນຂອງລັດ. ຄົວເຮືອນທີ່ມີ ເດັກນ້ອຍຢູ່ໃນໂຮງຮຽນເອກະຊົນກວມເອົາປະມານ 80% ຂອງການໃຊ້ຈ່າຍ ໃນປະເທດກົວເຕມາລາ ແລະ ປາກີສະຖານ; ຄົວເຮືອນທີ່ມີເດັກນ້ອຍ ຢູ່ໃນໂຮງຮຽນຂອງລັດ ກວມເອົາປະມານ 60% ຂອງການໃຊ້ຈ່າຍໃນ ປະເທດຈີນ ແລະ ເຄນຢາ. ໃນເຂດຊົນນະບົດຂອງສາທາລະນະລັດ ແທນຊາເນຍ, ຫຼາຍກວ່າສາມສ່ວນສີ່ຂອງຄອບຄົວມີຄຳເຫັນວ່າ ການປະກອບສ່ວນໃຫ້ໂຮງຮຽນປະຖົມຄວນເປັນຂໍ້ບັງຄັບ, ໂດຍຮັບຮູ້ວ່າ ເດັກນ້ອຍອາດຖືກລົງໂທດຖ້າການປະກອບສ່ວນມີຄວາມຊັກຊ້າ. ໃນ ປະເທດອິດສະຕາລີ, ການປະກອບສ່ວນຂອງຜູ້ປົກຄອງໄດ້ເຮັດໃຫ້ຄວາມ ບໍ່ສະເໝີພາບລະຫວ່າງໂຮງຮຽນຮ້າຍແຮງຂຶ້ນ.

ຄ່າໃຊ້ຈ່າຍໃນການຮຽນເພີ່ມສ່ວນຕົວແມ່ນຄ່າໃຊ້ຈ່າຍຕົ້ນຕໍສຳລັບຫຼາຍຄົວ ເຮືອນ. ໃນປະເທດຈີນ, ຄົວເຮືອນໄດ້ຈັດສັນລາຍຈ່າຍດ້ານການສຶກສາ ປະມານໜຶ່ງສ່ວນສາມໃຫ້ເປັນຄ່າຮຽນເພີ່ມນອກໂຮງຮຽນໃນປີ 2017, ນັບແຕ່ 17% ຂອງຄອບຄົວຊົນນະບົດເຖິງ 42% ຂອງຄອບຄົວໃນ ຕົວເມືອງ. ໃນປະເທດເອຢິບ, ໂດຍສັດສ່ວນຂອງລາຍຈ່າຍສະເລ່ຍຕໍ່ຫົວຄົນ, ໃນບັນດານັກຮຽນຊັ້ນມັດທະຍົມສຶກສາສາມັນ ຜູ້ທີ່ມາຈາກຄອບຄົວທີ່ຮັ່ງມີ ທີ່ສຸດໃຊ້ຈ່າຍ 51% ເຂົ້າໃນການຮຽນພິເສດ ແລະ ຜູ້ທີ່ມາຈາກຄອບຄົວ ທຸກຍາກທີ່ສຸດໃຊ້ຈ່າຍ 29%. ໃນປະເທດມຽນມາ, ການຮຽນພິເສດ ກວມເອົາ 42% ຂອງຄ່າໃຊ້ຈ່າຍໃນການສຶກສາທັງໝົດຂອງຄອບຄົວ.

ຜູ້ໃຫ້ບໍລິການເອກະຊົນແມ່ນອີງໃສ່ການໃຊ້ຈ່າຍຂອງຄົວເຮືອນ. ສ່ວນຫຼາຍແລ້ວ ໂຮງຮຽນມັດທະຍົມເອກະຊົນໄດ້ຮັບລາຍຮັບຂອງເຂົາເຈົ້າຢ່າງໜ້ອຍ 80% ຈາກຄ່າທຳນຽມ ໃນ 28 ຈາກ 51 ລະບົບການສຶກສາທີ່ມີລາຍໄດ້ ປານກາງລະດັບສູງ ແລະ ລາຍໄດ້ສູງ. ໃນປະເທດທີ່ມີລາຍໄດ້ຕ່ຳ ແລະ ຕ່ຳກວ່າ, ຜູ້ປົກຄອງທີ່ທຸກຍາກໃຊ້ວິທີຕ່າງໆເພື່ອຮັບມືກັບຄ່າໃຊ້ຈ່າຍໃນ ໂຮງຮຽນເອກະຊົນ. ໃນທົ່ວໂລກ, ໜຶ່ງໃນຫ້າຄອບຄົວທ້ອນເງິນສຳລັບ ຄ່າຮຽນ, ໃນຂະນະທີ່ 8% ຂອງຄອບຄົວຍັງຕ້ອງກູ້ຢືມເງິນ. ໃນປະເທດ ເຮຕີ, ເຄນຢາ, ຟີລິບປິນ ແລະ ອູການດາ, 30% ຂອງຄົວເຮືອນ ຫຼື ຫຼາຍກວ່ານັ້ນ ຢືມເງິນສຳລັບຈ່າຍຄ່າຮຽນ.

ການສະໜອງທຶນໃຫ້ໂຮງຮຽນເອກະຊົນໄດ້ຮັບຜົນກະທົບຢ່າງຫຼວງຫຼາຍ ຈາກພະຍາດໂຄວິດ-19. ໂລກລະບາດໄດ້ສົ່ງຜົນກະທົບຕໍ່ໂຮງຮຽນ ເອກະຊົນ, ໂດຍສະເພາະແມ່ນໂຮງຮຽນທີ່ອາໄສພຽງຄ່າຮຽນ. ປະເທດ ໄນຈີເຣຍ ໄດ້ມີນະໂຍບາຍກະຕຸ້ນເສດຖະກິດດ້ວຍການປ່ອຍເງິນກູ້ ດອກເບ້ຍຕ່ຳເພື່ອຈ່າຍໃຫ້ຄູໂຮງຮຽນເອກະຊົນ. ໃນປະເທດການາ, ໂຮງຮຽນເອກະຊົນໄດ້ຮັບການສະໜັບສະໜຸນເປັນສ່ວນໜຶ່ງຂອງໂຄງການ ທີ່ວໄປສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ. ປະເທດ ຫວຽດນາມ ຂັນຂະຫຍາຍບັນດາໂຄງການໂອນເງິນໃຫ້ບັນດາຄູສອນ ໂຮງຮຽນເອກະຊົນ. ໃນປະເທດປານາມາ, 35% ຫາ 40% ຂອງຜູ້ປົກຄອງ ບໍ່ສາມາດຊຳລະຄ່າທຳນຽມປະຈຳເດືອນ. ໃນປະເທດເອກວາດໍ, ການລົງທະບຽນເຂົ້າໂຮງຮຽນຂອງລັດແມ່ນເພີ່ມຂຶ້ນ 6.5% ຫຼື ນັກຮຽນ 120,000 ຄົນ ທີ່ຍ້າຍມາຈາກໂຮງຮຽນເອກະຊົນ.

ການນຳໃຊ້ເງິນຊ່ວຍເຫຼືອສຳລັບການສະໜອງທຶນໃຫ້ແກ່ການສຶກສາພາກ ເອກະຊົນຖືກຕັ້ງໃຫ້ເປັນຫົວຂໍ້ຖົກຖຽງ. ຈາກເງິນທຶນທີ່ສະໜອງໃຫ້ໃນ ຂົງເຂດການສຶກສາປະມານ 1.2 ຕື້ໂດລາສະຫະລັດ, ອົງການການເງິນສາກົນ (IFC) ໄດ້ຈັດສັນທຶນ 15% ໃຫ້ເຄືອຂ່າຍໂຮງຮຽນພາກເອກະຊົນ, ແຕ່ໄດ້ຢຸດຕິ ການລົງທຶນຂອງຕົນໃຫ້ໂຮງຮຽນເອກະຊົນທີ່ເກັບຄ່າຮຽນໃນປີ 2019, ພາຍຫຼັງການກົດດັນຈາກອົງການຈັດຕັ້ງທາງສັງຄົມ. ໂຄງການກອງທຶນ ຮ່ວມມືສາກົນເພື່ອການສຶກສາ (GPE) ໄດ້ພັດທະນາຍຸດທະສາດຂອງ ພາກເອກະຊົນ ແຕ່ຍ້ອນມີຄວາມເຫັນຕ່າງໆໃນລະຫວ່າງການເຈລະຈາ ໄດ້ນຳໄປສູ່ຂໍ້ຫ້າມການນຳໃຊ້ກອງທຶນຂອງຕົນເພື່ອສະໜັບສະໜຸນການ ສະໜອງການບໍລິການການສຶກສາຫຼັກທີ່ຫວັ່ງຜົນກຳໄລ.

ຜູ້ໃຫ້ທຶນກຳລັງທົດລອງເບິ່ງການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ. ລັດຖະບານທີ່ມີເງິນສິດບໍ່ພຽງພໍໄດ້ລະດົມທຶນຈາກເອກະຊົນ ເພື່ອປັບປຸງ ແລະ ຂະຫຍາຍໂຄງສ້າງພື້ນຖານການສຶກສາຂອງລັດໃນ ປະເທດເອຢິບ, ຟີລິບປິນ ແລະ ອາຟຣິກາໃຕ້. ຜູ້ໃຫ້ທຶນຈຳນວນໜຶ່ງ ໄດ້ພິຈາລະນາການນຳໃຊ້ກອງທຶນຂອງຕົນເປັນຕົວກະຕຸ້ນໃນການລະດົມ ທຶນໂດຍຜ່ານການຮ່ວມມືດັ່ງກ່າວ. ແຕ່ມີຄວາມເປັນຫ່ວງວ່າ ລັດຖະບານ ທີ່ສາມາດອອກແບບ, ປະຕິບັດ ແລະ ຄວບຄຸມການພົວພັນຮ່ວມມື ອາດຈະເຮັດໄດ້ດີກວ່າຫາກນຳໃຊ້ການຈັດຊື້ສາທາລະນະເພື່ອບັນລຸ ຈຸດປະສົງຂອງຕົນ.

ການປະກອບສ່ວນທາງດ້ານການເງິນຜ່ານກົດຈະທຳການກຸສົນ ແລະ ກົດ ຈະທຳຂອງບໍລິສັດໃນການສຶກສາແມ່ນມີໜ້ອຍ. ເຖິງວ່າຈະມີການຮັບຮູ້ວ່າ ຈຳນວນເງິນທີ່ກອງທຶນການກຸສົນໃຊ້ຈ່າຍໃນການສຶກສາມີການຂະຫຍາຍຕົວ, ແຕ່ມັນຍັງບໍ່ທັນພຽງພໍ. ການວິເຄາະຢ່າງເປັນລະບົບຂອງການໃຫ້ທຶນການກຸສົນ ຂອງ 143 ມູນນິທິ ໃນເຄືອຂ່າຍມູນນິທິເຮັດວຽກເພື່ອການພັດທະນາ ຊຶ່ງເປັນໂຄງການລິເລີ່ມຂອງອົງການຮ່ວມມືທາງເສດຖະກິດ ແລະ ການພັດທະນາ (OECD) ຄາດຄະເນວ່າ ຂົງເຂດການສຶກສາໄດ້ຮັບເງິນ 2.1 ຕື້ໂດລາສະຫະລັດ ໃນໄລຍະສາມປີ ແຕ່ປີ 2013 ຫາ 2015 ຊຶ່ງ ເທົ່າກັບ 9% ຂອງການບໍລິຈາກທັງໝົດ.

ອິດທິພົນ

ການໂຕ້ຖຽງກ່ຽວກັບປະສິດທິພາບ, ນະວັດຕະກຳ ແລະ ຄວາມສະເໝີພາບ ແມ່ນເປັນປະເດັນຫຼັກຂອງການໂຕ້ວາທີກ່ຽວກັບບົດບາດຂອງພາກສ່ວນທີ່ບໍ່ແມ່ນພາກລັດໃນການສຶກສາ. ການໂຕ້ວາທີມັກຈະຖືກສື່ໃຫ້ເຫັນເຖິງຄວາມເຄັ່ງຕຶງ ແລະ ຄວາມບໍ່ໄວ້ວາງໃຈເປັນສອງທັດສະນະທີ່ແຕກຕ່າງກັນຫຼາຍຂອງໂລກ. ມີຫຼາຍພາກສ່ວນພະຍາຍາມສົ່ງອິດທິພົນຕໍ່ຄວາມຄິດເຫັນຂອງປະຊາຊົນ ແລະ ນະໂຍບາຍການສຶກສາ ດ້ວຍການສະໜັບສະໜູນ ຫຼື ຄັດຄ້ານ ບົດບາດທີ່ເຂັ້ມແຂງກວ່າຂອງພາກສ່ວນທີ່ບໍ່ແມ່ນພາກລັດ. ເຄື່ອງມືຂອງພວກເຂົາແມ່ນການສົ່ງເສີມ ແລະ ສ້າງກຸ່ມເຄືອຂ່າຍທີ່ມີອິດທິພົນຊັກຈູງ, ການຄົ້ນຄວ້າ ແລະ ການສະໜອງທຶນ ຊຶ່ງມັກຈະກ່ຽວຂ້ອງກັບການຂາຍສິນຄ້າ ແລະ ການບໍລິການ. ໃນການແຂ່ງຂັນດ້ານແນວຄິດການເມືອງ ແລະ ຜົນປະໂຫຍດດ້ານເສດຖະກິດທີ່ພາກສ່ວນກ່ຽວຂ້ອງໃຊ້ວິທີທີ່ຖືກກົດໝາຍ ແລະ ຜິດກົດໝາຍ ເພື່ອເຮັດໃຫ້ທັດສະນະຂອງຕົນຊະນະ, ສິ່ງທ້າທາຍແມ່ນຕ້ອງຮັກສາຄວາມໂປ່ງໃສ ແລະ ຄວາມຊື່ສັດຂອງຂະບວນການສ້າງນະໂຍບາຍການສຶກສາຂອງລັດ ແລະ ຄວບຄຸມບໍ່ໃຫ້ເກີດການສະແຫວງຫາປະໂຫຍດສ່ວນຕົວ.

ໂດຍສ່ວນໃຫຍ່ແລ້ວ ແຕ່ລະພາກສ່ວນບໍ່ໄດ້ຢູ່ໃນຕຳແໜ່ງທີ່ເປັນເອກະພາບກັນກ່ຽວກັບຜູ້ໃຫ້ບໍລິການທີ່ບໍ່ແມ່ນພາກລັດໃນການສຶກສາ. ອົງການຈັດຕັ້ງທາງສັງຄົມມັກຈະວິພາກວິຈານ, ສະແດງຄວາມເປັນຫ່ວງກ່ຽວກັບການຫັນເປັນເອກະຊົນ ແລະ ເປັນສິນຄ້າໃນການບໍລິການດ້ານການສຶກສາ ແລະ ໂຕ້ຖຽງວ່າການສຶກສາຕ້ອງຢູ່ພາຍໃຕ້ການຄວບຄຸມທີ່ເປັນປະຊາທິປະໄຕ. ເຖິງແມ່ນວ່າການເຄື່ອນໄຫວຈະອີງໃສ່ສິດທິ ເຊັ່ນ ແຄມເປນໂລກເພື່ອການສຶກສາ (Global Campaign for Education), ທີມງານຍັງຕ້ອງຖືທັດສະນະທີ່ເໝາະສົມຫຼາຍຂຶ້ນ ຊຶ່ງໄດ້ຮັບອິດທິພົນຈາກຄວາມເປັນຈິງໃນປະເທດຂອງຕົນ. ໃນການສຳຫຼວດທີມງານທີ່ສ້າງບົດລາຍງານສະບັບນີ້ ເຫັນວ່າ 43% ໄດ້ສະແດງທັດສະນະທີ່ບໍ່ເຫັນດີຕໍ່ການຫັນການສຶກສາໃຫ້ເປັນຮູບແບບຊອກຜົນກຳໄລ, ແຕ່ 12% ແມ່ນສະໜັບສະໜູນ; ໃນຮູບແບບການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ, ສັດສ່ວນດັ່ງກ່າວ ແມ່ນ 41% ແລະ 20%, ສ່ວນທີ່ເຫຼືອແມ່ນມີຄວາມຄິດເຫັນແບບປະສົມ.

ເຄືອຂ່າຍສະໜັບສະໜູນທົ່ວໂລກ ໄດ້ວາງຂອບເຂດການເປັນເອກະຊົນ ແລະ ການຄ້າເປັນໄພຂົ່ມຂູ່ຕໍ່ສິດທິໃນການສຶກສາ. ທັດສະນະນີ້ແມ່ນສະແດງອອກໃນຫຼັກການອາບິດຈານ (Abidjan) ກ່ຽວກັບພັນທະສິດທິມະນຸດຂອງລັດທີ່ຈະສະໜອງການສຶກສາຂອງລັດ ແລະ ຄຸ້ມຄອງການມີສ່ວນຮ່ວມຂອງເອກະຊົນໃນການສຶກສາ. ໃນປີ 2018, ພົນລະເມືອງເຄນຢາ 10 ຄົນ ໄດ້ຍື່ນຄຳຮ້ອງຮຽນຕໍ່ອົງການ Compliance Advisor Ombudsman ຊຶ່ງເປັນກົນໄກຄວາມຮັບຜິດຊອບອິດສະຫຼະຂອງອົງການການເງິນສາກົນ (IFC) ໂດຍກ່າວຫາວ່າ ສະຖາບັນ Bridge International Academies ທີ່ເປັນເຄືອຂ່າຍເພື່ອຜົນກຳໄລ ໄດ້ລະເມີດໃນດ້ານຫຼັກສູດ, ສຸຂະພາບ ແລະ ຄວາມປອດໄພ ແລະ ມາດຕະຖານແຮງງານ. ໃນປີ 2020, IFC ຢຸດການລົງທຶນໃນເຄືອຂ່າຍໂຮງຮຽນ ໃນຂະນະທີ່ກຸ່ມການປະເມີນຜົນແບບເປັນອິດສະຫຼະຂອງທະນາຄານໂລກໄດ້ເລີ່ມການປະເມີນຜົນການລົງທຶນໃນໂຮງຮຽນເອກະຊົນ.

ການບໍ່ວິຈານການສະໜັບສະໜູນ ແລະ ການສະໜອງແຫຼ່ງຊັບພະຍາກອນຈາກອົງການຈັດຕັ້ງສາກົນຫຼາຍແຫ່ງຕໍ່ກັບຜູ້ໃຫ້ບໍລິການທີ່ບໍ່ແມ່ນພາກລັດ ສົ່ງອິດທິພົນຕໍ່ວາລະການດຳເນີນງານ. ໃນບັນດາວິທີການທີ່ທະນາຄານໂລກສົ່ງອິດທິພົນໃນການສ້າງນະໂຍບາຍແມ່ນການສ້າງໂມດູນກ່ຽວກັບການມີສ່ວນຮ່ວມຂອງພາກເອກະຊົນ ຊຶ່ງຖືວ່າເປັນໜຶ່ງໃນ 13 ຂົງເຂດນະໂຍບາຍທີ່ສຳຄັນທີ່ສຸດເພື່ອຊຸກຍູ້ການຮຽນຮູ້ພາຍໃຕ້ວິທີທີ່ເອີ້ນວ່າ ວິທີການແບບເປັນລະບົບເພື່ອຜົນການສຶກສາທີ່ດີຂຶ້ນ (Systems Approach for Better Education Results). ວິທີການນີ້ ໄດ້ແນະນຳການຂະຫຍາຍການສະໜອງບໍລິການຂອງເອກະຊົນໃນ 9 ປະເທດ ຈາກທັງໝົດ 10 ປະເທດ. ກອງທຶນເພື່ອຜົນສຳເລັດຂອງການສຶກສາ (Education Outcomes Fund) ໂດຍອົງການອຸຍນິເຊບ ໄດ້ດຶງດູດນັກລົງທຶນໃຫ້ປະຕິບັດໂຄງການດ້ານການເງິນຕາມຜົນໄດ້ຮັບຕົວຈິງ ຊຶ່ງພວກເຂົາຍັງບໍ່ມີປະຫວັດໃນດ້ານການສຶກສາດີປານໃດ. ອົງການຈັດຕັ້ງທີ່ໄດ້ຮັບຜົນປະໂຫຍດຈາກການສະໜັບສະໜູນສາກົນລວມທັງ ອົງການອາກ (Ark) ຊຶ່ງໄດ້ຂະຫຍາຍຈາກການດຳເນີນການໂຮງຮຽນລັດໃນປະເທດອັງກິດໄປເປັນການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອໃນການຈັດຕັ້ງປະຕິບັດຄູ່ຮ່ວມງານພາກລັດ - ເອກະຊົນໃນປະເທດຕ່າງໆ ລວມທັງປະເທດໄລບີເລຍ ແລະ ອາຟຣິກາໃຕ້.

ທັດສະນະຂອງມູນນິທິຕ່າງໆ ມີຄວາມແຕກຕ່າງຕໍ່ກັບບົດບາດທີ່ພວກເຂົາຄິດວ່າ ພາກສ່ວນທີ່ບໍ່ແມ່ນພາກລັດຄວນຈະມີໃນວຽກງານການສຶກສາ. ແຮງຈູງໃຈທີ່ຫຼາກຫຼາຍຂອງບໍລິສັດ ແລະ ອົງການການກຸສົນຕ່າງໆ ເປັນສາເຫດເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັດເປັນກຸ່ມ. ມູນນິທິຍາມໃດກໍຖືກວິພາກວິຈານວ່າພະຍາຍາມທີ່ຈະສົ່ງອິດທິພົນໃນດ້ານນະໂຍບາຍໃນທິດທາງສະເພາະໃດໜຶ່ງ. ມູນນິທິການກຸສົນເລີມານ (Lemann) ໄດ້ຊ່ວຍແນະນຳມາດຕະຖານການຮຽນຮູ້ລະດັບຊາດໃນປະເທດເບຼຊິນ ຫຼັງຈາກຜ່ານການປຶກສາຫາລືຫຼາຍຄັ້ງ.

ສະຫະພັນຄູ ໄດ້ຢູ່ແຖວໜ້າຂອງຄວາມພະຍາຍາມສະໜັບສະໜູນການສຶກສາຂອງລັດ. ສະຫະພັນໄດ້ເປີດເຜີຍປັດໄຈທີ່ກີດໜວງຖ່ວງດຶງການພັດທະນາການສຶກສາຂອງລັດ ທີ່ໄດ້ດຳເນີນຜ່ານການໂຄສະນາຊວນເຊື່ອທາງການຄ້າ ແລະ ການຈ້າງໜ່ວຍງານພາຍນອກມາໃຫ້ບໍລິການດ້ານການສຶກສາ ທີ່ບໍ່ມີການຮັບປະກັນ. ອົງການການສຶກສາສາກົນ (Education International) ຊຶ່ງເປັນອົງການຄຸ້ມຄອງສະຫະພັນຄູ ໄດ້ຕັ້ງຄຳຖາມວ່າ ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນໃນອາເມລິກາລາຕິນ, ເຊັ່ນໃນ ປະເທດຄອສຕາລິກາ ແລະ ສາທາລະນະລັດໂດມິນິກັນ ໄດ້ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ສະຖາບັນການສຶກສາພາກລັດ ທີ່ໃຫ້ບໍລິການໃນລັກສະນະດຽວກັນ ຫຼື ບໍ. ແຕ່ໃນບາງໂອກາດ, ຍຸດທະສາດທີ່ສະຫະພັນນຳໃຊ້ ນຳຍັງຖືກຕຳໜິຕິຕຽນວ່າເປັນການທຳລາຍຄວາມພະຍາຍາມໃນການເພີ່ມທະວີຄວາມເຂັ້ມແຂງຂອງການສຶກສາຂອງພາກລັດ.

ບັນດາທຸລະກິດວາງແນວທາງສົ່ງເສີມການປະຕິຮູບການສຶກສາທາງດ້ານການພັດທະນາຊັບພະຍາກອນມະນຸດ. ສະຫະພັນທຸລະກິດຍີ່ປຸ່ນ ຊຶ່ງຄືກັນກັບອົງກອນດ້ານເສດຖະກິດທີ່ມີອິດທິພົນຊັກຈູງທີ່ສຳຄັນໃນລະດັບໂລກຕ່າງໆ ໄດ້ອອກຂໍ້ສະເໜີແນະຕ່າງໆກ່ຽວກັບນະໂຍບາຍການສຶກສາທີ່ຮຽກຮ້ອງກ່ຽວກັບຄວາມທັນສະໄໝ ແລະ ທັກສະໃນສະຕະວັດທີ 21. ບາງຄົນໄດ້ວິພາກວິຈານຂໍ້ສະເໜີແນະດັ່ງກ່າວວ່າບໍ່ສອດຄ່ອງກັບການຈ້າງງານ ແລະ ການຝຶກອົບຮົມຂອງນາຍຈ້າງໃນພາກປະຕິບັດຕົວຈິງ. ອົງການຮ່ວມມືດ້ານທຸລະກິດທົ່ວໂລກເພື່ອການສຶກສາ (Global Business Coalition for Education) ໄດ້ຮຽກຮ້ອງເຖິງຄວາມເປັນຊຸ່ວຊາມ, ຄວາມເປັນຜູ້ນຳ ແລະ ການນຳໃຊ້ຊັບພະຍາກອນຂອງສະມາຊິກຂອງຕົນ ເພື່ອຍົກສູງຄວາມສຳຄັນທາງດ້ານການເມືອງທີ່ມີຕໍ່ການສຶກສາ. ນັກວິຈານຄັດຄ້ານວ່າການສະໜັບສະໜູນການສຶກສາຂອງລັດທີ່ດີທີ່ສຸດແມ່ນ ການມີສ່ວນຮ່ວມຢ່າງແທ້ຈິງໃນການໂຄສະນາຕ້ານການຫຼີກລ່ຽງ ແລະ ການຫຼົບໜີພາສີ. ນອກນັ້ນ ຍັງໄດ້ສະແດງຄວາມກັງວົນວ່າ ບໍລິສັດເຕັກໂນໂລຊີດ້ານການສຶກສາ ທີ່ນຳໃຊ້ເຕັກນິກການຕະຫຼາດເພື່ອຂາຍຜະລິດຕະພັນໃຫ້ແກ່ລັດຖະບານ ໃນທາງທີ່ບໍ່ສອດຄ່ອງກັບຄວາມຕ້ອງການຂອງປະຊາຊົນ, ເພີ່ມທະວີຄວາມພະຍາຍາມຂອງ

ເຂົ້າເຈົ້າໃນໄລຍະວິກິດການພະຍາດໂຄວິດ-19 ແລະ ການປ່ຽນໄປໃຊ້ວິທີຮຽນຮູ້ທາງໄກ.

ການດູແລ ແລະ ການສຶກສາກ່ອນໄວຮຽນ

ພາກສ່ວນທີ່ບໍ່ແມ່ນພາກລັດ ເປັນຜູ້ຮັບຜິດຊອບການບໍລິການການດູແລ ແລະ ການສຶກສາສຳລັບເດັກນ້ອຍຕ່ຳກວ່າ 3 ປີ. ໃນ 33 ປະເທດທີ່ມີລາຍໄດ້ສູງ, ສະຖາບັນເອກະຊົນກວມເອົາ 57% ຂອງການລົງທະບຽນຮຽນທັງໝົດໃນປີ 2018. ໃນອິດສະຕາລີ, ໄອແລນ, ເນເທີແລນ, ນິວຊີແລນ ແລະ ສະຫະລາຊະອານາຈັກ, ພາກເອກະຊົນທີ່ດຳເນີນທຸລະກິດຫວັງຜົນກຳໄລແມ່ນຜູ້ຮັບຜິດຊອບຕົ້ນຕໍ. ໃນປະເທດເຢຍລະມັນ, 73% ຂອງຈຳນວນເດັກເຂົ້າຮຽນໃນປີ 2017 ແມ່ນຢູ່ສະຖາບັນເອກະຊົນ ມີພຽງແຕ່ 3% ເປັນຜູ້ໃຫ້ບໍລິການທີ່ຫວັງຜົນກຳໄລ. ໃນ 33 ປະເທດທີ່ມີລາຍໄດ້ປານກາງ, ພາກສ່ວນທີ່ບໍ່ແມ່ນພາກລັດກວມເອົາ 46% ຂອງການລົງທະບຽນເຂົ້າຮຽນຂອງເດັກນ້ອຍຕ່ຳກວ່າ 3 ປີ, ນັບຕັ້ງແຕ 0% ໃນສະຫະພັນລັດເຊຍເຖິງ 100% ໃນປະເທດຕຸລະກີ. ມີພຽງແຕ່ສອງສາມປະເທດ, ລວມທັງປະເທດເອວຊາວາດໍ ໄດ້ຫັນໄປສູ່ການສະໜອງບໍລິການຈາກພາກລັດຫຼາຍກວ່າເກົ່າ. ບັນດາປະເທດໃນອາເມລິກາລາຕິນ, ລວມທັງປະເທດໂຄລໍາເບຍ, ກົວເຕມາລາ ແລະ ເປຣູ ໄດ້ສ້າງໂຄງການລ້ຽງເດັກອີງໃສ່ຊຸມຊົນທີ່ເປັນໂຄງການຂະໜາດນ້ອຍ. ໂຮງຮຽນທີ່ຊ່ວຍພູນຈາກນາຍຈ້າງ ທີ່ມັກມີທົ່ວໄປໃນບັນດາປະເທດທີ່ຮັ່ງມີກວ່າ ແມ່ນຄອຍໆປະກົດຂຶ້ນຢູ່ໃນບັນດາປະເທດທີ່ທຸກຍາກກວ່າເທົ່ານັ້ນ. ສິ່ງທ້າທາຍທີ່ສຳຄັນແມ່ນວ່າ ການຈ້າງງານໃນຂະແໜງການທີ່ເປັນທາງການກວມເອົາພຽງແຕ່ 30% ຂອງການຈ້າງງານໃນປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ.

ພາກສ່ວນທີ່ບໍ່ແມ່ນພາກລັດ ມີຄວາມໂດດເດັ່ນໃນຊັ້ນກ່ອນປະຖົມຫຼາຍກວ່າການສຶກສາຂັ້ນພື້ນຖານ. ໃນລະຫວ່າງປີ 2000 ແລະ 2019, ສັດສ່ວນຂອງສະຖາບັນເອກະຊົນໃນການລົງທະບຽນເຂົ້າຮຽນຂອງຊັ້ນກ່ອນປະຖົມສຶກສາໄດ້ເພີ່ມຂຶ້ນຈາກ 28.5% ເປັນ 37%, ເພີ່ມຂຶ້ນເຖິງ 55% ໃນອາຊີຕາເວັນອອກ ແລະ ຕາເວັນອອກສ່ຽງໃຕ້. ຢູ່ປະເທດຈີນ, ພາຍໃຕ້ນະໂຍບາຍ “ຍ່າງສອງຂາ”, ສັດສ່ວນຂອງສະຖາບັນເອກະຊົນເພີ່ມຂຶ້ນຈາກ 31% ເປັນ 57%. ຢູ່ປະເທດຫວຽດນາມ, ສັດສ່ວນການລົງທະບຽນເຂົ້າຮຽນໃນໂຮງຮຽນເອກະຊົນໄດ້ຫຼຸດລົງຈາກ 60% ໃນປີ 2003 ເປັນ 12% ໃນປີ 2014. ສັດສ່ວນມີຂະໜາດນັບຕັ້ງແຕ່ໜ້ອຍກວ່າ 1% ໃນບັນດາປະເທດເອີຣົບຕາເວັນອອກ, ລວມທັງຢູເຄຣນ, ໄປເປັນຫຼາຍກວ່າ 95% ໃນຄາຣິບຽນ (ເຊັ່ນ: ປະເທດແອນຕີກົວ ແລະ ບາບູດາ) ແລະ ປາຊີຟິກ ບ່ອນທີ່ການສະໜອງມີທ່າອ່ຽງທີ່ຈະເປັນການສຶກສາອີງໃສ່ຊຸມຊົນ (ຕົວຢ່າງ: ປະເທດວານູອາຕູ) ຫຼື ຕິດພັນກັບພາລະກິດທາງສາສະໜາ (ຕົວຢ່າງ: ປະເທດຊາມົວ). ອາຟຣິກາເໜືອ ແລະ ອາຊີຕາເວັນຕົກ, ນຳໂດຍປະເທດແອວຈີເຣຍ ແລະ ເອຢິບ, ເປັນພາກພື້ນທີ່ໄດ້ບັນທຶກການຫຼຸດລົງທີ່ຫຼາຍທີ່ສຸດຂອງສັດສ່ວນຂອງສະຖາບັນເອກະຊົນໃນການເຂົ້າຮຽນໃນຊັ້ນກ່ອນປະຖົມສຶກສາ, ຈາກ 53% ໃນປີ 2000 ເປັນ 36% ໃນປີ 2019. ໃນທາງກົງກັນຂ້າມ, ໃນລະຫວ່າງປີ 2000 ຫາປີ 2018, ສັດສ່ວນຂອງສະຖາບັນເອກະຊົນເພີ່ມຂຶ້ນໃນປະເທດອິດສະຣາເອນຈາກ 5% ເປັນ 36% ແລະ ໃນປະເທດຕູເວດຈາກ 26% ເປັນ 45%.

ຄ່າໃຊ້ຈ່າຍຂອງການສະໜອງການສຶກສາໃນຊັ້ນກ່ອນປະຖົມທີ່ບໍ່ແມ່ນຂອງລັດອາດຈະສູງເກີນໄປສຳລັບຜູ້ທຸກຍາກທີ່ສຸດ. ການສຳຫຼວດຄົວເຮືອນສະແດງໃຫ້ເຫັນວ່າ ຂໍ້ມູນບໍລິການໄດ້ປະເມີນສັດສ່ວນການເຂົ້າຮຽນໃນໂຮງຮຽນທີ່ບໍ່ແມ່ນຂອງລັດ ຢູ່ໃນທິກຂອງເຈັດປະເທດໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ຕ່ຳກວ່າຄວາມເປັນຈິງ ໂດຍສະເລ່ຍ 20 ຈຸດສ່ວນຮ້ອຍ. ການສະໜອງບໍລິການທີ່ບໍ່ແມ່ນຂອງລັດໄດ້ແກ້ໄຂຄວາມຕ້ອງການສ່ວນໃຫຍ່ໃນເຂດຕົວເມືອງ ບ່ອນທີ່ການບໍລິການດັ່ງກ່າວມີທ່າອ່ຽງທີ່ຈະມີຢູ່ທົ່ວໄປຫຼາຍກວ່າ ແລະ ຈາກຄອບຄົວຮັ່ງມີ ທີ່ສາມາດຈ່າຍໃຫ້ເຂົ້າເຈົ້າໄດ້. ອີງຕາມສັດສ່ວນຂອງການບໍລິໂພກຂອງຄົວເຮືອນປະຈຳປີ, ການສຶກສາໃນຊັ້ນກ່ອນປະຖົມພາກເອກະຊົນກວມເອົາ 6% ສຳລັບຄົນຮັ່ງມີທີ່ສຸດ ແລະ 17% ສຳລັບຄົນທຸກຍາກທີ່ສຸດໃນປະເທດການາ; ທຽບກັບສັດສ່ວນໃນປະເທດເອທິໂອເປຍແມ່ນ 4% ແລະ 21%.

ການສະໜອງທີ່ບໍ່ແມ່ນພາກລັດແມ່ນສິ່ງທ້າທາຍຕໍ່ການປົກຄອງ ແລະ ການຄຸ້ມຄອງດ້ວຍລະບຽບການ. ຄວາມຫຼາກຫຼາຍຂອງພາກສ່ວນທີ່ບໍ່ແມ່ນພາກລັດເຮັດໃຫ້ການຄຸ້ມຄອງມີຄວາມຊັບຊ້ອນ. ປະເທດກຳປູເຈຍມີຂໍ້ກຳນົດ ແລະ ດຳລັດທີ່ສ້າງຂຶ້ນສະເພາະສຳລັບໂຮງຮຽນອະນຸບານຂອງຊຸມຊົນ. ໃນປະເທດສີລັງກາ ບໍ່ທັນມີຂອບມາດຖານບໍລິຫານຫຼາຍຂະແໜງ ຊຶ່ງໝາຍເຖິງຂອບເຂດວຽກງານຂອງຫຼາຍກະຊວງ (ການສຶກສາ, ສາທາລະນະສຸກ, ແມ່ຍິງ ແລະ ວຽກງານເດັກ) ແລະ ສະພາແຂວງ ທີ່ເຫັນວ່າທັບຊ້ອນກັນ. ໃນລາໂກສຂອງປະເທດໄນຈີເຣຍ ຄວາມເປັນໄປໄດ້ທີ່ກະຊວງສຶກສາຂອງລັດຈະກວດກາໂຮງຮຽນອະນຸບານເອກະຊົນແມ່ນມີໂອກາດສູງກວ່າຖ້າພວກເຂົາຄິດຄ່າທຳນຽມສູງ (68%) ກວ່າທີ່ພວກເຂົາຄິດຄ່າທຳນຽມຕ່ຳ (48%). ໃນໄນໂຣບີ, ປະເທດເຄນຢາ, ໂຮງຮຽນຊຸມຊົນໄດ້ຖືກກວດກາເລື້ອຍໆກວ່າໂຮງຮຽນສາສະໜາ, ໂຮງຮຽນການຄ້າສິນ ຫຼື ໂຮງຮຽນເພື່ອຫວັງຜົນກຳໄລ.

ຄຸນນະພາບຂອງຜູ້ໃຫ້ບໍລິການທີ່ບໍ່ແມ່ນພາກລັດ ມີຄວາມປ່ຽນແປງສູງ. ໃນຫຼາຍປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ, ນັກການສຶກສາພາກເອກະຊົນມີທ່າອ່ຽງທີ່ຈະມີຄວາມພ້ອມ ແລະ ມີໂອກາດພັດທະນາວິຊາຊີບໜ້ອຍກວ່າການສຶກສາພາກລັດ. ມີຄູອະນຸບານໃນພາກສ່ວນເອກະຊົນພຽງ 8% ແຕ່ມີຄູອະນຸບານຂອງລັດ 75% ໄດ້ຜ່ານໂຄງການຝຶກອົບຮົມຂອງການບໍລິການການສຶກສາໃນປະເທດການາ, ເນື່ອງຈາກວ່າບໍ່ມີຂໍ້ກຳນົດຂັ້ນຕ່ຳສຳລັບຄູເອກະຊົນ. ການນຳໃຊ້ພາສາອັງກິດເປັນສື່ກາງຂອງການສອນໃນໂຮງຮຽນອະນຸບານທີ່ບໍ່ແມ່ນຂອງລັດ ເຊັ່ນທີ່ປະເທດເຢຊິນ ເປັນຕົວຢ່າງຂອງຄວາມເຄັ່ງຕຶງລະຫວ່າງຫຼັກສູດທີ່ເໝາະສົມກັບຂັ້ນຂອງການພັດທະນາ ແລະ ຄວາມຮັບຮູ້ທີ່ເປັນທີ່ນິຍົມກ່ຽວກັບຄຸນນະພາບ.

ປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງຈຳນວນໜ້ອຍ ມີລະບຽບຂັ້ນຕອນການຮັບປະກັນຄຸນນະພາບທີ່ນອກເໜືອຈາກຂໍ້ກຳນົດດ້ານບໍລິຫານ. ໃນປະເທດຈາໄມກາ, ພາກສ່ວນສະໜອງການບໍລິການການສຶກສາສ່ວນໃຫຍ່ແມ່ນຂຶ້ນກັບພາກສ່ວນທີ່ບໍ່ແມ່ນພາກລັດ ຊຶ່ງກະຊວງສຶກສາຕ້ອງການຜູ້ກວດກາທີ່ໄດ້ຄຸນນະພາບ; ພະນັກງານຜູ້ອື່ນໆ ເຮັດໜ້າທີ່ໄປຢ້ຽມຢາມສະຖານທີ່ ເພື່ອຕິດຕາມປະຈຳແຕ່ລະເດືອນ ໂດຍອີງໃສ່ 12 ມາດຕະຖານແຫ່ງຊາດທີ່ປະກອບມີການພົວພັນ ແລະ ຄວາມສຳພັນລະຫວ່າງເດັກນ້ອຍ, ຄູສອນ, ຜູ້ປົກຄອງ, ຜູ້ເບິ່ງແຍງ ແລະ ສະມາຊິກຊຸມຊົນ. ປະເທດຟີລິບປິນ ຕິດຕາມກວດກາມາດຕະຖານ ແລະ ຄວາມສາມາດແຫ່ງຊາດ ຜ່ານລາຍການກວດກາການພັດທະນາເດັກນ້ອຍກ່ອນໄວຮຽນຂອງຟີລິບປິນທີ່ລັດຖະບານຮັບຮອງ.

ພາກສ່ວນທີ່ບໍ່ແມ່ນພາກລັດປະດິດສ້າງ ແລະ ສະໜັບສະໜູນການດູແລ ແລະ ການສຶກສາກ່ອນໄວຮຽນ. ໃນໄລຍະຜ່ານມາ, ນັກການສຶກສາທີ່ມີຄວາມຕັ້ງໃຈໄດ້ເຮັດວຽກຢູ່ນອກ ຫຼື ຢູ່ອ້ອມແອ້ມລະບົບການສຶກສາຂອງລັດທີ່ເປັນທາງການ ເພື່ອປັບລຸວິໄສທັດຂອງພວກເຂົາກ່ຽວກັບການຮຽນຮູ້ທີ່ເນັ້ນໃສ່ເດັກເປັນໃຈກາງ. ນັກຄົ້ນຄວ້າວິຊາການໄດ້ໃຫ້ຄວາມສົນໃຈຕໍ່ປະສິດທິຜົນໄລຍະຍາວຂອງໂຄງການການສຶກສາກ່ອນໄວຮຽນ ໂດຍຊຸກຍູ້ໃຫ້ລັດຖະບານຍົກລະດັບໂຄງການດັ່ງກ່າວ. ພາກສ່ວນທີ່ບໍ່ແມ່ນພາກລັດສະໜັບສະໜູນສຳລັບເດັກນ້ອຍທີ່ຖືກປະລະ, ເຮັດວຽກກັບແມ່ຢູ່ໃນເຮືອນຈຳ ໃນປະເທດຊີລີ, ພໍ່ແມ່ຜູ້ອອກແຮງງານທີ່ທຸກຍາກໃນຟີລິບປິນ

ແລະ ເດັກນ້ອຍໃນສະຖານັ້ນລ້ຽງເດັກກຳພ້ຳໃນປະເທດໂຣມາເນຍ. ອົງການຈັດຕັ້ງເຊັ່ນ: ມູນນິທິເບີນາດ ວັນ ເລີຍ (Bernard van Leer), ມູນນິທິ ອາກາຄານ (Aga Khan) ແລະ ມູນນິທິໂອເພັນໂຊໄຊຕີ (Open Society) ໄດ້ລະດົມຂົນຂວາຍການສະໜັບສະໜູນ ແລະ ການສົ່ງເສີມການດູແລ ແລະ ການສຶກສາກ່ອນໄວຮຽນ.

ການສຶກສາຊັ້ນສູງ

ເກືອບທຸກປະເທດຮັບປະກັນການສະໜອງການສຶກສາຊັ້ນສູງທັ້ງພາກສ່ວນຂອງລັດ ແລະ ບໍ່ແມ່ນພາກລັດ. ປະມານ 33% ຂອງນັກສຶກສາລະດັບຊັ້ນສູງໄດ້ລົງທະບຽນເຂົ້າຮຽນຢູ່ໃນສະຖານັ້ນເອກະຊົນໃນທົ່ວໂລກ ຊຶ່ງມີສັດສ່ວນທີ່ສູງທີ່ສຸດຢູ່ໃນອາຊີກາງ, ອາຊີໃຕ້, ອາເມລິກາລາຕິນ ແລະ ຄາຣິບຽນ. ການຂະຫຍາຍຕົວຂອງການສະໜອງທີ່ບໍ່ແມ່ນຂອງລັດຕອບສະໜອງຕໍ່ຄວາມຕ້ອງການທີ່ຫຼາກຫຼາຍ. ສາສະໜາ ຫຼື ສະຖານັ້ນທີ່ເນັ້ນໃສ່ອັດທະນະທຳ ຕິດພັນກັບປະຫວັດສາດ ແລະ ປະເພນີ, ເຕີມເຕັມຄວາມຕ້ອງການດ້ານການສຶກສາທີ່ 'ແຕກຕ່າງ'. ສະຖານັ້ນຊັ້ນນຳເກີດຂຶ້ນເພື່ອຕອບສະໜອງຄວາມຕ້ອງການດ້ານການສຶກສາທີ່ 'ດີກວ່າ' ຊຶ່ງມັກຈະມາຈາກຄົນຮັ່ງມີ. ໃນທີ່ສຸດ, ສະຖານັ້ນທີ່ບໍ່ກ່ຽວຂ້ອງກັບສາສະໜາຂະໜາດນ້ອຍກວ່າໄດ້ເພີ່ມຂຶ້ນຢ່າງໄວວາ ເພື່ອຕອບສະໜອງຄວາມຕ້ອງການສຳລັບການສຶກສາຊັ້ນສູງທີ່ 'ເພີ່ມຂຶ້ນ', ໂດຍສະເພາະໃນສະພາບການທີ່ມີງົບປະມານຂອງລັດຈຳກັດ.

ສະຖານັ້ນທີ່ບໍ່ແມ່ນຂອງລັດມີສ່ວນສະທ້ອນຕໍ່ຄຸນນະພາບຂອງລະບົບ. ສະຖານັ້ນຂະໜາດນ້ອຍທີ່ເກັບຄ່າທຳນຽມມີທາງເລືອກທີ່ຈະເປີດສອນພຽງແຕ່ສອງສາມສາຂາການສຶກສາ ຊຶ່ງສ່ວນຫຼາຍເນັ້ນທາງດ້ານວິຊາຊີບ. ໃນປະເທດອິນເດຍ, ປະມານ 40% ຂອງວິທະຍາໄລເອກະຊົນເປີດສອນພຽງແຕ່ໜຶ່ງສາຂາ ຊຶ່ງແມ່ນການສຶກສາທົ່ວໄປ. ພະນັກງານວິຊາການຂອງສະຖານັ້ນທີ່ບໍ່ແມ່ນຂອງລັດ ໜ້ອຍຫຼາຍທີ່ຈະເຮັດວຽກແບບເຕັມເວລາ - ໜ້ອຍກວ່າ 20% ຢູ່ໃນປະເທດເຊເນການ - ແລະ ສ່ວນຫຼາຍຈະເປັນຄູສອນຈາກສະຖານັ້ນຂອງລັດ ຊຶ່ງມາຮັບຈ້າງສອນເປັນອາຊີບເສີມ. ໃນປະເທດມາເລເຊຍ, ການສອນເປັນອາຊີບເສີມມີເຖິງ 80% ຂອງພະນັກງານຢູ່ໃນສະຖານັ້ນຂະໜາດນ້ອຍກວ່າ ແລະ ໃໝ່ກວ່າທີ່ບໍ່ແມ່ນຂອງລັດ. ທິດທາງການສະເໜີຜົນກຳໄລເຮັດໃຫ້ເກີດສິ່ງທ້າທາຍເພີ່ມດ້ານຄຸນນະພາບ ຊຶ່ງກ່ຽວຂ້ອງກັບການແນໃສ່ຕະຫຼາດ ແລະ ການຈັດລຳດັບຄວາມສຳຄັນຂອງຜົນຕອບແທນຫຼາຍກວ່າການປັບປຸງທາງວິຊາການ.

ການສະໜອງທີ່ບໍ່ແມ່ນຂອງລັດເຮັດໃຫ້ເກີດຄວາມກັງວົນກ່ຽວກັບຄວາມສະເໝີພາບ. ໃນປະເທດທີ່ມີລາຍໄດ້ປານກາງລະດັບສູງ, ອັດຕາສ່ວນທີ່ຫຼາຍຂຶ້ນຂອງພາກສ່ວນທີ່ບໍ່ແມ່ນພາກລັດໃນການລົງທະບຽນເຂົ້າຮຽນທັງໝົດ ແມ່ນກ່ຽວຂ້ອງກັບຄວາມບໍ່ເທົ່າທຽມກັນໃນການເຂົ້າຮຽນ. ໃນປະເທດອູລຸກວາຍ, ຫຼາຍກວ່າ 75% ຂອງຈຳນວນນັກສຶກສາທັງໝົດໃນສະຖານັ້ທີ່ບໍ່ແມ່ນຂອງລັດ ແມ່ນມາຈາກກຸ່ມຄົນທີ່ຮັ່ງມີທີ່ສຸດ, ເມື່ອທຽບກັບສະຖານັ້ນຂອງລັດແມ່ນໜ້ອຍກວ່າ 40%. ຢ່າງໃດກໍຕາມ, ສະຖານັ້ນທີ່ບໍ່ແມ່ນຂອງລັດສາມາດຊ່ວຍສະໜອງການເຂົ້າເຖິງກຸ່ມທີ່ມີຄວາມສ່ຽງຕໍ່ການຖືກກີດກັ້ນ. ໃນປະເທດຊາອຸດີອາຣາເບຍ, ໄດ້ມີການຂະຫຍາຍການເຂົ້າເຖິງສຳລັບແມ່ຍິງໂດຍມີຫຼັກສູດສຳລັບແມ່ຍິງໂດຍສະເພາະ, ໃນຂະນະທີ່ຢູ່ໃນມາເລເຊຍ ໄດ້ສະໜອງການເຂົ້າເຖິງຂອງຊົນເຜົ່າຈີນ ແລະ ອິນເດຍ ທີ່ຖືກຫ້າມຈາກສະຖານັ້ນຂອງລັດຕາມໂກຕ້າຂອງຊົນເຜົ່າ. ເຖິງຢ່າງໃດກໍຕາມ, ການສະໜອງທີ່ແບ່ງແຍກດັ່ງກ່າວສາມາດສ້າງຄວາມສ່ຽງຕໍ່ຄວາມສາມັກຄີຂອງສັງຄົມ.

ຂອບນິຕິກຳມີທ່າອ່ຽງທີ່ຈະສະທ້ອນເຖິງທັດສະນະຂອງລັດຖະບານຕໍ່ພາກສ່ວນທີ່ບໍ່ແມ່ນພາກລັດ. ກົດລະບຽບທີ່ເຂັ້ມງວດກ່ຽວຂ້ອງກັບຄວາມບໍ່ໄວ້ວາງໃຈ, ໃນຂະນະທີ່ທັດສະນະທີ່ເອື້ອອຳນວຍຫຼາຍກວ່າຕໍ່ພາກສ່ວນທີ່ບໍ່ແມ່ນພາກລັດ ສາມາດສ້າງຄວາມສະດວກໃນການຮັບຮອງ, ການຕິດຕາມ ແລະ ຈັບກຳທັ້ງການສະໜອງທຶນຂອງລັດ. ໃນບາງປະເທດ, ສະຖານັ້ນທີ່ສະແຫວງຜົນກຳໄລຈະຢູ່ພາຍໃຕ້ຄຳແນະນຳທີ່ເຂັ້ມງວດກວ່າ ຊຶ່ງສະຖານັ້ນເຫຼົ່ານີ້ອາດຜິດກົດໝາຍທັງໝົດ ເຊັ່ນດຽວກັບໃນປະເທດ ອາເຈນຕິນາ ແລະ ຊີລີ ຫຼື ປະເຊີນກັບຂໍ້ຈຳກັດກ່ຽວກັບການຈັດສັນງົບປະມານ ເຊັ່ນ ຜົນຕອບແທນຈາກການລົງທຶນ 10% ໃນຟີລິບປິນ. ໂດຍລວມແລ້ວ, ກົນໄກການຮັບປະກັນຄຸນນະພາບ ໄດ້ຊ່ວຍໃຫ້ບັນດາປະເທດປິດສະຖານັ້ນທີ່ມີສ່ວນຮ່ວມໃນການດຳເນີນທຸລະກິດທີ່ຫຼອກລວງ ຫຼື ການໃຫ້ບໍລິການທີ່ມີຄຸນນະພາບຕ່ຳ. ໃນປີ 2017, ຄະນະກຳມະການການສຶກສາຊັ້ນສູງຂອງປາກິສະຖານ ໄດ້ລະບຸສະຖານັ້ນທີ່ຜິດກົດໝາຍຈຳນວນ 153 ແຫ່ງ ທີ່ດຳເນີນການຢູ່ໃນປະເທດ. ແຕ່ຊັບພະຍາກອນໃນການຮັບຮອງ ແລະ ຕິດຕາມກວດກາບັນດາສະຖານັ້ນທີ່ບໍ່ແມ່ນຂອງລັດແມ່ນຍັງຂາດເຂີນ.

ລະບຽບການສົ່ງເສີມຄວາມສະເໝີພາບໂດຍທົ່ວໄປຈະມີໜ້ອຍກວ່າກົດລະບຽບກ່ຽວກັບການບໍລິຫານ. ໂກຕ້າ ຫຼື ເງື່ອນໄຂພິເສດໃນການຮັບເຂົ້າຮຽນທີ່ອອກແບບມາ ເພື່ອປັບປຸງການເຂົ້າເຖິງການສຶກສາຊັ້ນສູງຂອງກຸ່ມຜູ້ດ້ອຍໂອກາດ ບໍ່ໄດ້ຂັຍຂະຫຍາຍໄປສູ່ຜູ້ໃຫ້ບໍລິການທີ່ບໍ່ແມ່ນຂອງລັດສະເໝີໄປ. ຄືກັບໃນປະເທດອິນເດຍ, ເມື່ອສະໜັກ ແມ່ນມັກຈະມີພຽງແຕ່ສະຖານັ້ນທີ່ໄດ້ຮັບທຶນຂອງລັດເທົ່ານັ້ນ. ຂໍ້ຍົກເວັ້ນລວມມີການບັງຄັບໃຫ້ສະຖານັ້ນທີ່ບໍ່ແມ່ນຂອງລັດໃຫ້ການຊ່ວຍເຫຼືອລ້ຳ ຫຼື ທຶນການສຶກສາໃຫ້ແກ່ນັກຮຽນບາງຄົນ, ເຊັ່ນດຽວກັບປະເທດໂບລິເວຍ ແລະ ເອກວາດໍ, ແລະ ການເກັບຄ່າຮຽນກັບນັກສຶກສາ ກໍເຊັ່ນດຽວກັບໃນປະເທດອາເຊີໄບຈານ ແລະ ເຄນຢາ.

ຮູບແບບການສະໜອງທຶນຂອງສະຖານັ້ນທີ່ບໍ່ແມ່ນຂອງລັດ ມີຜົນກະທົບດ້ານຄຸນນະພາບ ແລະ ຄວາມສະເໝີພາບຢ່າງຫຼວງຫຼາຍ. ສະຖານັ້ນທີ່ບໍ່ແມ່ນຂອງລັດສ່ວນໃຫຍ່ ໂດຍສະເພາະແມ່ນສະຖານັ້ນທີ່ມີຂະໜາດນ້ອຍກວ່າ ແລະ ບໍ່ແມ່ນກຸ່ມຊົນຊັ້ນສູງ ແມ່ນອີງໃສ່ຄ່າຮຽນທີ່ໜັກໜ່ວງສຳລັບການສະໜອງທຶນຂອງພວກເຂົາ. ແຕ່ລັດຖະບານຍັງຊ່ວຍດ້ານການເງິນໃຫ້ສະຖານັ້ນທີ່ບໍ່ແມ່ນຂອງລັດໃນຫຼາຍປະເທດ. ໃນປະເທດອິນໂດເນເຊຍ ພະນັກງານວິຊາການບາງຄົນໄດ້ຮັບການອຸດໜູນຄືດຽວກັບພະນັກງານລັດຖະກອນ ແລະ ໃນປະເທດໄທ ມີກອງທຶນພິເສດໃຫ້ແກ່ສະຖານັ້ນທີ່ບໍ່ແມ່ນຂອງລັດ. ການເຂົ້າເຖິງກອງທຶນຂອງລັດສາມາດຊ່ວຍປັບປຸງບັນດາສະຖານັ້ນທີ່ບໍ່ແມ່ນຂອງລັດໂດຍການຊຸກຍູ້ການລິເລີ່ມການຄົ້ນຄວ້າ ຫຼື ຖ້າມີເງື່ອນໄຂ, ຜັກດັນສະຖານັ້ນໃຫ້ມີຄຸນນະພາບ ຫຼື ມາດຕະຖານແຫ່ງຄວາມສະເໝີພາບ.

ທຶນການສຶກສາຊັ້ນສູງໄດ້ກວມເອົາອັດຕາສ່ວນຫຼາຍຂຶ້ນຢູ່ໃນຄ່າໃຊ້ຈ່າຍຂອງຄົວເຮືອນ ເຮັດໃຫ້ຄວາມຈຳເປັນໃນການສະໜັບສະໜູນຈາກທັ້ງພາກລັດ ແລະ ບໍ່ແມ່ນພາກລັດເພີ່ມຂຶ້ນ. ລັດຖະບານອາດຈະສະໜອງເງິນອຸດໜູນຄ່າຮຽນທີ່ໄດ້ວາງເປົ້າໝາຍໄວ້ໃຫ້ແກ່ສະຖານັ້ນທີ່ບໍ່ແມ່ນຂອງລັດ ເຊັ່ນດຽວກັບໃນປະເທດເຢຊິນ ແລະ ຊີລີ ຫຼື ອຸດໜູນໂຄງການເງິນກູ້ນັກສຶກສາ, ທີ່ມີຢູ່ໃນຫຼາຍກວ່າ 70 ປະເທດໃຫ້ແກ່ນັກສຶກສາຊັ້ນສູງທັງໝົດ. ພາກສ່ວນທີ່ບໍ່ແມ່ນພາກລັດຊ່ວຍຄົວເຮືອນຮັບຜິດຊອບຄ່າໃຊ້ຈ່າຍໂດຍຜ່ານທຶນການສຶກສາທີ່ຈ່າຍໃຫ້ໂດຍບໍລິສັດ, ມູນນິທິ, ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ ແລະ ຜູ້ໃຈບຸນ ເຊັ່ນດຽວກັນກັບການສະໜອງເງິນກູ້ຂອງນັກຮຽນ ຫຼື ຂໍ້ຕົກລົງກ່ຽວກັບການແບ່ງປັນລາຍໄດ້.

ພາກສ່ວນທີ່ບໍ່ແມ່ນພາກລັດຊ່ວຍສະຖາບັນການເງິນນອກເໜືອຈາກຄ່າຮຽນ. ກົນໄກການຮ່ວມມືລວມເຖິງການເຄື່ອນໄຫວຕະຫຼາດເຊັ່ນ: ການໃຫ້ເຊົ່າທີ່ດິນ, ຜະລິດຕະພັນ ແລະ ການບໍລິການທີ່ເປັນການຄ້າ, ແລະ ການເພີ່ມທຶນໂດຍຜ່ານການກູ້ຢືມເງິນ ແລະ ພັນທະບັດ. ຮອດກາງປີ 2020, ການອອກພັນທະບັດໂດຍມະຫາວິທະຍາໄລຈາກທົ່ວໂລກບັນລຸໄດ້ເຖິງ 11.4 ຕື້ໂດລາສະຫະລັດ, ຫຼາຍກວ່າສອງເທົ່າຂອງປີ 2019. ຜູ້ໃຫ້ທຶນ ແລະ ຜູ້ໃຈບຸນຍັງເປັນຕົວແທນຂອງແຫຼ່ງລາຍຮັບທີ່ບໍ່ເສຍຄ່າທຳນຽມທີ່ສຳຄັນສຳລັບສະຖາບັນຕ່າງໆ ຊຶ່ງກວມເອົາຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນທີ່ລະດົມທຶນໄດ້ທັງໝົດ ໂດຍສະຖາບັນຊັ້ນສູງໃນສະຫະລັດໃນປີ 2020.

ພາກສ່ວນທີ່ບໍ່ແມ່ນພາກລັດ ມີອິດທິພົນຕໍ່ການສຶກສາຊັ້ນສູງໂດຍຜ່ານຊ່ອງທາງຕ່າງໆ. ກົນໄກບາງອັນ ເຊັ່ນ: ຄູ່ຮ່ວມມືໃນການຄົ້ນຄວ້າ, ການໂນ້ມນ້າວຊັກຈູງ, ການປະຕິຮູບດ້ານການປົກຄອງໃນແບບທຸລະກິດ ແລະ ການໂຄສະນາປະຊາສຳພັນ ສາມາດຊ່ວຍເພີ່ມຄວາມໂປ່ງໃສ, ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການ. ກົນໄກອື່ນໆ ເຊັ່ນ: ການບໍລິຈາກຂະໜາດໃຫຍ່ຈາກສະຖາບັນເພື່ອຫວັງຜົນກຳໄລໃຫ້ແກ່ນັກການເມືອງ (ເຊັ່ນ: ໃນປະເທດເບລຊິ ແລະ ສະຫະລັດອາເມລິກາ) ອາດຈະນຳໄປສູ່ອິດທິພົນທີ່ບໍ່ເໝາະສົມຕໍ່ການກຳນົດນະໂຍບາຍ ແລະ ທຳລາຍຄວາມເປັນເອກະລາດຂອງສະຖາບັນ.

ການສຶກສາດ້ານເຕັກນິກວິຊາຊີບ, ອາຊີວະສຶກສາ ແລະ ການສຶກສາຜູ້ໃຫຍ່

ພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ໄດ້ຊ່ວຍຂະຫຍາຍການສະໜອງການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ. ໃນທົ່ວໂລກ, 38.5% ຂອງນັກຮຽນຫຼັງຈົບການສຶກສາຊັ້ນມັດທະຍົມຕອນປາຍ ໄດ້ເລືອກເຂົ້າຮຽນທີ່ສະຖາບັນເອກະຊົນໃນປີ 2019. ໃນປະເທດ OECD, ນັກສຶກສາ 44% ໃນໂຄງການອາຊີວະສຶກສາຊັ້ນສູງໄລຍະສັ້ນ ແມ່ນໄດ້ລົງທະບຽນຮຽນຢູ່ໃນສະຖາບັນເອກະຊົນ. ການຮ່ວມມືກັບພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ໄດ້ແນໃສ່ເຮັດໃຫ້ລະບົບການສຶກສາດ້ານເຕັກນິກວິຊາຊີບ ແລະ ອະຊີວະສຶກສາ ຕອບສະໜອງຕໍ່ຄວາມຕ້ອງການຂອງຕະຫຼາດແຮງງານໄດ້ດີຂຶ້ນ ແລະ ເພີ່ມທະວີຄວາມອາດສາມາດ ແລະ ຊັບພະຍາກອນຂອງຕົນ, ລວມເຖິງໃນປະເທດທີ່ມີລະບົບການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາຂອງລັດແບບລວມສູນ. ໃນສະພາບການອື່ນ, ພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ໄດ້ເພີ່ມທະວີການສະໜອງລະດັບອາຊີວະສຶກສາ ໂດຍຜ່ານການຈັດຊື້ຈັດຈ້າງແບບດັ້ງເດີມ, ການລິເລີ່ມການຝຶກອົບຮົມແບບເອກະລາດ ແລະ ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ, ສ່ວນໃຫຍ່ແມ່ນປະສານງານໂດຍລັດ. ໃນປະເທດທີ່ທຸກຍາກ, ພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ສະໜອງການເຂົ້າເຖິງການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ ທີ່ມີຄວາມສະເໝີພາບຫຼາຍຂຶ້ນ ສຳລັບກຸ່ມຜູ້ດ້ອຍໂອກາດ.

ນາຍຈ້າງ ມີສ່ວນຮ່ວມໃນການຝຶກງານ ໃນລະບົບໂຮງຮຽນ ແລະ ຕາມອັດທະຍາໄສ. ການສຳຫຼວດຈຸດປ່ຽນຜ່ານຈາກໂຮງຮຽນໄປສູ່ວຽກເຮັດງານທຳ ຂອງອົງການແຮງງານສາກົນ (The International Labour Organization School-to-Work Transition Survey) ພົບວ່າໜ້ອຍກວ່າ 1 ໃນ 5 ຂອງຜູ້ເຂົ້າຮ່ວມທີ່ມີອາຍຸ 15 ຫາ 35 ປີ ໃນ 33 ປະເທດ ໄດ້ຝຶກງານຢ່າງໜ້ອຍໜຶ່ງຄັ້ງ ຊຶ່ງເປັນສ່ວນໜຶ່ງຂອງການສຶກສາຂອງເຂົາເຈົ້າ. ການມີສ່ວນຮ່ວມໜ້ອຍ ໃນບັນດາປະເທດທີ່ມີລາຍໄດ້ຕ່ຳ ອາດຈະເຊື່ອມໂຍງກັບຄວາມບໍ່ເປັນທາງການຂອງຕະຫຼາດແຮງງານ ແລະ ລະບົບການຝຶກອົບຮົມ. ຖ້າບໍ່ໄດ້ຮັບການຄວບຄຸມ ແລະ ຍອມຮັບຢ່າງພຽງພໍ, ສິ່ງຈູງໃຈທີ່ເຊື່ອມໂຍງກັບການຝຶກງານ ສາມາດຖືກທຸດຜ່ອນລົງ. ອົງການຈັດຕັ້ງທີ່ເປັນສື່ກາງ ສາມາດອຳນວຍຄວາມສະດວກໃນການເຈລະຈາກັບນາຍຈ້າງ, ປັບປຸງການຮຽນຮູ້ ແລະ ຮັບປະກັນຄວາມເໝາະສົມ ໂດຍສະເພາະໃນປະເທດທີ່ບໍ່ມີປະເພນີການຝຶກງານທີ່ເຂັ້ມແຂງ.

ການພັດທະນາທັກສະຢ່າງຕໍ່ເນື່ອງ ສ່ວນໃຫຍ່ສະໜອງໃຫ້ໂດຍນາຍຈ້າງເອກະຊົນ. ໃນຂະນະທີ່ ການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ ໃນລະບົບໂຮງຮຽນສ່ວນໃຫຍ່ ແນໃສ່ອາຊີບທີ່ມີຄວາມສ່ຽງທີ່ຈະຖືກດຳເນີນດ້ວຍລະບົບອັດຕະໂນມັດ, ການປັບປຸງທັກສະ ແລະ ການຍົກລະດັບທັກສະເກີດຂຶ້ນຢູ່ນອກການສຶກສາແບບດັ້ງເດີມ. ການຝຶກອົບຮົມນອກໂຮງຮຽນ ແລະ ສະໜັບສະໜຸນໂດຍນາຍຈ້າງ ມີຢູ່ທົ່ວໄປ ຊຶ່ງສິ່ງທີ່ຈະສະເໜີນັ້ນ ກ່ຽວຂ້ອງໂດຍກົງກັບຂະໜາດຂອງບໍລິສັດ. ຜົນໄດ້ຮັບ ຈາກໂຄງການການວັດແທກທັກສະ STEP ຂອງທະນາຄານໂລກ (World Bank's STEP Skills Measurement Program) ສະແດງໃຫ້ເຫັນວ່າ ນາຍຈ້າງມັກການຝຶກອົບຮົມໃນລະຫວ່າງການເຮັດວຽກ (ລະຫວ່າງປະຈຳການ) ຫຼາຍກວ່າຫຼັກສູດພາຍນອກທີ່ສະໜອງໃຫ້ໂດຍຜູ້ໃຫ້ບໍລິການຂອງລັດ ຫຼື ເອກະຊົນໃນລະບົບໂຮງຮຽນ.

ການຄຸ້ມຄອງແບບມີສ່ວນຮ່ວມ ໃນລະບົບການພັດທະນາທັກສະ ແມ່ນມີຄວາມທ້າທາຍ. ລະບົບການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ ຍັງຄົງເປັນລະບົບລວມສູນຫຼາຍ. ຂອບຄຸມວຸດທິແຫ່ງຊາດຫຼາຍກວ່າ 150 ປະເທດ ແນໃສ່ເຮັດໃຫ້ການຄຸ້ມຄອງການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ ມີສ່ວນຮ່ວມ ແລະ ເໝາະສົມກັບຈຸດປະສົງຫຼາຍຂຶ້ນ, ເຖິງແມ່ນວ່າການປັບປຸງຄວາມໂປ່ງໃສ ແລະ ຄວາມສອດຄ່ອງຂອງທັກສະ ຍັງເປັນບູລິມະສິດ ສຳລັບໜ່ວຍງານຂອງລັດ. ປະສິດທິພາບຂອງລະບົບການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ ຖືກຂັດຂວາງໂດຍກົນໄກການປະກັນຄຸນນະພາບບາງສ່ວນທີ່ໄດ້ປະຕິບັດໄປແລ້ວ. ການພິວພັນລະຫວ່າງຂະແໜງການເອກະຊົນ ແລະ ຂະແໜງການສຶກສາ ມີທ່າອ່ຽງເນັ້ນໃສ່ການກຳນົດທັກສະຫຼາຍກວ່າການພັດທະນາຫຼັກສູດ. ລະບົບທັກສະທີ່ຮັບມືກັບການປ່ຽນແປງທາງດ້ານເສດຖະກິດໄດ້ດີ ແມ່ນອີງໃສ່ວິທີການສາມຝ່າຍ, ໂດຍການມີສ່ວນຮ່ວມຂອງພາກສ່ວນສັງຄົມ ແລະ ເສດຖະກິດ. ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ໃນການໃຫ້ຄວາມຮູ້ ຜ່ານສະພາທັກສະຂະແໜງການ ໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອປັບປຸງຄວາມເຂົ້າໃຈຕໍ່ຄວາມຕ້ອງການຂອງຕະຫຼາດແຮງງານ.

ລະບົບການພັດທະນາທັກສະ ແມ່ນອີງໃສ່ງົບປະມານຂອງລັດ ແລະ ບໍ່ແມ່ນຂອງລັດ. ນອກຈາການຈັດສັນຂອງລັດຖະບານໂດຍກົງແລ້ວ, ລະບົບການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ ຍັງຊອກຫາທຶນທີ່ຫຼາກຫຼາຍ ໂດຍຜ່ານການເກັບເງິນການຝຶກອົບຮົມທີ່ຈັດສັນໄວ້ ຫຼື ກອງທຶນທີ່ກ່ຽວຂ້ອງກັບບໍລິສັດ. ພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ຍັງມີສ່ວນຮ່ວມໂດຍກົງ ຜ່ານການຈັດຊື້ຈັດຈ້າງທີ່ມີການແຂ່ງຂັນກັນ, ແຕ່ມີຜົນໄດ້ຮັບທີ່ຫຼາກຫຼາຍ. ນາຍຈ້າງ ໄດ້ຮັບການຊຸກຍູ້ໃຫ້ມີການຝຶກອົບຮົມ ໂດຍຜ່ານການເກັບເງິນກອງທຶນ. ເຖິງຢ່າງໃດກໍຕາມ, ບໍລິສັດຕ່າງໆ ຍັງລົງທຶນຕ່ຳໃນການຝຶກອົບຮົມ, ເນື່ອງຈາກແຮງຈູງໃຈນັ້ນ ຕ່ຳກວ່າ ແຮງຈູງໃຈໃນການດຶງທັກສະທີ່ຕ້ອງການໂດຍກົງຈາກຕະຫຼາດແຮງງານ. ລັດຖະບານ ສະໜອງສິ່ງຈູງໃຈໃຫ້ບຸກຄົນ ໂດຍກວມເອົາຄ່າໃຊ້ຈ່າຍການຝຶກອົບຮົມໂດຍກົງ ຫຼື ທາງອ້ອມ ຜ່ານປະຫວັດການຮຽນຮູ້ສ່ວນບຸກຄົນ ຫຼື ການໃຫ້ນາມມະຍົດ.


ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ຊຸມຊົນ ນຳໜ້າໃນໂຄງການຫຼັກສູດສຳລັບຜູ້ໃຫຍ່. ໂດຍຜ່ານສູນການຮຽນຮູ້ຂອງຊຸມຊົນ, ຫຼັກສູດການຮູ້ໜັງສື ແລະ ອື່ນໆ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ອົງການຈັດຕັ້ງປະຊາສັງຄົມ ໄດ້ເຂົ້າເຖິງກຸ່ມຜູ້ໃຫຍ່ທີ່ດ້ອຍໂອກາດ ທີ່ປົກກະຕິແລ້ວບໍ່ໄດ້ຮັບການສຶກສາໃນລະບົບໂຮງຮຽນ. ໃນບາງກໍລະນີ, ລັດຖະບານ ໄດ້ອີງໃສ່ການບໍລິການຂອງຕົນ ເພື່ອສະໜອງຫຼັກສູດການຮູ້ໜັງສືແຫ່ງຊາດຂອງຜູ້ໃຫຍ່ ແລະ ຫຼັກສູດໂອກາດທີສອງ; ໃນສະພາບການອື່ນໆ, ກຸ່ມດັ່ງກ່າວ ເປັນສິ່ງທ້າທາຍໃນການສະໜອງການສຶກສາຜູ້ໃຫຍ່ຂອງລັດ ໂດຍສະເພາະໃນອາເມລິກາລາຕິນ ເຊັ່ນ: ການສິ່ງເສີມພາສາທີ່ບໍ່ໂດດເດັ່ນໃນການຮຽນຮູ້ໜັງສືຂອງຜູ້ໃຫຍ່; ໃນສະພາບການອື່ນໆ, ສິ່ງເຫຼົ່ານີ້ ໄດ້ຮັບອິດທິພົນຈາກບູລິມະສິດຂອງຜູ້ໃຫ້ທຶນ. ການມີສ່ວນຮ່ວມຂອງເຂົາເຈົ້າໃນ

ການພັດທະນານະໂຍບາຍຂອງລັດ ຍັງຈຳກັດ, ເຖິງແມ່ນວ່າໃນອາຟຣິກາ ຕາເວັນຕົກ ແລະ ອາຟຣິກາກາງ, ຍຸດທະສາດການກະຈາຍອຳນາດທີ່ຍຸຕິທຳ ແລະ ການຈ້າງຊ່ວຍສອນຈາກພາຍນອກ ນຳໄປສູ່ຜົນໄດ້ຮັບທີ່ດີ, ໂດຍລັດເປັນຜູ້ຊີ້ນຳ ແລະ ແຈກຢາຍຊັບພະຍາກອນ ໃນຂະນະທີ່ພາກສ່ວນຕ່າງໆ ທີ່ບໍ່ແມ່ນພາກລັດ ຮັບຜິດຊອບໃນການສະໜອງທຶນ.

ພາກເອກະຊົນ ໄດ້ຂະຫຍາຍບົດບາດໃນການສຶກສາຜູ້ໃຫຍ່ ໂດຍສະເພາະໃນການຮຽນພາສາ. ບໍລິສັດເອກະຊົນ ອາດຈະມີສ່ວນຮ່ວມໃນການສຶກສາຜູ້ໃຫຍ່ໂດຍຜ່ານການພັດທະນາຊຸມຊົນ, ສ່ວນໃຫຍ່ຈະເປັນສ່ວນໜຶ່ງຂອງການລິເລີ່ມຄວາມຮັບຜິດຊອບທາງສັງຄົມຂອງບໍລິສັດ ຫຼື ການສະໜອງທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ.

ຄວາມກ່ຽວຂ້ອງທີ່ເພີ່ມຂຶ້ນຂອງການຮຽນຮູ້ ແລະ ການປະເມີນດ້ານພາສາ ໄດ້ດຶງດູດບໍລິສັດທີ່ຫວັງຜົນກຳໄລ. ປະມານ 40% ຂອງຜູ້ຮຽນພາສາອັງກິດ ໃນອາເຈນຕິນາ ແລະ ເປຣູ ຮຽນກັບສະຖາບັນພາສາຂອງເອກະຊົນ. ການຮຽນຮູ້ພາສາໂດຍໃຊ້ອຸປະກອນເຄື່ອນທີ່ (ໂທລະສັບມືຖື) ກຳລັງແຜ່ຂະຫຍາຍ, ແຕ່ຍັງມີການໂຕ້ຖຽງກັນກ່ຽວກັບປະສິດທິຜົນຂອງມັນ.

ຂໍ້ສະເໜີແນະຕ່າງໆ



ນອກຈາກການແບ່ງແຍກແບບງ່າຍດາຍລະຫວ່າງໂຮງຮຽນລັດ ແລະ ໂຮງຮຽນເອກະຊົນ, ຍັງມີໂຮງຮຽນທີ່ບໍ່ແມ່ນຂອງລັດຫຼາຍປະເພດ. ຍິ່ງໄປກວ່ານັ້ນ, ບົດບາດຂອງພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ຍັງຂະຫຍາຍອອກໄປໄກກວ່າການຈັດການສຶກສາ ຈົນເຖິງໂຄງການຊ່ວຍເຫຼືອດ້ານອື່ນໆໃນລະດັບການສຶກສາຕ່າງໆ ແລະ ຜ່ານອິດທິພົນຫຼາຍຊ່ອງທາງ. ຄຳຖາມສຳລັບຜູ້ວາງນະໂຍບາຍ ບໍ່ພຽງແຕ່ວ່າການມີສ່ວນຮ່ວມດ້ານການສຶກສາ ໄດ້ບັນລຸມາດຕະຖານຄຸນນະພາບທີ່ຕົກລົງກັນໄວ້ ຫຼື ບໍ່, ແຕ່ຍັງລວມເຖິງວິທີການທີ່ພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ຊ່ວຍ ຫຼື ຂັດຂວາງຄວາມພະຍາຍາມ ເພື່ອຮັບປະກັນຄວາມສະເໝີພາບ ແລະ ການລວມເອົາທຸກຄົນເຂົ້າໃນການສຶກສາ.

ສອງທິດທາງຍຸດທະສາດກ່ຽວກັບການໃຫ້ທຶນ ແລະ ການສະໜອງ ມີຄວາມພົ້ນເດັ່ນກ່ຽວກັບວຽກງານປົກປັກຮັກສາ ແລະ ການບັນລຸຍຸດທິໃນການສຶກສາຂອງລັດຖະບານ. ທຳອິດ, ລັດຖະບານ ໄດ້ໃຫ້ຄຳໝັ້ນສັນຍາໃນປີ 2015 ວ່າເດັກນ້ອຍ ແລະ ຊາວໜຸ່ມທຸກຄົນ ຈະໄດ້ຮັບການສຶກສາກ່ອນຊັ້ນປະຖົມສຶກສາ 1 ປີ ແລະ ຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ 12 ປີ ໂດຍບໍ່ເສຍຄ່າ. ເຖິງຢ່າງໃດກໍຕາມ, ມີພຽງຈຳນວນໜຶ່ງໃນສາມຂອງບັນດາປະເທດທີ່ໃຫ້ໜ້ອຍກວ່າ 4% ຂອງລວມຍອດຜະລິດຕະພັນພາຍໃນ (GDP) ແລະ 15% ຂອງການໃຊ້ຈ່າຍສາທາລະນະທັງໝົດໃຫ້ແກ່ການສຶກສາ, ຫຼາຍໆປະເທດບໍ່ບັນລຸພັນທະນີ້ຕາມທຶນທີ່ຕ້ອງການ. ສອງ, ລັດຖະບານຈຳເປັນຕ້ອງຕັດສິນໃຈວ່າຈະມີບົດບາດທີ່ເຂັ້ມແຂງແນວໃດ ໃນການສະໜອງ ແລະ ການຄຸ້ມຄອງການສຶກສາ. ທັດສະນະຂອງເຂົາເຈົ້າຕໍ່ກັບການເລືອກໂຮງຮຽນ ແລະ ພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດມີຄວາມແຕກຕ່າງກັນຢ່າງກວ້າງຂວາງ.

ບັນດາພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ສາມາດພົບເຫັນໄດ້ ໃນຫຼາຍໆດ້ານຂອງການສຶກສາ. ທຸລະກິດຕ່າງໆ ສ້າງຕົວເລືອກກ່ຽວກັບວ່າການສຶກສາເປັນກິດຈະກຳທີ່ມີລາຍໄດ້ ຫຼື ບໍ ແລະ ຈະເຮັດການຕະຫຼາດຂອງສິນຄ້າ ແລະ ບໍລິການຂອງຕົນແນວໃດ, ແຕ່ຍັງລວມເຖິງພາກສ່ວນທີ່ເຂົາເຈົ້າຈະໃຫ້ຄຳຕອບໄດ້: ເປັນພຽງແຕ່ຜູ້ຖືຫຸ້ນ ຫຼື ອື່ນໆອີກນຳ? ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ອົງການຈັດຕັ້ງປະຊາສັງຄົມ ເລືອກບູລິມະສິດ ແລະ ຕັດສິນໃຈວ່າຈະປະຕິບັດໄດ້ແນວໃດ: ພວກເຂົາຄວນຕື່ມຊ່ອງວ່າງ ຫຼື ສະໜັບສະໜຸນໃຫ້ລັດເຮັດແນວນັ້ນ ຫຼື ບໍ? ມູນນິທິຕ່າງໆ ຍັງໄດ້ກຳນົດບູລິມະສິດ ແລະ ເລືອກວິທີການທີ່ມີອິດທິພົນຕໍ່ສັງຄົມ ແລະ ວິທີການເຮັດວຽກຢ່າງໃກ້ຊິດກັບລະບົບການສຶກສາ. ຄູອາຈານ ແລະ ອົງການຈັດຕັ້ງຂອງເຂົາເຈົ້າ ສ້າງຕົວເລືອກທີ່ສາມາດສ້າງຄວາມເຂັ້ມແຂງ ຫຼື ທຸດຜ່ອນຄວາມເຊື່ອໝັ້ນ ໃນລະບົບການສຶກສາຂອງລັດ.

ຄວາມຮຽກຮ້ອງຕ້ອງການຂອງບົດລາຍງານ - ໃຜເປັນຜູ້ເລືອກ? ໃຜເປັນຜູ້ສູນເສຍ? – ເປັນການເຊື້ອເຊີນຜູ້ວາງນະໂຍບາຍ ໃຫ້ຕັ້ງຄຳຖາມກ່ຽວກັບຄວາມສຳພັນກັບບັນດາພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ກ່ຽວກັບທາງເລືອກພື້ນຖານຕ່າງໆ: ລະຫວ່າງເສລີພາບໃນການເລືອກ ແລະ ຄວາມສະເໝີພາບ; ລະຫວ່າງການສົ່ງເສີມການລິເລີ່ມ (ເຊັ່ນ: ການປັບປຸງຄຸນນະພາບບ່ອນໃດກໍໄດ້ ໃນລະບົບ) ແລະ ການກຳນົດມາດຕະຖານ (ເຊັ່ນ: ການປັບປຸງຄຸນນະພາບ ສຳລັບຜູ້ຮຽນທຸກຄົນ); ລະຫວ່າງກຸ່ມປະຊາກອນທີ່ມີວິທີການ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ; ລະຫວ່າງພັນທະທີ່ຕ້ອງບັນລຸທັນທີ (ເຊັ່ນ: ການສຶກສາ 12 ປີ ໂດຍບໍ່ເສຍຄ່າພາຍໃຕ້ SDG 4) ແລະ ພັນທະທີ່ຈະຕ້ອງບັນລຸເທື່ອລະກ້າວ (ເຊັ່ນ: ການສຶກສາຫຼັງຊັ້ນມັດທະຍົມສຶກສາ); ແລະ ລະຫວ່າງຂະແໜງການສຶກສາ ແລະ ຂະແໜງສັງຄົມອື່ນໆ.

ເມື່ອຄຳນຶງເຖິງຄວາມຄິດເຫຼົ່ານີ້, ຄຳແນະນຳຕ່າງໆຕໍ່ໄປນີ້ ສ້າງຂຶ້ນເພື່ອຊ່ວຍເຮັດໃຫ້ກົດເກນຖືກຕ້ອງ (#RightttheRules) ເພື່ອຮັບປະກັນວ່າ ຄວາມສະເໝີພາບດ້ານການສຶກສາ ໄດ້ຮັບການປົກປ້ອງທາງດ້ານການເງິນ, ຄຸນນະພາບ, ການປົກຄອງ, ນະວັດຕະກຳ ແລະ ການສ້າງນະໂຍບາຍ. ເປົ້າໝາຍ ແມ່ນເພື່ອຄວບຄຸມການປະກອບສ່ວນຂອງພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ສາມາດເຮັດໃຫ້ການສຶກສາມີຄຸນນະພາບ ໂດຍບໍ່ຕ້ອງເສຍສະລະດ້ານຄວາມສະເໝີພາບ. ການລະດົມທາແຮງດັ່ງກ່າວ ຍັງອາດເປັນສິ່ງທ້າທາຍສຳລັບລັດຖະບານ ເພື່ອແນໃສ່ແກ້ໄຂຄຸນນະພາບຕ່ຳ ແລະ ຄວາມບໍ່ສະເໝີພາບໃນການສະໜອງຂອງລັດ. ຄຳແນະນຳຕ່າງໆ ແມ່ນແນໃສ່ລັດຖະບານເປັນຫຼັກ ຊຶ່ງຈຳເປັນຕ້ອງໃຫ້ຄຳຕອບທີ່ຊັດເຈນ ສຳລັບ 5 ຄຳຖາມຫຼັກຈາກທັດສະນະຂອງຄວາມສະເໝີພາບ ແລະ ການລວມເອົາທຸກຄົນ. ເຖິງຢ່າງໃດກໍຕາມ, ສິ່ງເຫຼົ່ານີ້ ຍັງໝາຍຄວາມວ່າຈະຖືກນຳໃຊ້ເປັນເຄື່ອງມືໃນການສະໜັບສະໜຸນ ໂດຍພາກສ່ວນດ້ານການສຶກສາຕ່າງໆທັງໝົດ ທີ່ຈະສະໜັບສະໜຸນຄວາມກ້າວໜ້າໄປສູ່ SDG 4. ດັ່ງນັ້ນ, ຄຳແນະນຳດັ່ງກ່າວ ຮຽກຮ້ອງໃຫ້ພາກສ່ວນຕ່າງໆທັງໝົດທັງພາກລັດ ແລະ ບໍ່ແມ່ນພາກລັດ ເຮັດໃຫ້ກົດເກນຖືກຕ້ອງ #RightbytheRules.

1. ການສະໜອງງົບປະມານໃຫ້ແກ່ການສຶກສາ ໄດ້ສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ຜູ້ຮຽນບາງຄົນ ແລະ ກີດກັ້ນຄົນອື່ນ ຫຼື ບໍ?

ບັນລຸພັນທະທີ່ຈະເຮັດໃຫ້ການສຶກສາກ່ອນຊັ້ນປະຖົມສຶກສາ 1 ປີ ແລະ ການສຶກສາຊັ້ນປະຖົມ ແລະ ມັດທະຍົມສຶກສາ 12 ປີ ບໍ່ເສຍຄ່າ - ແຕ່ງົບປະມານຈາກລັດ ບໍ່ຈຳເປັນຕ້ອງເປີດເຜີຍຕໍ່ສາທາລະນະ ຖ້າຫາກວ່າ ສາມາດຮັບປະກັນຄວາມສະເໝີພາບໄດ້.



ລັດຖະບານ ຄວນເຮັດໃຫ້ການສຶກສາມີຄຸນນະພາບດີ ໂດຍບໍ່ເສຍຄ່າ ຕັ້ງແຕ່ຈຸດເຂົ້າຮຽນ. ພວກເຂົາ ຕ້ອງຮັບປະກັນວ່າຄົວເຮືອນບໍ່ໄດ້ຈ່າຍຄ່າ ສິນຄ້າ ແລະ ການບໍລິການດ້ານການສຶກສາທີ່ປະເທດຂອງພວກເຂົາມີ ພັນທະທີ່ຈະເຮັດໃຫ້ການບໍລິການນັ້ນບໍ່ເສຍຄ່າ.

ລັດຖະບານ ຕ້ອງຕິດຕາມກວດກາລາຍຈ່າຍດ້ານການສຶກສາ, ໂດຍການ ນຳໃຊ້ການສຳຫຼວດລາຍຮັບ ແລະ ລາຍຈ່າຍຂອງຄົວເຮືອນ. ພວກເຂົາ ມັກຈະປ່ອຍປະລະເລີຍຈາກຄ່າໃຊ້ຈ່າຍທີ່ມີເອກະສານບັນທຶກທີ່ບໍ່ຖືກຕ້ອງ ຊຶ່ງເພີ່ມຄວາມບໍ່ສະເໝີພາບ.

ຜູ້ໃຫ້ບໍລິການທັງພົດ ທັງລັດ ແລະ ບໍ່ແມ່ນພາກລັດ ຕ້ອງສະເໜີເງື່ອນໄຂ ດຽວກັນໃຫ້ແກ່ນັກຮຽນ. ພັນທະດ້ານການສຶກສາທີ່ຈະໄດ້ຮັບທຶນ ສະໜັບສະໜູນຈາກລັດ ບໍ່ໄດ້ໝາຍຄວາມວ່າການສຶກສາທັງພົດຕ້ອງໄດ້ຮັບ ການສະໜອງໂດຍລັດ. ແຕ່ສະຖາບັນການສຶກສາທັງພົດ ຄວນໄດ້ຮັບ ການປະຕິບັດເປັນຄືສ່ວນໜຶ່ງຂອງລະບົບດຽວທີ່ມີກົດລະບຽບ, ການສະໜັບ ສະໜູນທາງດ້ານການເງິນ ແລະ ກົນໄກການເບິ່ງແຍງດູແລອັນດຽວກັນ.

ຄວາມພະຍາຍາມຕ່າງໆ ໃນການສະໜອງທີ່ມີຄວາມຫຼາກຫຼາຍ ຄວນໄດ້ຮັບ ການອອກແບບໃນລັກສະນະທີ່ຮັບປະກັນຄວາມສະເໝີພາບ. ການເຮັດ ສັນຍາການຄຸ້ມຄອງໂຮງຮຽນຂອງລັດ, ການອຸດໜູນຄ່າໃຊ້ຈ່າຍໃນການ ດຳເນີນງານຂອງໂຮງຮຽນເອກະຊົນ ຫຼື ການສະໜອງທຶນໃຫ້ແກ່ຄົວເຮືອນ ເພື່ອເຂົ້າໂຮງຮຽນທີ່ເຂົາເຈົ້າເລືອກນັ້ນ ສາມາດກາຍເປັນການສ້າງຜົນປະໂຫຍດ ໃຫ້ແກ່ຜູ້ຮຽນທີ່ຮັ່ງມີໄດ້ຢ່າງງ່າຍດາຍ.


ໂຮງຮຽນຕ່າງໆ ບໍ່ຄວນເລືອກນັກຮຽນ. ປະເທດຕ່າງໆມີພັນທະທີ່ຈະບໍ່ ຈຳແນກດ້ານການສຶກສາ ຊຶ່ງເປັນຫຼັກການທີ່ຕ້ອງສະແດງໃຫ້ເຫັນໃນ ນະໂຍບາຍການເຂົ້າໂຮງຮຽນ. ຍິ່ງໄປກວ່ານັ້ນ, ສິດທິຂອງຄອບຄົວ ແລະ ນັກຮຽນ ໃນການເລືອກໂຮງຮຽນ ບໍ່ຄວນເຮັດໃຫ້ຄວາມບໍ່ ສະເໝີພາບຮ້າຍແຮງຂຶ້ນຕື່ມ.

ຜູ້ໃຫ້ບໍລິການທີ່ບໍ່ແມ່ນພາກລັດທີ່ໄດ້ຮັບທຶນຈາກລັດ ບໍ່ຄວນເກັບຄ່າທຳນຽມໃດໆ. ໃນຂະນະທີ່ທຸກປະເທດ ຄວນຕັ້ງເປົ້າໝາຍ ເພື່ອຮັບປະກັນວ່າການສຶກສາ ກ່ອນຊັ້ນປະຖົມ, ປະຖົມ ແລະ ມັດທະຍົມສຶກສາ ແມ່ນບໍ່ເສຍຄ່າ, ແຕ່ຫຼາຍ ປະເທດຍັງຢູ່ໄກຈາກອຸດົມການນີ້. ແມ່ນແຕ່ສະຖາບັນເອກະຊົນທີ່ຂຶ້ນກັບລັດ ກໍຍັງເກັບຄ່າທຳນຽມ.

ການສ້າງກຳໄລ ບໍ່ສອດຄ່ອງກັບພັນທະ ໃນການຮັບປະກັນການສຶກສາ ກ່ອນຊັ້ນປະຖົມ, ປະຖົມ ແລະ ມັດທະຍົມສຶກສາ ໂດຍບໍ່ເສຍຄ່າ. ການຄວບຄຸມ ຫຼື ການຫ້າມການສ້າງກຳໄລ ສາມາດຖືກນຳໃຊ້ ເພື່ອ ແກ້ໄຂນະໂຍບາຍການເລືອກໂຮງຮຽນທີ່ເຮັດໃຫ້ເກີດຄວາມບໍ່ສະເໝີພາບ ຫຼາຍຂຶ້ນໄດ້.

2. ຜູ້ຮຽນທຸກຄົນ ໄດ້ຮັບຄຸນນະພາບການສຶກສາ ຕາມທີ່ເຂົາເຈົ້າມີ ສິດໄດ້ຮັບ ຫຼື ບໍ, ຫຼື ບາງຄົນໄດ້ຮັບການປະຕິບັດແບບບໍ່ເປັນທຳ ຫຼື ບໍ?

ກຳນົດມາດຕະຖານຄຸນນະພາບທີ່ນຳໃຊ້ກັບທຸກສະຖາບັນການສຶກສາຂອງລັດ ແລະ ທີ່ບໍ່ແມ່ນພາກລັດ.



ລັດຖະບານ ຈຳເປັນຕ້ອງໄດ້ກຳນົດມາດຕະຖານຄຸນນະພາບທີ່ນຳໃຊ້ກັບ ທຸກສະຖາບັນການສຶກສາ. ມາດຕະຖານຄຸນນະພາບ, ບໍ່ຄວນກວມເອົາ ແຕ່ພຽງປັດໃຈນຳເຂົ້າເທົ່ານັ້ນ ແຕ່ຍັງລວມເຖິງຜົນໄດ້ຮັບນຳ ເພື່ອປົກປ້ອງ ຜູ້ທີ່ສູນເສຍຫຼາຍທີ່ສຸດ. ພວກເຂົາ ຍັງຄວນກວມເອົາຄວາມປອດໄພ ແລະ ການລວມເອົາທຸກຄົນ. ພວກເຂົາ ຄວນຄຳນຶງເຖິງຈຸດທີ່ໂຮງຮຽນ ຕັ້ງຢູ່ ແລະ ຊ່ວຍພວກເຂົາປັບປຸງ. ຜົນສຳເລັດຂອງເຂົາເຈົ້າ ຄວນໄດ້ຮັບ ການປະເມີນສຳລັບແຕ່ລະໂຮງຮຽນທັງຂອງລັດ ຫຼື ທີ່ບໍ່ແມ່ນຂອງລັດ ແລະ ລາຍງານໃຫ້ແກ່ສາທາລະນະຊາບ.

ຄູອາຈານ ຄວນໄດ້ຮັບການເຫັນຄຸນຄ່າວ່າເປັນມືອາຊີບ ໃນທຸກໂຮງຮຽນ. ຄຸນວຸດທິຂອງຄູອາຈານ ແລະ ໂອກາດໃນການພັດທະນາວິຊາຊີບ ບໍ່ຄວນ ແຕກຕ່າງກັນໄປຕາມຜູ້ໃຫ້ບໍລິການ. ຕະຫຼາດແຮງງານຂອງຄູອາຈານທີ່ ມີການແບ່ງເປັນກຸ່ມ ແລະ ຄ່າຈ້າງທີ່ບໍ່ມີຄວາມສະເໝີພາບກັນຢ່າງ ກວ້າງຂວາງ ແລະ ເງື່ອນໄຂຕ່າງໆ ເປັນສັນຍານເຖິງຄວາມຮຸນແຮງ ຂອງລະບົບການສຶກສາທີ່ຜິດພາດ. ລັດຖະບານ ຈຳເປັນຕ້ອງຄອຍໆ ແກ້ໄຂທຸກສາເຫດຂອງຄວາມບໍ່ສົມດຸນດັ່ງກ່າວ.


ກົນໄກການປະກັນຄຸນນະພາບ ຈຳເປັນຕ້ອງໄດ້ຈັດຕັ້ງ ເພື່ອຕິດຕາມກວດກາ ແລະ ບັງຄັບໃຊ້ມາດຕະຖານ. ການຄວບຄຸມຂອງລັດຖະບານ ໂດຍຜ່ານ ການກວດກາໂຮງຮຽນ, ການປະເມີນຜົນ ແລະ ການປະເມີນການຮຽນຮູ້ ຄວນຈະເປັນເລື່ອງປົກກະຕິ ໂດຍບໍ່ຄຳນຶງວ່າໃຜຈະເປັນຜູ້ໃຫ້ບໍລິການ. ກົນໄກເຫຼົ່ານີ້ ຄວນພິຈາລະນາເຖິງຄວາມສາມາດໃນການຈັດຕັ້ງປະຕິບັດ ຂອງລັດ.

ປະເທດຕ່າງໆ ຕ້ອງການຂະບວນການປະກັນຄຸນນະພາບທີ່ເຂັ້ມແຂງຍິ່ງຂຶ້ນ ໃນການສຶກສາດ້ານເຕັກນິກວິຊາຊີບ, ອາຊີວະສຶກສາ ແລະ ການສຶກສາ ຊັ້ນສູງ. ເນື່ອງຈາກວ່າລັດຖະບານໃຫ້ເງິນອຸດໜູນບຸກຄົນ ຫຼື ເຮັດສັນຍາ ກັບບໍລິສັດ ເພື່ອສິ່ງເສີມການຝຶກອົບຮົມ, ພວກເຂົາ ຈຳເປັນຕ້ອງປົກປ້ອງ ຜູ້ດ້ອຍໂອກາດທີ່ສຸດທີ່ມີຄວາມສ່ຽງຕໍ່ການສໍ້ໂກງ. ມະຫາວິທະຍາໄລທີ່ ສະແຫວງຫາຜົນກຳໄລ ແມ່ນຢູ່ພາຍໃຕ້ການກວດກາພິຈາລະນາຢ່າງຖີ່ຖ້ວນ ໃນການສະໜອງການສຶກສາໃນລະດັບຕ່ຳທີ່ສຸດຂອງມາດຕະຖານ ແລະ ການມີສ່ວນຮ່ວມໃນການປະຕິບັດໜ້າທີ່ທີ່ບໍ່ຖືກຕ້ອງ.

ລັດຖະບານ ຈຳເປັນຕ້ອງປ້ອງກັນບໍ່ໃຫ້ມີການເກັບຄ່າຮຽນເພີ່ມເຕີມຂອງ ເອກະຊົນ ທີ່ມີຜົນກະທົບທາງລົບຕໍ່ຄຸນນະພາບ ແລະ ຄວາມສະເໝີພາບ ຂອງລະບົບ. ການປະຕິບັດຕາມນະໂຍບາຍທີ່ແຕກຕ່າງກັນໄປຕັ້ງແຕ່ຂໍ້ກຳນົດ ໃບອະນຸຍາດການສິດສອນພິເສດຂອງຄູອາຈານໄປສູ່ການລົງທະບຽນທາງ ອິນເຕີເນັດ ເພື່ອໃຫ້ການກວດກາດີຂຶ້ນ. ຂໍ້ຫ້າມຕ່າງໆ ກໍເປັນທາງເລືອກໜຶ່ງ ແຕ່ອາດຈະນຳໄປສູ່ໃຫ້ເກີດຕະຫຼາດທີ່ບໍ່ເປັນທາງການ. ບູລິມະສິດ ຄວນຈະ ສຸມໃສ່ການແກ້ໄຂສາເຫດທີ່ເປັນຮາກເຫງົ້າຕ່າງໆ ເຊັ່ນ: ເງິນເດືອນຂອງ ຄູອາຈານຕ່ຳ ແລະ ການສອບເສັງທ້າຍພາກຮຽນທີ່ມີການເດີມພັນສູງ.

3. ກົດລະບຽບຫຼັກການຕ່າງໆ ມີປະສິດທິຜົນ ແລະ ເປັນໄປໄດ້ ຫຼື ມີຜົນຕາມມາໂດຍບໍ່ໄດ້ຕັ້ງໃຈ ຊຶ່ງເປັນອັນຕະລາຍຕໍ່ຜູ້ຮຽນທີ່ດ້ອຍ ໂອກາດ ຫຼື ບໍ?

ກຳນົດຂະບວນການ ແລະ ວິທີການຕ່າງໆ ໃນການຕິດຕາມ ແລະ ສະໜັບສະໜູນຮ່ວມກັນທີ່ນຳໃຊ້ກັບທຸກສະຖາບັນການສຶກສາຂອງລັດ ແລະ ທີ່ບໍ່ແມ່ນພາກລັດ.



ລັດຖະບານ ຕ້ອງການວິໄສທັດ ແລະ ຂອບວຽກທີ່ຈະແຈ້ງກ່ຽວກັບ ວິທີການທີ່ພວກເຂົາຕ້ອງການມີສ່ວນຮ່ວມກັບພາກສ່ວນຕ່າງໆທີ່ບໍ່ແມ່ນ ພາກລັດ ແລະ ສື່ສານວິໄສທັດນີ້ຜ່ານກົດລະບຽບ. ກົດລະບຽບ ບໍ່ຄວນ ເນັ້ນໃສ່ລາຍລະອຽດດ້ານການບໍລິຫານ ແລະ ມາດຕະຖານຂອງປັດໄຈ ນຳເຂົ້າທີ່ບໍ່ເປັນຈິງ ແຕ່ເນັ້ນໃສ່ຂະບວນການ ແລະ ຜົນໄດ້ຮັບຂອງການ ສຶກສາ ແລະ ມີການທົບທວນ ແລະ ປັບປຸງເປັນໄລຍະໆຢ່າງໂປ່ງໃສ ແລະ ມີສ່ວນຮ່ວມ ໂດຍການໃຫ້ຂໍ້ມູນນຳເຂົ້າຈາກທັງໂຮງຮຽນຂອງລັດ ແລະ ທີ່ບໍ່ແມ່ນຂອງລັດທີ່ຖືກເຊີນເຂົ້າຮ່ວມ.


ຜູ້ໃຫ້ບໍລິການດ້ານການສຶກສາ ຄວນໄດ້ຢູ່ໃນກົດລະບຽບ ໃນຖານະໜ່ວຍງານ ດ້ານການສຶກສາ ໂດຍອຳນາດການປົກຄອງບໍລິຫານດ້ານການສຶກສາ ແລະ ບໍ່ຄວນເປັນພຽງໜ່ວຍງານທີ່ຢູ່ພາຍໃຕ້ກົດລະບຽບດ້ານການຄ້າ. ຜູ້ໃຫ້ບໍລິການບາງພາກສ່ວນ ສາມາດຢູ່ໃຕ້ກົດລະບຽບທຸລະກິດ ໃນການດູແລ ແລະ ການສຶກສາກ່ອນໄວຮຽນ, ການສອນເສີມ ແລະ ການຝຶກອົບຮົມ ວິຊາຊີບຂອງເອກະຊົນ. ເຊັ່ນດຽວກັນ, ຜູ້ໃຫ້ບໍລິການອື່ນໆ ແມ່ນໄດ້ຮັບ ການຊີ້ນຳໂດຍກະຊວງຄຸ້ມຄອງທາງສັງຄົມ ຫຼື ໂດຍໜ່ວຍງານທາງສາສະໜາ.

ກົດລະບຽບຫຼັກການ ຕ້ອງງ່າຍດາຍ, ໂປ່ງໃສ ແລະ ມີປະສິດທິພາບ. ປະເດັນທີ່ຂັດແຍ່ງກັນ ກໍຄືຄວາມສາມາດໃນການກຳນົດກົດລະບຽບແມ່ນ ຕ່ຳທີ່ສຸດໃນບ່ອນທີ່ມີຄວາມຕ້ອງການມັນ ແລະ ທ່າອ່ຽງໃນການສໍ້ລາດບັງຫຼວງ ແມ່ນສູງທີ່ສຸດ. ເມື່ອຄວາມສາມາດໃນການຕິດຕາມກວດກາ ແລະ ການ ບັງຄັບໃຊ້ລະບຽບຫຼັກການ ຍັງຂາດເຂີນ, ສະແດງວ່າ ກົດລະບຽບຫຼັກການນັ້ນ ບໍ່ມີຄວາມສອດຄ່ອງ ແລະ ບໍ່ມີຄວາມສ້າງສັນ.

ລັດຖະບານ ຕ້ອງມີຄວາມຊື່ສັດຕໍ່ສາເຫດຕ່າງໆຂອງປະກິດການທີ່ ຕ້ອງການຈະຄວບຄຸມ. ຂະບວນການຕິດຕາມ ແລະ ສະໜັບສະໜູນ ຄວນຈະເປັນເລື່ອງທຳມະດາ ຊຶ່ງສະແດງໃຫ້ເຫັນວ່າລັດຖະບານເບິ່ງແຍງ ການສຶກສາຂອງເດັກນ້ອຍທຸກຄົນ ໂດຍບໍ່ຈຳແນກປະເພດຂອງໂຮງຮຽນທີ່ ເຂົາເຈົ້າເຂົ້າຮຽນ. ລັດຖະບານ ຍັງຕ້ອງສ້າງຄວາມສຳພັນທີ່ໄວ້ວາງໃຈ ກັບຜູ້ໃຫ້ບໍລິການທີ່ບໍ່ແມ່ນລັດ ເພື່ອສື່ສານສິ່ງຈູງໃຈທີ່ເໝາະສົມສຳລັບ ພວກເຂົາ ໃນການດຳເນີນການໂຮງຮຽນຂອງພວກເຂົາຢ່າງມີປະສິດທິພາບ.

4. ແນວຄວາມຄິດທີ່ດີສຳລັບການສຶກສາ ໄດ້ຮັບການເອົາໃຈໃສ່ ຫຼື ຈຳກັດບໍ?

ອຳນວຍຄວາມສະດວກ ໃຫ້ແກ່ການເຜີຍແຜ່ນະວັດຕະກຳຜ່ານລະບົບ ການສຶກສາ ເພື່ອຜົນປະໂຫຍດສ່ວນລວມ.



ຜູ້ວາງນະໂຍບາຍ ຄວນສາມາດກຳນົດນະວັດຕະກຳ, ເວລາ ແລະ ພື້ນທີ່ ສຳລັບຄວາມຄິດທີ່ດີ ເພື່ອພັດທະນາ. ບໍ່ມີໃຜພຸກຂາດກ່ຽວກັບຄວາມຄິດທີ່ດີ. ການສຶກສາ ແມ່ນຄວາມພະຍາຍາມຂອງສັງຄົມ ແລະ ເປັນລະບົບທີ່ຊັບຊ້ອນ. ສິ່ງທ້າທາຍສຳລັບຜູ້ວາງນະໂຍບາຍ ແມ່ນການຊຸກຍູ້ໃຫ້ເກີດນະວັດຕະກຳ, ໂດຍສະເພາະໃນເວລາທີ່ປະຊາຊົນທົ່ວໄປມີທ່າອ່ຽງທີ່ຈະມັກການປະຕິບັດຕາມຫຼາຍກວ່າການທົດລອງ.

ລັດຖະບານ ຄວນເຮັດວຽກຮ່ວມກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງ ລະບົບການສຶກສາທີ່ເໝາະສົມສຳລັບທຸກຄົນ, ໂດຍໃຫ້ບູລິມະສິດແກ່ ວິທີການປຶກສາຫາລື. ຕ້ອງສ້າງວັດທະນະທຳຄວາມໄວ້ເນື້ອເຊື່ອໃຈ ເພື່ອ ສົ່ງເສີມນະວັດຕະກຳ. ການສ້າງເງື່ອນໄຂ ແລະ ການນຳສະເໜີຊ່ອງທາງ ສຳລັບພາກສ່ວນຕ່າງໆ ໃນການໂຕ້ຕອບ ແລະ ຮ່ວມມືກັນ ສາມາດຊ່ວຍ ໃຫ້ລະບົບການສຶກສາຂອງລັດ ໄດ້ຮັບຜົນປະໂຫຍດຈາກທັດສະນະ ແລະ ແຫຼ່ງຄວາມຊຳນິຊຳນານທີ່ແຕກຕ່າງກັນ ເພື່ອຮັກສາຄວາມສອດຄ່ອງ.

ໃນການເລີ່ມຕົ້ນ, ລັດຖະບານ ຈຳເປັນຕ້ອງໄດ້ສິ່ງເສີມນະວັດຕະກຳ ໃນລະບົບການສຶກສາຂອງລັດ. ພວກເຂົາ ຕ້ອງຖ່າຍທອດຂໍ້ຄວາມທີ່ ເຂົາເຈົ້າມຸ່ງໝັ້ນສູ່ຄວາມເປັນເລີດ. ພວກເຂົາ ຄວນຕິດຕາມການຮຽນຮູ້ ແລະ ປັດໄຈທີ່ກຳນົດ, ໂດຍປະເມີນການປະຕິບັດທີ່ດີເກີດຂຶ້ນຢູ່ໃສ, ສະໜອງຊັບພະຍາກອນໃຫ້ຜູ້ປະຕິບັດງານ ເພື່ອແລກປ່ຽນປະສົບການ, ທົດລອງແນວຄວາມຄິດທີ່ດີ ແລະ ຂະຫຍາຍວົງກວ້າງຂຶ້ນ.

ລັດຖະບານ ກໍຍັງຄວນຊອກຫາບົດຮຽນຈາກພາກສ່ວນຕ່າງໆທີ່ບໍ່ແມ່ນ ພາກລັດ. ວິທີການທີ່ເປັນອິດສະຫຼະ, ຕາມສະພາບການ ແລະ ສາມາດ ດັດປັບໄດ້ ໃນການສິດສອນນັກຮຽນທີ່ດ້ອຍໂອກາດ ສາມາດສ້າງຄວາມຮູ້ ໃໝ່ແບບເລິກເຊິ່ງ, ຊຶ່ງລັດຖະບານ ຄວນໄດ້ຮັບຜົນປະໂຫຍດ, ໃນຂະນະທີ່ ຮັບຮູ້ວ່າຄວາມສາມາດທີ່ຕ່ຳ ເຮັດໃຫ້ພວກເຂົາບໍ່ສາມາດຕິດຕາມ ແລະ ປະເມີນຜົນໂຮງຮຽນຂອງລັດໄດ້ຢ່າງຖືກຕ້ອງ, ແລ້ວຈະຄາດຫວັງຫຍັງ ກັບໂຮງຮຽນທີ່ບໍ່ແມ່ນຂອງລັດ.

ບົດບາດຂອງລັດຖະບານ ແມ່ນສ້າງສະພາບແວດລ້ອມທີ່ເໝາະສົມ ເພື່ອຜະລິດນະວັດຕະກຳ. ການສຶກສາ ບໍ່ຄວນຖືກເບິ່ງວ່າເປັນຕະຫຼາດທີ່ "ຜູ້ຜະລິດ" ດ້ານການສຶກສາ ສາມາດແຂ່ງຂັນກັບຜູ້ໃຫ້ບໍລິການອື່ນໆ. ໃນທາງກົງກັນຂ້ານ, ແນວຄວາມຄິດໃໝ່ໆ ຕ້ອງໄດ້ຮັບການແບ່ງປັນ, ທົດສອບ ແລະ ຖ້າໄດ້ຮັບການພິສູດແລ້ວ ກໍຮັບຮອງເອົາໄປນຳໃຊ້, ໂດຍລັດຊ່ວຍພວກເຂົາເຜີຍແຜ່ຜ່ານລະບົບການສຶກສາ ແລະ ພາກສ່ວນ ຕ່າງໆທີ່ບໍ່ແມ່ນພາກລັດ ທີ່ອາດຈະອາສາສະໝັກດຳເນີນການ ເພື່ອຜົນປະໂຫຍດ ສ່ວນລວມຫຼາຍກວ່າແຮງຈູງໃຈທາງດ້ານເສດຖະກິດ.

5. ທຸກຄວາມຄິດຄວາມເຫັນ ໄດ້ຮັບໂອກາດເທົ່າທຽມກັນ ເພື່ອສ້າງ ເປັນຂອບແໜງການອະພິປາຍສາທາລະນະດ້ານການສຶກສາ ຫຼື ບໍ?

ຮັກສາຄວາມໂປ່ງໃສ ແລະ ຄວາມຊື່ສັດຂອງຂະບວນການນະໂຍບາຍ ການສຶກສາຂອງລັດ ເພື່ອສະກັດກັ້ນເລື່ອງຜົນປະໂຫຍດ.



ຜູ້ວາງນະໂຍບາຍ ຕ້ອງຄຳນຶງເຖິງຂໍ້ມູນແບບເລິກເຊິ່ງ ແລະ ທັດສະນະ ຈາກທຸກພາກສ່ວນທີ່ກ່ຽວຂ້ອງ. ແຕ່ໃນຖານະເປັນຜູ້ວາງນະໂຍບາຍ ຄວນ ເປີດຮັບຄວາມຄິດເຫັນທີ່ຫຼາກຫຼາຍ ຊຶ່ງເປັນສິ່ງຈຳເປັນ ໃນການສື່ສານກັບ ພະນັກງານລັດກ່ຽວກັບກົດໝາຍ, ນະໂຍບາຍ ແລະ ກົດລະບຽບດ້ານ ການສຶກສາໃຫ້ມີຄວາມໂປ່ງໃສ. ບາງພາກສ່ວນ ອາດຈະເຮັດວຽກ ເພື່ອເພີ່ມສັດສ່ວນທາງການຕະຫຼາດ ຫຼື ອຳນາດທາງດ້ານການເມືອງ ຫຼາຍກວ່າຜົນປະໂຫຍດສ່ວນລວມ.

ລັດຖະບານ ຈຳເປັນຕ້ອງຕິດຕາມກວດກາ ແລະ ປ້ອງກັນການຊັກຊວນ ໂດຍກຸ່ມທີ່ຮັບຜົນປະໂຫຍດ ເພື່ອປ້ອງກັນບໍ່ໃຫ້ມີອິດທິພົນຕໍ່ນະໂຍບາຍ ລັດຢ່າງບໍ່ເໝາະສົມ. ເພື່ອຮັກສາຄວາມເຊື່ອໝັ້ນ ໃນຂະບວນການຂອງ ນະໂຍບາຍລັດ, ສາມາດນຳໃຊ້ຫຼາຍໆມາດຕະການ ເພື່ອສົ່ງເສີມຄວາມ ໂປ່ງໃສໄດ້ ຂຶ້ນກັບຄວາມສາມາດ ລວມທັງສິດເສລີພາບດ້ານຂໍ້ມູນຂ່າວສານ ທີ່ສົ່ງເສີມການເປີດເຜີຍການບໍລິຈາກໃຫ້ແກ່ພັກການເມືອງ ແລະ ການປະຊຸມ ກັບພະນັກງານອາວຸໂສຂອງລັດຖະບານ, ແລະ ກົດລະບຽບຕໍ່ພະນັກງານລັດ ທີ່ອອກຈາກຕຳແໜ່ງເພື່ອຮັບຕຳແໜ່ງທີ່ພວກເຂົາສາມາດໄດ້ຮັບຜົນ ປະໂຫຍດສ່ວນຕົວ ແລະ ຕໍ່ຕ້ານຜູ້ຊັກຈູງທີ່ໄດ້ຮັບຜົນປະໂຫຍດ ແລະ ຜູ້ສະໜັບສະໜູນຂອງພວກເຂົາທີ່ເຂົ້າຮັບຕຳແໜ່ງໃນອົງການຈັດຕັ້ງຂອງລັດ. ຄຳແນະນຳເຫຼົ່ານີ້ ຍັງນຳໄປໃຊ້ກັບທຸກອົງການຈັດຕັ້ງສາກົນທີ່ຕ້ອງການ ນະໂຍບາຍທີ່ຊັດເຈນຂອງການພົວພັນກັບພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ຊຶ່ງໃຫ້ບູລິມະສິດກັບຄວາມສະເໝີພາບ ແລະ ການລວມເອົາທຸກຄົນ.

ການຕິດຕາມວຽກງານການສຶກສາໃນເປົ້າໝາຍການພັດທະນາແບບຍືນຍົງ


ເມື່ອຈຸດໃຈກາງໃກ້ຈະບັນລຸວາລະການພັດທະນາແບບຍືນຍົງປີ 2030, ມີຄວາມກ້າວໜ້າທີ່ສຳຄັນໃນການພັດທະນາຂອບການຕິດຕາມກວດກາ ແລະ ບັນດາຄາດໝາຍທີ່ປະເທດຕ່າງໆໄດ້ວາງອອກ. ແນວໃດກໍຕາມ, ການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ສະແດງໃຫ້ເຫັນເຖິງຄວາມຫຍຸ້ງຍາກທ້າງສອງດ້ານ. ບໍ່ພຽງແຕ່ເຄື່ອງມືທີ່ມີມາດຕະຖານທີ່ໃຊ້ໃນການຕິດຕາມຄວາມຄືບໜ້າຂອງການສຶກສາທີ່ໄດ້ຮັບຜົນກະທົບເທົ່ານັ້ນ, ແຕ່ບັນດາເປົ້າໝາຍເອງກໍອາດຈະຕ້ອງໄດ້ຮັບການພິຈາລະນາຄືນໃໝ່.

ປະເທດຕ່າງໆໄດ້ສິ່ງມາດຖານ SDG 4 ແຫ່ງຊາດ

ຂອບການດຳເນີນງານດ້ານການສຶກສາ ປີ 2030 ໄດ້ຮຽກຮ້ອງໃຫ້ປະເທດຕ່າງໆ ສ້າງ “ມາດຖານລະດັບກາງທີ່ເໝາະສົມ (ເຊັ່ນ: ປີ 2020 ແລະ 2025)” ສຳລັບຕົວຊີ້ບອກ SDG 4 ໃນການເກັບກຳເອົາການປະກອບສ່ວນທີ່ແຕ່ລະປະເທດຈະໄດ້ກະກຽມ ເພື່ອເຮັດໃຫ້ໄດ້ຕາມບັນດາວາລະຂອງໂລກ ໂດຍອີງໃສ່ເງື່ອນໄຂເບື້ອງຕົ້ນ. ສະຖາບັນສະຖິຕິຂອງອຸຍແນສໂກ (UIS) ແລະ ທີມງານບົດລາຍງານ GEM ໄດ້ເຮັດວຽກ ເພື່ອລະດົມໃຫ້ປະຊາຄົມສາກົນເຄື່ອນທີ່ໄປໃນທິດທາງນັ້ນ. ຫຼັງຈາກການຄັດເລືອກ 7 ຕົວຊີ້ບອກຂອງ SDG 4 ສຳລັບມາດຖານໃນປີ 2019 ແລະ ຄຳແນະນຳຂອງຖະແຫຼງການກອງປະຊຸມການສຶກສາໂລກ ໃນເດືອນຕຸລາ ປີ 2020 ເພື່ອ “ເລັ່ງຄວາມຄືບໜ້າ ແລະ ສະເໜີມາດຖານທີ່ກ່ຽວຂ້ອງ ແລະ ເປັນຈິງຂອງຕົວຊີ້ບອກຂອງ SDG 4 ທີ່ສຳຄັນ”, ປະເທດຕ່າງໆ ໄດ້ຖືກເຊື້ອເຊີນໃຫ້ສົ່ງມາດຖານລະດັບຊາດ ພາຍໃນເດືອນຕຸລາ ປີ 2021 ສຳລັບປີ 2025 ແລະ 2030. 39% ຂອງປະເທດຕ່າງໆ ໄດ້ສົ່ງມາດຖານ. 10% ຂອງບັນດາປະເທດ ມຸ່ງໝັ້ນທີ່ຈະເຮັດແນວນັ້ນ, ໃນຂະນະທີ່ອີກ 14% ແມ່ນສະມາຊິກຂອງສະຫະພາບເອີຣົບ ແລະ ຊຸມຊົນຄາຣິບຽນທີ່ມີມາດຖານລະດັບພາກພື້ນ **(ຮູບທີ 3)**.

ຂໍ້ມູນກ່ຽວກັບຄຸນຄ່າພື້ນຖານ ແລະ ມາດຖານແຫ່ງຊາດທີ່ໄດ້ສົ່ງ ສຳລັບ ປີ 2025 ແລະ 2030 ໃນປັດຈຸບັນ ໄດ້ສະແດງຢູ່ໃນຂໍ້ມູນການສັງເກດການດ້ານການສຶກສາໂລກ (Global Education Observatory) ຊຶ່ງເປັນປະຕູບານໃໝ່ສູ່ຂໍ້ມູນທີ່ກ່ຽວຂ້ອງກັບການສຶກສາ. UIS ແລະ ບົດລາຍງານ GEM ຈະເຜີຍແຜ່ກ່ຽວກັບບົດລາຍງານພື້ນຖານທີ່ວິເຄາະຜົນຂອງຂະບວນການນີ້ໃນຕົ້ນປີ 2022. ບົດລາຍງານ ຈະເນັ້ນໃຫ້ເຫັນເຖິງບ່ອນທີ່ປະເທດ, ພາກພື້ນ ແລະ ໂລກ ມຸ່ງຫວັງໄປສູ່. ຂະບວນການຈະໄດ້ຮັບການວາງແຜນ ເພື່ອຊ່ວຍໃຫ້ປະເທດຕ່າງໆ ພັດທະນາເປົ້າໝາຍການສຶກສາ ທີ່ຍັງຂາດຫາຍໄປ, ແຕ່ຍັງລວມເຖິງກໍລະນີທີ່ກ່ຽວຂ້ອງ ເພື່ອສະທ້ອນໃຫ້ເຫັນຜົນກະທົບທີ່ອາດເກີດຂຶ້ນຈາກພະຍາດໂຄວິດ-19 ໃນມາດຖານແຫ່ງຊາດ ເມື່ອຂໍ້ມູນປະກົດຂຶ້ນ.

ຮູບທີ 3:
ສອງໃນສາມຂອງປະເທດຕ່າງໆ ໄດ້ເຂົ້າຮ່ວມໃນຂະບວນການກຳນົດມາດຖານ SDG 4
ອັດຕາສ່ວນຂອງປະເທດຕ່າງໆ ຕາມສະຖານະພາບການສົ່ງມາດຖານ SDG 4 ແຫ່ງຊາດ ພາຍໃນເດືອນຕຸລາ ປີ 2021



GEM StatLink: https://bit.ly/GEM2021_Summary_fig3
ແຫຼ່ງຂໍ້ມູນ: UIS ແລະ ທີມງານບົດລາຍງານ GEM.
EU = ສະຫະພາບເອີຣົບ; CARICOM = ຊຸມຊົນຄາຣິບຽນ

ໂຄວິດ-19

ພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບຕໍ່ການບັນລຸ SDG 4 ແລະ ວິທີການຕິດຕາມຄວາມຄືບໜ້າ

ພະຍາດໂຄວິດ-19 ເປັນວິກິດການທີ່ຮ້າຍແຮງທີ່ສຸດທີ່ເຄີຍກະທົບໃສ່ທຸກລະບົບການສຶກສາຂອງໂລກ ໃນຄັ້ງດຽວ. ໂຮງຮຽນ ໄດ້ຖືກປິດເປັນເວລາ 28% ຂອງມື້ ແລະ ປິດບາງສ່ວນເປັນເວລາ 26% ຂອງມື້ ລະຫວ່າງເດືອນມີນາ ປີ 2020 ຫາເດືອນຕຸລາ ປີ 2021. ປິດສູງທີ່ສຸດ ແມ່ນເດືອນເມສາ ປີ 2020 (95%). ໃນລະຫວ່າງເດືອນກັນຍາ ປີ 2020 ຫາເດືອນສິງຫາ ປີ 2021, ໂຮງຮຽນ ໄດ້ປິດ ຫຼື ປິດບາງສ່ວນ ເປັນເວລາເຄິ່ງໜຶ່ງຂອງມື້ຮຽນ **(ຮູບທີ 4)**. ຫຼາຍປະເທດຈັດປະເພດ ໂຮງຮຽນຂອງຕົນເປັນໂຮງຮຽນເປີດບາງສ່ວນເຖິງແມ່ນວ່າສ່ວນໃຫຍ່ຈະ ປິດກໍຕາມ.

ສະຖິຕິ SDG 4 ທີ່ເປັນທາງການ ໂດຍກໍລະນີສ່ວນໃຫຍ່ມາຈາກປີ 2019 ແລະ ສະທ້ອນໃຫ້ເຫັນສະຖານະການກ່ອນການແຜ່ລະບາດ. ການປະເມີນຂອງ UIS ຂອງ 129 ໜ່ວຍງານວາງແຜນຂອງກະຊວງ ສຶກສາທິການ ລະຫວ່າງເດືອນມິຖຸນາ ຫາ ເດືອນກັນຍາ ປີ 2020 ພົບວ່າ ສອງສ່ວນສາມ ຕ້ອງຊັກຊ້າໃນການເກັບຂໍ້ມູນ ຫຼື ເລື່ອນອອກໄປສູ່ປີຮຽນ ຕໍ່ໄປ ເນື່ອງຈາກພວກເຂົາ ໄດ້ຮັບຜົນກະທົບປານກາງ ຫຼື ຮ້າຍແຮງຕໍ່ ຄວາມສາມາດໃນການຕອບສະໜອງຄວາມຕ້ອງການໃນການລາຍງານ. ການບໍລິຫານການສໍາຫຼວດ ຍັງໄດ້ຮັບຜົນກະທົບຢ່າງຮ້າຍແຮງໃນລະຫວ່າງ ການແຜ່ລະບາດເຊັ່ນກັນ.

ບາງໂຄງການສໍາຫຼວດຄົວເຮືອນຂະໜາດໃຫຍ່ ໄດ້ປ່ຽນໄປນໍາໃຊ້ການສໍາຫຼວດ ທາງໂທລະສັບ. ແຕ່ການສໍາຫຼວດຫຼາຍກວ່າ 25 ຄັ້ງທີ່ໄດ້ວາງແຜນ ຫຼື ດໍາເນີນໄປແລ້ວໃນປີ 2020 ປະສົບກັບຄວາມຊັກຊ້າຂອງວຽກງານ ພາກສະໜາມ. ຜົນໄດ້ຮັບ ຈະຕ້ອງນໍາມາພິຈາລະນາຢ່າງຮອບຄອບ ວ່າຈະມີການລົງພາກສະໜາມເມື່ອໃດ ແລະ ໂຮງຮຽນໃກ້ຄຽງ ໄດ້ເປີດໃນ ເວລານັ້ນ ຫຼື ບໍ່. ນອກຈາກນີ້, ການປະເມີນການຮຽນຮູ້ ກໍໄດ້ຮັບຜົນກະທົບ. ຕົວຢ່າງ ໂຄງການການປະເມີນນັກຮຽນນານາຊາດ (PISA) ໃນຮອບປີ 2021 ໄດ້ຖືກເລື່ອນອອກໄປໜຶ່ງປີ.

ຄວາມຫຼາກຫຼາຍຂອງແຫຼ່ງຂໍ້ມູນ, ປະກອບກັບຄວາມແຕກຕ່າງຂອງ ວິທີການ, ຕົວຢ່າງ, ເວລາ ແລະ ສະພາບການ, ໝາຍຄວາມວ່າ ວຽກງານປະກອບຄໍາບັນຍາຍກ່ຽວກັບຜົນກະທົບຂອງພະຍາດໂຄວິດ-19 ຍັງມີຄວາມທ້າທາຍ. ເນື່ອງຈາກບໍ່ມີຂໍ້ມູນການບໍລິຫານ, ການສໍາຫຼວດໃນ ປະເທດເອທິໂອເປຍ, ກາບາ ແລະ ເຊເນການ ໄດ້ສະໜອງຫຼັກຖານ ເບື້ອງຕົ້ນວ່າເດັກນ້ອຍກໍາລັງເຂົ້າໂຮງຮຽນຄືນເມື່ອເປີດຄືນໃໝ່, ເຖິງແມ່ນວ່າ ການເພີ່ມຂຶ້ນຂອງອັດຕາການຄ້າງຫ້ອງ ອາດໝາຍຄວາມວ່າການອອກ ໂຮງຮຽນ ໄດ້ຖືກເລື່ອນອອກໄປ.

ຄວາມກັງວົນຕົ້ນຕໍສອງຢ່າງ ແມ່ນຜົນກະທົບຂອງການຢຸດສະງັກຂອງການ ຮຽນຮູ້ ແລະ ການແຈກຢາຍທີ່ບໍ່ເທົ່າທຽມກັນຂອງການຮຽນຮູ້ທາງໄລ ແລະ ຜົນກະທົບອື່ນໆຕໍ່ນັກຮຽນທີ່ດ້ອຍໂອກາດຫຼາຍຂຶ້ນ.

ໃນທົ່ວໂລກມີເດັກນ້ອຍໜຶ່ງ 1 ໃນ 3 ຄົນ ແລະ 1 ໃນ 6 ຄົນຂອງ ເດັກນ້ອຍທີ່ທຸກຍາກທີ່ສຸດ ເຂົ້າເຖິງອິນເຕີເນັດໄດ້. ດັ່ງນັ້ນ, ຮູບແບບການ ຮຽນຮູ້ທາງໄກທີ່ມີປະສິດທິຜົນສູງສຸດບໍ່ກວມເອົານັກຮຽນສ່ວນໃຫຍ່ ແລະ ຄວາມພະຍາຍາມທີ່ຈະຂະຫຍາຍຮູບແບບດັ່ງກ່າວ ຈະເຮັດໃຫ້ເກີດຄວາມ ເສຍຫາຍຕໍ່ຄວາມສະເໝີພາບໃນໄລຍະສັ້ນເຖິງໄລຍະກາງ. ການນໍາໃຊ້ ແອັບການຮຽນຮູ້ໃນມືຖື ຊຶ່ງໄດ້ຮັບຄວາມສົນໃຈຈາກສື່ມວນຊົນຫຼາຍ ແມ່ນ ວິທີການຮຽນຮູ້ທາງໄກທີ່ພົບໜ້ອຍທີ່ສຸດ ໃນການສໍາຫຼວດທົ່ວປະເທດໃນ ອະນຸພາກພື້ນຊາຮາຣາອາຟຣິກາ ຊຶ່ງນໍາໃຊ້ໂດຍເດັກນ້ອຍບໍ່ເກີນ 17% ໃນ ໄນຈີເຣຍ ແລະ 12% ໃນ ເອທິໂອເປຍ ແລະ ເກືອບຈະບໍ່ໄດ້ໃຊ້ ເລີຍໃນ ບູຄີນາຟາໂຊ, ມາລາວີ, ມາລີ ແລະ ອູການດາ.

ຜົນກະທົບຕໍ່ການຮຽນຮູ້ ຈະຂຶ້ນກັບໄລຍະເວລາຂອງການປິດໂຮງຮຽນ, ຮູບແບບການຮຽນຮູ້ທາງໄກ ແລະ ຂອບເຂດຂອງການສະໜັບສະໜູນ ນັກຮຽນ, ຊຶ່ງທັ້ງໝົດນີ້ແຕກຕ່າງກັນຢ່າງຫຼວງຫຼາຍລະຫວ່າງປະເທດ ແລະ ພາຍໃນປະເທດ. ການສຶກສາສໍາຫຼວດສ່ວນໃຫຍ່ ໄດ້ຖືກດໍາເນີນ ຢູ່ໃນປະເທດທີ່ມີລາຍໄດ້ສູງ. ໂດຍສະເລ່ຍ ໃນເຈັດປະເທດ, ການສູນເສຍ ການຮຽນຮູ້ເທົ່າກັບ 30% ຂອງປີຮຽນສໍາລັບຄະນິດສາດ ແລະ 35% ສໍາລັບການອ່ານ, ໂດຍສະເລ່ຍແລ້ວ ຖ້າໂຮງຮຽນ ຖືກປິດເປັນເວລາ ແປດອາທິດ. ແຕ່ໃນຝຣັ່ງ, ຜົນໄດ້ຮັບຂອງການອ່ານ ແລະ ຄະນິດສາດ ດີຂຶ້ນໃນບັນດານັກຮຽນຊັ້ນປະຖົມສຶກສາປີທີ 6.

ມີຫຼັກຖານທີ່ຊັດເຈນວ່າຜົນກະທົບແຕກຕ່າງກັນຕາມສະຖານະພາບ ເສດຖະກິດ-ສັງຄົມ. ໃນສະຫະລັດອາເມລິກາ, ການວິເຄາະອັດຕາການ ສອບເສັງນັກຮຽນຊັ້ນປະຖົມສຶກສາປີທີ 3 ຫາຊັ້ນມັດທະຍົມສຶກສາປີທີ 2 ຂອງນັກຮຽນໃນ 12 ລັດ ສະແດງໃຫ້ເຫັນວ່າການປ່ຽນຈາກຮູບແບບ ເຊິ່ງໜ້າໄປສູ່ຮູບແບບປະສົມ ຫຼື ອອນລາຍແບບເຕັມຮູບແບບ ເຮັດໃຫ້ ຜົນກະທົບທາງລົບຮຸນແຮງຂຶ້ນໂດຍສະເລ່ຍ 10 ຈຸດສ່ວນຮ້ອຍ ໃນວິຊາ ຄະນິດສາດ ແລະ 4 ຈຸດສ່ວນຮ້ອຍ ໃນພາສາອັງກິດ. ການສະຫຼັບໄປ ໃຊ້ຮູບແບບປະສົມ ຫຼື ອອນລາຍແບບເຕັມຮູບແບບ ໄດ້ຫຼຸດອັດຕາການ ເສັງຜ່ານລົງ 4 ຈຸດສ່ວນຮ້ອຍ ສໍາລັບເມືອງທີ່ບໍ່ມີນັກຮຽນຜິວດໍາ ຫຼື ເຊື້ອສາຍສະເປນ ແຕ່ 9 ຈຸດສ່ວນຮ້ອຍ ສໍາລັບເມືອງທີ່ມີປະຊາກອນ 50% ທີ່ເປັນນັກຮຽນຜິວດໍາ ແລະ ເຊື້ອສາຍສະເປນ.

ມີການຂາດແຄນຂອງການປະເມີນການຮຽນຮູ້ໂດຍກົງ ໃນບັນດາປະເທດ ທີ່ມີລາຍໄດ້ຕໍ່ໍາ ແລະ ປານກາງ. ຢູ່ເມືອງຊາວເປົາໂລ ປະເທດບຼາຊິລ, ນັກຮຽນຊັ້ນມັດທະຍົມສຶກສາ ໄດ້ຮຽນຮູ້ພຽງແຕ່ 27.5% ຂອງສິ່ງທີ່ເຂົາເຈົ້າ ຈະໄດ້ຮຽນຢູ່ໃນໂຮງຮຽນ ຖ້າບໍ່ມີພະຍາດລະບາດ; ນັກຮຽນທີ່ໂຮງຮຽນ ເປີດຄືນໃໝ່ ປະສົບກັບການສູນເສຍທາງການຮຽນຮູ້ໜ້ອຍລົງ. ໃນປະເທດ ໂຄລົມເບຍ, ນັກຮຽນເສັງໄດ້ຄະແນນຕໍ່ໍາກວ່າປີກ່ອນ 5 ຄະແນນ, ຊຶ່ງຄິດເປັນປະມານໜຶ່ງສ່ວນສີ່ຂອງປີຮຽນ. ໃນປະເທດອາຟຣິກາໃຕ້, ນັກຮຽນຊັ້ນປະຖົມສຶກສາປີທີ 2 ແລະ 4 ໄດ້ສູນເສຍທັກສະການອ່ານ ລະຫວ່າງ 57% ແລະ 81% ໃນປີ 2020, ທຽບກັບໝູ່ເພື່ອນກ່ອນການ ແຜ່ລະບາດຂອງພະຍາດ.

ບົດລາຍງານສະຖານະພາບການສຶກສາປະຈຳປີ ຊຶ່ງປະເມີນໂດຍ ພົນລະເມືອງໃນອາຊີໃຕ້ ສະແດງໃຫ້ເຫັນວ່າລະດັບການຮຽນຮູ້ໄດ້ຫຼຸດລົງໃນຊັ້ນປະຖົມ. ໃນລັດຊິນນະບົດຄາມາຕະກາຂອງປະເທດອິນເດຍ, ອັດຕາສ່ວນຂອງຜູ້ທີ່ສາມາດອ່ານຂໍ້ຄວາມຊັ້ນປະຖົມສຶກສາປີທີ 2 ໄດ້ ຫຼຸດລົງໃນບັນດານັກຮຽນທຸກຊັ້ນຮຽນ ແຕ່ການຫຼຸດລົງແມ່ນຮ້າຍແຮງທີ່ສຸດ ໃນບັນດານັກຮຽນຊັ້ນປະຖົມສຶກສາປີທີ 4 (ຈາກ 33% ເປັນ 18%) ໃນລະຫວ່າງປີ 2018 ຫາ 2020. ໃນປະເທດປາກິສະຖານ, ການສຳຫຼວດ ຂອງ 16 ເມືອງ ພົບວ່າມີການສູນເສຍການຮຽນຮູ້ທີ່ຄ້າຍຄືກັນກັບ ທັກສະພື້ນຖານໃນຊັ້ນປະຖົມສຶກສາປີທີ 1 ແລະ 3 ແຕ່ບໍ່ແມ່ນຢູ່ໃນ ຊັ້ນປະຖົມສຶກສາປີທີ 5.


ຫຼັກຖານທີ່ແຕກຕ່າງນີ້, ເມື່ອລວມເຂົ້າກັນແລ້ວ ໄດ້ຢັ້ງຢືນວ່າການປິດ ໂຮງຮຽນມີຜົນກະທົບທາງລົບຕໍ່ການຮຽນຮູ້ຂອງນັກຮຽນ. ຖ້ານຳນິດການ ສູນເສຍໄວ້ໃນແງ່ຂອງລະດັບຄວາມສາມາດຂັ້ນຕ່ຳຂອງ SDG 4, ຜົນກະທົບ ອາດຈະໃຫຍ່ຂຶ້ນໃນປະເທດທີ່ມີລາຍໄດ້ປານກາງຫຼາຍກວ່າປະເທດທີ່ມີ ລາຍໄດ້ຕ່ຳ ຊຶ່ງລະດັບເບື້ອງຕົ້ນຕ່ຳຫຼາຍ, ຫຼື ໃນປະເທດທີ່ມີລາຍໄດ້ສູງ ຊຶ່ງໂຮງຮຽນປິດເປັນໄລຍະເວລາທີ່ສັ້ນລົງ ແລະ ນັກຮຽນສາມາດເຂົ້າເຖິງ ການຮຽນຮູ້ອອນລາຍໄດ້ຫຼາຍຂຶ້ນ. ເຖິງຢ່າງໃດກໍຕາມ, ຫຼາຍໆດ້ານຍັງບໍ່ ທັນຮູ້ເທື່ອ, ລວມທັງລະດັບການຮຽນຮູ້ຈະກັບຄືນມາ ຫຼື ພະຍາດໂຄວິດ-19 ຈະມີຜົນກະທົບໃນໄລຍະຍາວຕໍ່ກັບການຮຽນຮູ້.

ເພື່ອຫຼຸດຜ່ອນຜົນກະທົບ, ປະເທດຕ່າງໆ ໄດ້ຂະຫຍາຍ ຫຼື ປັບປຸງປີ ການສຶກສາ ແລະ ໄດ້ໃຫ້ບູລິມະສິດບາງຂົງເຂດຂອງຫຼັກສູດ ຫຼື ທັກສະ ບາງຢ່າງ. ສອງສ່ວນສາມຂອງປະເທດ ໄດ້ລາຍງານການປະຕິບັດມາດ ຕະການແກ້ໄຂ ໃນລະດັບຊັ້ນປະຖົມ ແລະ ມັດທະຍົມສຶກສາ. ໃນປະເທດ ຟີລິບປິນ, ກະຊວງສຶກສາ ໄດ້ອອກຄຳແນະນຳໃຫ້ເປີດການສອນບຳລຸງ ໄລຍະ 6 ອາທິດ ໃຫ້ນັກຮຽນທີ່ໄດ້ຄະແນນຕ່ຳກວ່າ 75% ໃນການ ທົດລອງສອບເສັງທ້າຍປີ. ໂຄງການສອນພິເສດແຫ່ງຊາດ ໃນປະເທດ ອັງກິດ (ສະຫະລາຊະອານາຈັກ) ສະໜັບສະໜູນຫຼັກສູດສອນພິເສດ 15 ຊົ່ວໂມງ ສຳລັບນັກຮຽນທີ່ດ້ອຍໂອກາດເຖິງ 6 ລ້ານຄົນ.

ພະຍາດລະບາດ ໄດ້ສ້າງຄວາມທ້າທາຍທີ່ບໍ່ເຄີຍມີມາກ່ອນໃຫ້ກັບ**ຄູອາຈານ**. ການປິດໂຮງຮຽນ ພົບວ່າຄູອາຈານຫຼາຍຄົນບໍ່ໄດ້ກຽມພ້ອມສຳລັບການ ປ່ຽນໄປສູ່ການຮຽນຮູ້ທາງໄກ, ຄວາມບໍ່ແນ່ນອນກ່ຽວກັບບົດບາດຂອງ ເຂົາເຈົ້າ ແລະ ຄວາມບໍ່ຄຸ້ນເຄີຍກັບເຕັກໂນໂລຊີ. ໃນການສຳຫຼວດຄູອາຈານ ຫຼາຍກວ່າ 20,000 ຄົນໃນ 165 ປະເທດ, 39% ລະບຸວ່າ ສະຫວັດດີພາບ ທາງດ້ານຮ່າງກາຍ, ຈິດໃຈ ແລະ ສະຕິອາລົມຂອງເຂົາເຈົ້າ ໄດ້ຮັບຄວາມ ເສຍຫາຍໃນລະຫວ່າງການແຜ່ລະບາດຂອງພະຍາດ. ໃນທາງກົງກັນຂ້າມ, 50% ຂອງຜູ້ຕອບແບບສອບຖາມລະບຸວ່າ ເຂົາເຈົ້າຮູ້ສຶກກະຕືລືລົ້ນໃນ ອາຊີບຂອງຕົນ. ວິກິດການ ໄດ້ຕັ້ງຄຳຖາມກ່ຽວກັບການປ່ຽນແປງທີ່ຈຳເປັນ ໃນເນື້ອໃນຂອງການສຶກສາຄູ. ນອກເໜືອຈາກຄວາມຮູ້ທາງດ້ານເຕັກໂນໂລຊີ ແລ້ວ, ຄູອາຈານຈຳເປັນຕ້ອງຕອບສະໜອງຄວາມຕ້ອງການທາງດ້ານ ຈິດໃຈ-ສັງຄົມ-ອາລົມ ແລະ ທາງວິຊາການໃໝ່ຂອງນັກຮຽນ.

ການສຶກສາເພື່ອ**ການພັດທະນາແບບຍືນຍົງ** ແລະ **ພົນລະເມືອງໂລກ** ແມ່ນເປັນການຕອບໂຕ້ຕໍ່ສິ່ງທ້າທາຍຂອງໂລກທີ່ມີການເຊື່ອມໂຍງກັນ ຫຼາຍຂຶ້ນ ແຕ່ອະນາຄົດຂອງພວກເຂົາຍັງຢູ່ໃນຄວາມສ່ຽງ. ແຕ່ພະຍາດ ໂຄວິດ-19 ຍັງໄດ້ເຜີຍໃຫ້ເຫັນເຖິງຄວາມລົ້ມເຫຼວຂອງລະບົບການສຶກສາ ໃນການເຮັດຕາມອຸດົມການແຫ່ງຄວາມສາມັກຄີ ແລະ ການຮ່ວມມືຫຼາຍຝ່າຍ, ແລະ ຄວາມບໍ່ສະເໝີພາບທີ່ເພີ່ມຂຶ້ນຢູ່ພາຍໃນ ແລະ ລະຫວ່າງປະເທດ ສ້າງຄວາມເປັນຫ່ວງທາງດ້ານສິນລະທຳ. ໂລກ ໄດ້ເຫັນການຕອບໂຕ້ ຫຼາຍຢ່າງໃນທິດທາງກົງກັນຂ້າມກັນ, ຈາກການສັກຢາປ້ອງກັນຊາດນິຍົມ ໄປຈົນເຖິງນະໂຍບາຍຊັກຄົນຕ່າງຊາດ ແລະ ການແຜ່ກະຈາຍຂອງ ຄວາມເຊື່ອທີ່ມີລັກສະນະເລືອກປະຕິບັດ. ພະຍາດໂຄວິດ-19 ຍັງເຮັດໃຫ້ ຄວາມຮູ້ດ້ານສຸຂະພາບເປັນສູນກາງຂອງຄວາມສົນໃຈ.

ຮູບທີ 4:
ໃນຊ່ວງເວລາຫຼາຍກວ່າ 20 ເດືອນ, ໂຮງຮຽນປິດບາງສ່ວນ ເປັນເວລາຫຼ່ຽນ 55% ຂອງມື້.
ອັດຕາສ່ວນຂອງມື້ ໂດຍສະຖານະການເປີດໂຮງຮຽນ, ເດືອນກຸມພາ ປີ 2020 ຫາ ເດືອນຕຸລາ ປີ 2021



GEM StatLink: https://bit.ly/GEM2021_Summary_fig4
ແຫຼ່ງຂໍ້ມູນ: UIS (2021c).

ຜົນກະທົບສຸດທິຂອງການປິດໂຮງຮຽນ ແລະ ການເປີດຮຽນຄືນໃໝ່ ຈາກການຕິດເຊື້ອທີ່ຮຸນແຮງໃນລະດັບສັງຄົມ ຍັງບໍ່ສາມາດສະຫຼຸບໄດ້. ແຕ່ການຫຼຸດຜ່ອນຄວາມສ່ຽງຕໍ່ການຕິດເຊື້ອໃນ**ສະພາບແວດລ້ອມການຮຽນຮູ້** ແມ່ນເປັນໄປໄດ້ໂດຍຜ່ານມາດຕະການຕ່າງໆຕັ້ງແຕ່ການໃສ່ຜ້າອັດດັງ, ການຮັກສາໄລຍະຫ່າງ ແລະ ການລ້າງມື ຈົນເຖິງການຫຼີກລ່ຽງການໃຊ້ສິ່ງຂອງຮ່ວມກັນ ແລະ ການຂ້າເຊື້ອພື້ນຜິວທີ່ຖືກສໍາຜັດເລື້ອຍໆ. ວິທີແກ້ໄຂທີ່ມີເຕັກໂນໂລຊີຕ່ໍາ ເພື່ອປັບປຸງການລະບາຍອາກາດທີ່ດີຂຶ້ນ ລວມມີການໃຊ້ພື້ນທີ່ກາງແຈ້ງ ແລະ ການເປີດປ່ອງຢ້ຽມທີ່ເໝາະສົມຕາມລະດູການ. ໜ້ອຍກວ່າ 10% ຂອງບັນດາປະເທດທີ່ມີລາຍໄດ້ຕ່ໍາລາຍງານວ່າ ມີມາດຕະການພື້ນຖານພຽງພໍເຊັ່ນ: ສະບູ, ນ້ໍາສະອາດ, ຜ້າອັດດັງ ແລະ ສິ່ງອໍານວຍຄວາມສະດວກດ້ານສຸຂາພິບານເພື່ອຮັບປະກັນຄວາມປອດໄພຂອງນັກຮຽນ ແລະ ພະນັກງານທຸກຄົນ; ສັດສ່ວນຂອງປະເທດທີ່ມີລາຍໄດ້ສູງແມ່ນ 96%.

ຫຼັກຖານບາງຢ່າງທີ່ປະກົດຂຶ້ນວ່າພະຍາດລະບາດ ແລະ ຜົນຮ້າຍຂອງມັນຈະເຮັດໃຫ້**ງົບປະມານ**ດ້ານການສຶກສາຖືກບີບໂດຍລາຍໄດ້ຂອງລັດຖະບານທີ່ຫຼຸດລົງ ແລະ ຄວາມຕ້ອງການທີ່ເພີ່ມຂຶ້ນຈາກຂະແໜງການອື່ນໆ. ຂໍ້ມູນທີ່ເກັບກໍາໂດຍ UIS ໃນ 71 ປະເທດ ຊີ້ໃຫ້ເຫັນວ່າ ສັດສ່ວນການໃຊ້ຈ່າຍທາງການສຶກສາໂດຍສະເລ່ຍຈາກການໃຊ້ຈ່າຍທັງໝົດຫຼຸດລົງຈາກ 14.1% ໃນປີ 2019 ເປັນ 13.5% ໃນປີ 2021.

ໃນ**ການສຶກສາກ່ອນໄວຮຽນ**, ເຖິງແມ່ນວ່າມີການຮຽນຮູ້ທາງໄກກໍຕາມ, ແຕ່ສິ່ງທ້າທາຍຕ່າງໆ ລວມມີ: ການຝຶກອົບຮົມຄູທີ່ບໍ່ພຽງພໍ, ການດັດປັບການຮຽນຮູ້ທາງໄກຂອງເດັກນ້ອຍ, ການຕິດຕາມ ແລະ ການປະເມີນພັດທະນາການຂອງເດັກນ້ອຍ ແລະ ການຮັບມືກັບສະພາບແວດລ້ອມຂອງບ້ານທີ່ດ້ອຍໂອກາດທີ່ການສະໜັບສະໜູນບໍ່ພຽງພໍ. ການປິດການນໍາໃຊ້ສິ່ງອໍານວຍຄວາມສະດວກ ແລະ ການພົວພັນແບບຈໍາກັດ ເຮັດໃຫ້ເດັກນ້ອຍຂາດການກະຕຸ້ນທາງດ້ານສັງຄົມນອກບ້ານ ແລະ ສະຕິປັນຍາຂອງເຂົາເຈົ້າ.

ການຝຶກອົບຮົມດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ ໄດ້ຮັບຄວາມເດືອດຮ້ອນ ເຖິງ 80% ໂດຍສະເພາະດ້ານທັກສະພາກປະຕິບັດ ແລະ ທັກສະທາງສັງຄົມອື່ນໆ ຊຶ່ງຄວນຈະໄດ້ຮັບການປະຕິບັດຕົວຈິງຂອງແຕ່ລະຄົນ. ການກະກຽມຄູອາຈານ ແມ່ນບັນຫາໃຫຍ່, ເນື່ອງຈາກພວກເຂົາຍັງຂາດຄວາມສາມາດໃນການສອນທາງໄກ, ໃນຂະນະທີ່ຫຼັກສູດມາດຕະຖານດ້ານການສຶກສາຂອງພວກເຂົາຢຸດສະງັກລົງ. ສິ່ງສໍາຄັນ ຄືຕ້ອງນໍາໃຊ້ຫຼາຍວິທີການ ແລະ ບໍ່ອີງໃສ່ພຽງແຕ່ແນວທາງແກ້ໄຂທີ່ໃຊ້ເຕັກໂນໂລຊີສູງຢ່າງດຽວ ໃນການຮຽນຮູ້ທາງໄກ. ໃນເວລາດຽວກັນ, ກໍຍັງມີຕົວຢ່າງຕ່າງໆຂອງຄວາມຍືດຫຍຸ່ນທີ່ການຝຶກອົບຮົມຍັງສືບຕໍ່ເພື່ອສະໜັບສະໜູນຂະແໜງການທີ່ໄດ້ຮັບຜົນກະທົບສູງ.

ປະສົບການໃນການຮຽນຮູ້ທາງໄກ ມີຢູ່ໃນ**ການສຶກສາຊັ້ນສູງ**ຫຼາຍກວ່າລະດັບການສຶກສາອື່ນໆ. ໃນການສໍາຫຼວດ 53 ປະເທດ, 3 ປະເທດລາຍງານວ່າ ໄດ້ປ່ຽນໄປສູ່ການສຶກສາຊັ້ນສູງແບບອອນລາຍຢ່າງເຕັມຮູບແບບ, 19 ປະເທດ ມີວິທີການຮຽນອອນລາຍເປັນຫຼັກ ແລະ 28 ປະເທດ ໄດ້ໃຊ້ວິທີການປະສົມຂອງການຮຽນຮູ້ທາງໄກ ແລະ ແບບເຊິ່ງໜ້າ. ປະເທດທີ່ມີລາຍໄດ້ປານກາງ, ຕັ້ງແຕ່ໂຄລົມເບຍ ໄປຈີນເຖິງອີຍິບ ແລະ ຈາກຈີນໄປຈີນເຖິງສະຫະພັນຣັດເຊຍ ໄດ້ພັດທະນາຊ່ອງທາງອອນລາຍ. ແຕ່ໃນການສໍາຫຼວດຂອງນັກສຶກສາ ໃນອະນຸພາກພື້ນຊາຮາຣາອາຟຣິກາ, ມີພຽງແຕ່ 39% ທີ່ໄດ້ລົງທະບຽນເຂົ້າຮຽນຢູ່ໃນສະຖາບັນທີ່ສະເໜີທາງເລືອກການຮຽນຮູ້ທາງໄກ. ປະເທດໃນສະຫະພາບເອີຣົບ, 41% ຂອງນັກຮຽນທີ່ເຮັດວຽກໃນລະຫວ່າງຮຽນ ຕິກາງານ, 29% ຕິກາງານຊົ່ວຄາວ ແລະ 12% ຕິກາງານຖາວອນ.

ຈຸດໝາຍປາຍທາງປະເທດທີ່ໃຊ້ພາສາອັງກິດທີ່ເປັນທີ່ນິຍົມຂອງນັກສຶກສານານາຊາດ ເຊັ່ນ: ອິດສະຕາລີ, ນິວຊີແລນ, ສະຫະລາຊະອານາຈັກ ແລະ ສະຫະລັດອາເມລິກາ ປະສົບກັບການຫຼຸດລົງຂອງ**ນັກຮຽນເຂົ້າມາຮຽນ**. ໂດຍມີເຖິງໜຶ່ງສ່ວນສາມຂອງນັກຮຽນໃນອິດສະຕາລີ ທີ່ເປັນນັກຮຽນຕ່າງປະເທດ, ເຮັດໃຫ້ສະຖາບັນການສຶກສາຊັ້ນສູງຕົກຢູ່ໃນອັນຕະລາຍທີ່ຮ້າຍແຮງທາງດ້ານການເງິນ. ນັກສຶກສາ ແລະ ນັກສຶກສາທີ່ຈົບແລ້ວ ໄດ້ຕິດຢູ່ໃນປະເທດເຈົ້າບ້ານ ເມື່ອພວກເຂົາຄາດຫວັງວ່າຈະໄດ້ກັບຄືນປະເທດຂອງຕົນ.

ທັກສະ**ການຮູ້ໜັງສື ແລະ ການຄິດໄລ່ຂອງຜູ້ໃຫຍ່** ແມ່ນມີຄວາມສໍາຄັນຕໍ່ການຮູ້ໜັງສືດ້ານສຸຂະພາບ ແລະ ຂະບວນການສັກວັກຊີນທີ່ມີປະສິດທິຜົນ ແລະ ຕ້ອງເປັນສ່ວນໜຶ່ງທີ່ສໍາຄັນຂອງການຕອບໂຕ້ສຸກເສີນສາທາລະນະ ແລະ ແຜນການຟື້ນຟູ. ໃນປະເທດອິນເດຍ, ຜູ້ຍິງທີ່ເຂົ້າຮ່ວມໂຄງການການຮູ້ໜັງສືສໍາລັບຜູ້ໃຫຍ່ ມີຄວາມຮູ້ກ່ຽວກັບພະຍາດໂຄວິດ-19 ສູງກວ່າຜູ້ທີ່ບໍ່ຮູ້ໜັງສື. ການຄິດໄລ່ ເປັນຕົວຊີ້ບອກທີ່ສອດຄ່ອງກັນຫຼາຍທີ່ສຸດໃນການຫຼຸດຜ່ອນຄວາມອ່ອນໄຫວຕໍ່ກັບຂໍ້ມູນທີ່ບໍ່ຖືກຕ້ອງກ່ຽວກັບພະຍາດໂຄວິດ-19. ເຖິງແມ່ນວ່າກ່ອນການແຜ່ລະບາດຂອງພະຍາດ, ການຮຽນຮູ້ທາງໄກ ແມ່ນຮູບແບບການສອນທີ່ບໍ່ໄດ້ຮັບຄວາມນິຍົມ ສໍາລັບຫຼັກສູດການຮູ້ໜັງສືເບື້ອງຕົ້ນ. ໃນປະເທດເຢເມັນ, ກົດລະບຽບ ໄດ້ຊີ້ແຈ້ງວ່າ ຫ້ອງຮຽນທີ່ສອດຄ່ອງກັບຫຼັກສູດປະຖົມ ຈະຕ້ອງໄດ້ຮຽນແບບເຊິ່ງໜ້າ.

ຄາດໝາຍທີ 4.1 ການສຶກສາຊັ້ນປະຖົມ ແລະ ມັດທະຍົມສຶກສາ

ກ່ອນການແຜ່ລະບາດຂອງພະຍາດ, ເດັກນ້ອຍ, ໄວລຸ້ນ ແລະຊາວໜຸ່ມ 260 ລ້ານຄົນ ໃນໄວຮຽນຊັ້ນປະຖົມ ແລະ ມັດທະຍົມສຶກສາ ໄດ້ອອກໂຮງຮຽນ. ຕົວເລກດັ່ງກ່າວ ເກືອບຈະບໍ່ເໜັງຕີງເລີຍໃນຮອບໜຶ່ງທົດສະວັດ. ໂຄງການຮ່ວມມືລະຫວ່າງບົດລາຍງານ GEM ແລະ UIS ກຳລັງດຳເນີນການເພື່ອສອດແຊກ ແລະ ແບ່ງປັນແຫຼ່ງຂໍ້ມູນຂອງການສຳຫຼວດການບໍລິຫານ ແລະ ຄົວເຮືອນ, ຕື່ມຂໍ້ມູນໃສ່ຊ່ອງວ່າງຂອງຂໍ້ມູນການບໍລິຫານ ແລະ ພັດທະນາໄລຍະເວລາທີ່ສອດຄ່ອງກັນ. ສິ່ງນີ້ ສ້າງຂຶ້ນຈາກທີມງານບົດລາຍງານ GEM ທີ່ລວບລວມແຫຼ່ງຂໍ້ມູນຫຼາຍແຫຼ່ງເພື່ອປະເມີນອັດຕາຄວາມສຳເລັດ. ເວັບໄຊໃໝ່ VIEW (www.education-estimates.org) ເຮັດໃຫ້ວິທີການ ສາມາດເຂົ້າເຖິງໄດ້ຫຼາຍປະເທດ. ອັດຕາການຮຽນຈົບຊັ້ນປະຖົມສຶກສາ ໃກ້ ຫຼື ເກີນ 90% ໃນທຸກພາກພື້ນ ຍົກເວັ້ນອະນຸພາກພື້ນຊາຮາຣາອາຟຣິກາ ທີ່ມີພຽງແຕ່ເດັກນ້ອຍສອງໃນສາມຄົນ ທີ່ຮຽນຈົບຊັ້ນປະຖົມສຶກສາ, ເຖິງແມ່ນວ່າອັດຕາຈະເພີ່ມຂຶ້ນຈາກ 65% ເປັນ 76% ຖ້າຫາກຜູ້ທີ່ຮຽນຈົບຊັ້ນປະຖົມສຶກສາປີສຸດທ້າຍຊ້າຫຼາຍ ຈະລວມຢູ່ນຳ **(ຮູບທີ 5)**. ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ, 23% ຂອງເດັກນ້ອຍໃນໂຮງຮຽນປະຖົມສຶກສາ ແລະ 31% ຂອງໄວລຸ້ນໃນໂຮງຮຽນມັດທະຍົມສຶກສາຕອນຕົ້ນ ແມ່ນມີອາຍຸເກີນເກນຢ່າງຫຼວງຫຼາຍ, ໂດຍອະທິບາຍວ່າ ເປັນຫຍັງພາກພື້ນນີ້ມີຊ່ອງວ່າງທີ່ໃຫຍ່ທີ່ສຸດ ລະຫວ່າງອັດຕາການສຳເລັດທັນເວລາ ແລະ ອັດຕາເສັງຈົບຊັ້ນລວມ.

ໃນກຸ່ມປະເທດທີ່ວ່ໂລກທີ່ກ່ວມຢູ່ໃນ ໂຄງການທ່າອ່ຽງໃນການສຶກສາຄະນິດສາດ ແລະ ວິທະຍາສາດສາກົນ (Trends in International Mathematics and Science Study ຫຼື TIMSS), ການເຕີບໂຕສະເລ່ຍປະຈຳປີລະຫວ່າງ ປີ 2015 ແລະ 2019 ໃນສັດສ່ວນຂອງນັກຮຽນທີ່ບັນລຸລະດັບຄວາມສາມາດຂັ້ນຕ່ຳສຸດແມ່ນ 0.3 ຈຸດສ່ວນຮ້ອຍຢູ່ຂັ້ນປະຖົມສຶກສາປີທີ 4 ແລະ 0.5 ຈຸດສ່ວນຮ້ອຍ ຢູ່ໃນຂັ້ນມັດທະຍົມສຶກສາ ປີທີ 2. ປະເທດຕ່າງໆທີ່ຄ່າສະເລ່ຍເກີນເຫຼົ່ານີ້ ລວມມີປະເທດຊີລີ, ຊຶ່ງ ສັດສ່ວນເພີ່ມຂຶ້ນຈາກ 41% ໃນປີ 2003 ເປັນ 57% ໃນປີ 2011 ແລະ 70% ໃນປີ 2019, ໝາຍຄວາມວ່າ ອັດຕາການເຕີບໂຕໄວກ່ວ່າ ຄ່າສະເລ່ຍຢ່າງໜ້ອຍສາມເທ່ົ. ຢູ່ບ່ອນອື່ນ ເຊັ່ນ ຈໍແດນ ແລະ ໂຣມາເນຍ, ມີການຂະຫຍາຍຕົວໜ້ອຍ ຫຼື ບໍ່ມີເລີຍ. ການບັນລຸ 10% ສຸດທ້າຍ ເປັນການພິສູດຄວາມທ້າທາຍ ເຖິງແມ່ນວ່າຈະຢູ່ໃນບ່ອນທີ່ມີຊັບພະຍາກອນທີ່ດີກໍຕາມ. ໃນສະຫະລັດອາເມລິກາ, 86% ຂອງນັກຮຽນ ໄດ້ບັນລຸມາດຖານສາກົນ TIMSS ໃນລະດັບຕ່ຳ ໃນປີ 1995 ແລະ 87% ໃນປີ 2019; ໃນນິວຊີແລນ ໄດ້ຫຼຸດລົງຢ່າງຕໍ່ເນື່ອງຈາກ 89% ໃນປີ 1995 ເປັນ 82% ໃນປີ 2019.


ຄາດໝາຍທີ 4.2 ການສຶກສາກ່ອນໄວຮຽນ

ຂໍ້ມູນກ່ຽວກັບດັດຊະນີການພັດທະນາເດັກກ່ອນໄວຮຽນ (Data on the Early Childhood Development Index) ສຳລັບເດັກອາຍຸ 36 ຫາ 59 ເດືອນ ສະແດງໃຫ້ເຫັນວ່າຊ່ອງວ່າງການພັດທະນາສ່ວນໃຫຍ່ແມ່ນຄົງຕົວ ຫຼື ເພີ່ມຂຶ້ນ. ວິທີການຂອງຕົວຊີ້ບອກນີ້, ຊຶ່ງເກັບກຳອັດຕາສ່ວນພັດທະນາການເດັກນ້ອຍ ໃນການຕິດຕາມດ້ານສຸຂະພາບ, ການຮຽນຮູ້ ແລະ ຄວາມເປັນຢູ່ທີ່ດີທາງດ້ານຈິດສັງຄົມ ໄດ້ຖືກປັບປຸງຢ່າງລະອຽດ. ການຮຽນຮູ້ເລີ່ມຕົ້ນຢູ່ໃນບ້ານ. ໃນປີ 2012-2019, 62% ຂອງເດັກນ້ອຍ ໄດ້ມີສ່ວນຮ່ວມໃນກິດຈະກຳ 4 ຢ່າງ ຫຼື ຫຼາຍກ່ວ່ານັ້ນ ໂດຍຜູ້ໃຫຍ່ໃນຄົວເຮືອນ ຢູ່ໃນກຸ່ມປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ. ອັດຕາສ່ວນຢູ່ຕ່ຳກ່ວ່າ 20% ໃນປະເທດແກມເບຍ, ເຊຣາລີໂອນ ແລະ ໂຕໂກ. ຂໍ້ຈຳກັດທີ່ສຳຄັນກ່ຽວກັບກິດຈະກຳກະຕຸ້ນພັດທະນາການ ເຊັ່ນການອ່ານຮ່ວມກັນ

ຮູບທີ 5:

ຕົວຊີ້ບອກຂອງການສຳເລັດການສຶກສາທັນເວລາ ໄດ້ຄາດຄະເນຈຳນວນເດັກນ້ອຍທີ່ຮຽນຈົບໃນທ້າຍທີ່ສຸດນັ້ນ ຕ່ຳເກີນໄປຢ່າງເຫັນໄດ້ຊັດເຈນ, ໂດຍສະເພາະໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ.

ອັດຕາການສຳເລັດການສຶກສາ ແລະ ການສຳເລັດໃນທ້າຍທີ່ສຸດ, ແບ່ງຕາມພາກພື້ນ, ປີ 2000-2020



GEM StatLink: https://bit.ly/GEM2021_Summary_fig5

ແຫຼ່ງຂໍ້ມູນ: ການວິເຄາະຂໍ້ມູນການສຳຫຼວດຄົວເຮືອນ ຂອງທີມງານບົດລາຍງານ GEM.

ແມ່ນການມີໜັງສືອ່ານ. ໂດຍສະເລ່ຍແລ້ວ, ໜ້ອຍກວ່າໜຶ່ງສ່ວນສີ່ຂອງ ເດັກນ້ອຍອາຍຸຕ່ຳກວ່າ 5 ປີ ມີປຶ້ມຢ່າງໜ້ອຍສາມຫົວຢູ່ເຮືອນ. ໃນເຄິ່ງ ໜຶ່ງຂອງບັນດາປະເທດ, ເດັກນ້ອຍໜ້ອຍກວ່າ 1 ໃນ 10 ຄົນ ມີປຶ້ມອ່ານ; 8 ປະເທດໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ, ມີເດັກນ້ອຍໜ້ອຍ ກວ່າ 1% ມີປຶ້ມອ່ານ.

ສິດທິໃນການສຶກສາເລີ່ມຕົ້ນຕັ້ງແຕ່ເກີດ. ເມື່ອເດັກນ້ອຍຮອດອາຍຸ 3 ປີ, 90% ຂອງສະໝອງໄດ້ຮັບການພັດທະນາຂຶ້ນ. ການມີສ່ວນຮ່ວມຂອງ ເດັກອາຍຸຕ່ຳກວ່າ 3 ປີ ເຂົ້າໃນການເບິ່ງແຍງດູແລເດັກກ່ອນໄວຮຽນ ແລະ ຫຼັກສູດການສຶກສາກ່ອນໄວຮຽນ ມີທ່າອ່ຽງຖືກຈຳກັດ, ເຖິງວ່າຈະ ບັນລຸຫຼາຍກວ່າ 20% ສຳລັບອາຍຸ 0 ຫາ 1 ປີ ແລະ ຫຼາຍກວ່າ 60% ສຳລັບອາຍຸ 2 ປີ ໃນຫຼາຍປະເທດທີ່ມີລາຍໄດ້ປານກາງ ແລະ ສູງ. ແມ່ນແຕ່ຢູ່ໃນປະເທດທີ່ມີລາຍໄດ້ສູງ, ການເຂົ້າເຖິງການດູແລເດັກກ່ອນ ໄວຮຽນ ແລະ ການສຶກສາກ່ອນໄວຮຽນ ຍັງຂຶ້ນກັບພື້ນຖານເສດຖະກິດ - ສັງຄົມຫຼາຍ. ໃນປະເທດຝຣັ່ງ ແລະ ໄອແລນ, ຄວາມແຕກຕ່າງຂອງ ການເຂົ້າຮຽນຂອງເດັກລະຫວ່າງ 0 ຫາ 2 ປີ ລະຫວ່າງຄອບຄົວທີ່ ຫຼາຍໜ້າ ແລະ ຮັ່ງມີລ້ຳລວຍ ມີຫຼາຍກວ່າ 50 ຈຸດສ່ວນຮ້ອຍ. ໃນທົ່ວໂລກ, ເດັກນ້ອຍ 75% ໄດ້ເຂົ້າຮຽນໃນການສຶກສາກ່ອນຊັ້ນປະຖົມ 1 ປີ ກ່ອນ ອາຍຸເຂົ້າຮຽນປະຖົມຢ່າງເປັນທາງການໃນປີ 2020. ອັດຕາເຂົ້າຮຽນ ສຸດທິທີ່ຖືກປັບຂຶ້ນໃນປະເທດທີ່ມີລາຍໄດ້ຕ່ຳ (45%) ແມ່ນສູງເປັນເຄິ່ງ ໜຶ່ງຂອງປະເທດທີ່ມີລາຍໄດ້ສູງ (91%).

ຄາດໝາຍ 4.3 ການສຶກສາດ້ານເຕັກນິກວິຊາຊີບ, ອາຊີວະສຶກສາ, ການສຶກສາຊັ້ນສູງ ແລະ ການສຶກສາ ຜູ້ໃຫຍ.


ການສຶກສາດ້ານເຕັກນິກວິຊາຊີບ ແລະ ອາຊີວະສຶກສາ ຍັງຂາດທຶນຮອນ ແລະ ມັກຈະຖືກລະເລີຍຢູ່ໃນຫຼາຍປະເທດ, ເຖິງແມ່ນວ່າປະເທດຕ່າງໆ ລວມທັງອາເມເນຍ, ເບລຊິນ, ບູຣຸນດີ, ຄອສຕາຣິກາ, ອິນໂດເນເຊຍ ແລະ ອູຣຸກວາຍ ໄດ້ເພີ່ມອັດຕາການເຂົ້າຮຽນຢ່າງຫຼວງຫຼາຍໃນ 15 ປີ ຜ່ານມາ. ໂຮງຮຽນມັດທະຍົມອາຊີວະສຶກສາ ອາດຈະບໍ່ເບິ່ງຄືວ່າເປັນທາງ ເລືອກທີ່ໜ້າສົນໃຈ, ຖ້າບໍ່ມີໃບປະກາດສະນີຍະບັດວິຊາຊີບທີ່ແຕກຕ່າງ ຈາກໃບປະກາດສະນີຍະບັດຊັ້ນມັດທະຍົມສຶກສາທົ່ວໄປ, ທີ່ສະເໜີທາງ ເລືອກໃນການສືບຕໍ່ການສຶກສາຊັ້ນສູງໂດຍກົງ, ກໍລະນີນີ້ແມ່ນສະພາບທີ່ ເຫັນຢູ່ໃນໜຶ່ງໃນສີ່ຂອງປະເທດຕ່າງໆ. ໃນທາງກົງກັນຂ້າມ, ມີ 30% ຂອງບັນດາປະເທດ, ນັກຮຽນໂຮງຮຽນມັດທະຍົມອາຊີວະສຶກສາທີ່ຮຽນຈົບ ທຸກຄົນ ສາມາດເຂົ້າເຖິງການສຶກສາຊັ້ນສູງໄດ້ໂດຍກົງ.

ອັດຕາສ່ວນການເຂົ້າຮຽນລວມທົ່ວໂລກສຳລັບການສຶກສາຊັ້ນສູງແມ່ນ 39%, ຊຶ່ງຍັງສືບຕໍ່ການເຕີບໂຕສະເລ່ຍຢ່າງຕໍ່ເນື່ອງປະມານ 1 ຈຸດສ່ວນຮ້ອຍ ຕໍ່ປີນັບຕັ້ງແຕ່ປີ 2000. ຂໍ້ມູນການບໍລິການເຫຼົ່ານີ້ ບໍ່ເອກະພາບກັບຂໍ້ມູນ ການສຳຫຼວດກ່ຽວກັບການເຂົ້າຮຽນສະເໜີໄປ **(ຮູບທີ 6)**. ການລົງທະບຽນ ການເຂົ້າຮຽນ ອາດຈະຄາດຄະເນຕ່ຳກວ່າຄວາມເປັນຈິງ ຖ້ານັກຮຽນຫຼາຍຄົນ ເຂົ້າຮຽນໃນສະຖາບັນທີ່ບໍ່ໄດ້ຖືກນັບເຂົ້າໃນສະຖິຕິທາງການເພາະວ່າ

ຮູບທີ 6:

ຂໍ້ມູນການລົງທະບຽນເຂົ້າຮຽນໃນການສຶກສາຊັ້ນສູງ ອາດຈະຄາດຄະເນເກີນ ຫຼື ຕ່ຳກວ່າການເຂົ້າຮຽນຕົວຈິງ

ອັດຕາການເຂົ້າຮຽນ ແລະ ການລົງທະບຽນເຂົ້າຮຽນ ໃນການສຶກສາຊັ້ນສູງ ປີ 2015-2019



GEM StatLink: https://bit.ly/GEM2021_Summary_fig6

ແຫຼ່ງຂໍ້ມູນ: ຖານຂໍ້ມູນຂອງ UIS.

ພວກເຂົາຂາດການຍອມຮັບ ຫຼື ການຮັບຮອງ. ໃນທາງກົງກັນຂ້າມ, ການລົງທະບຽນການເຂົ້າຮຽນ ອາດຈະຄາດຄະເນເກີນກວ່າຄວາມເປັນຈິງ ຖ້ານັກຮຽນຫຼາຍຄົນ ໄດ້ລົງທະບຽນພຽງແຕ່ໃນນາມເທົ່ານັ້ນ, ໂດຍສະເພາະ ບ່ອນທີ່ຄ່າຮຽນບໍ່ເສຍຄ່າ ແລະ ສະຖານະພາບນັກສຶກສາມາພ້ອມກັບ ການບໍລິການທີ່ໄດ້ຮັບການອຸດໜູນ. ນອກຈາກນີ້, ຂໍ້ມູນການບໍລິຫານທີ່ ກ່ຽວຂ້ອງກັບຊ່ວງອາຍຸທີ່ລະບຸຄືຫາປີ ຫຼັງຈາກອາຍຸຈົບຊັ້ນມັດທະຍົມສຶກສາ ຕອນປາຍ, ແຕ່ການສຶກສາຊັ້ນສູງໃນອາຍຸສູງຂຶ້ນເປັນເລື່ອງປົກກະຕິ, ໂດຍສະເພາະໃນອະນຸພາກພື້ນຊາຮາຣາອາຟຣິກາ.

ຄວາມສາມາດໃນການຈ່າຍໃນການສຶກສາຊັ້ນສູງຈາກທັດສະນະຕະຫຼອດຊີວິດ ບໍ່ໄດ້ເຮັດໃຫ້ການສຶກສາດັ່ງກ່າວສາມາດມີລາຄາທີ່ຈ່າຍໄດ້ລ່ວງໜ້າ. ກໍລະນີເສດຖະກິດ ສຳລັບການແບ່ງປັນຄ່າໃຊ້ຈ່າຍໃນການສຶກສາຊັ້ນສູງ ສຳຄັນແມ່ນຂຶ້ນກັບຜູ້ທີ່ຈະເຂົ້າມາໃນອະນາຄົດທີ່ບໍ່ໄດ້ປະເຊີນກັບຂໍ້ຈຳກັດ ດ້ານສິນເຊື່ອ. ເງິນກູ້ໃຫ້ນັກສຶກສາປະເພດຕ່າງໆ ແມ່ນມີຢູ່ໃນຫຼາຍກວ່າ 70 ປະເທດ ແລະ ໄດ້ເຕີບໂຕເປັນຕະຫຼາດທີ່ມີມູນຄ່າພັນຕື້ໂດລາ. ໃນຫຼາຍປະເທດ, ອັດຕາສ່ວນລາຍໄດ້ຂອງຜູ້ກູ້ຢືມທີ່ຕ້ອງຊຳລະເງິນກູ້ ນັກສຶກສາ ແມ່ນຫຼາຍເກີນໄປ, ໂດຍສະເພາະສຳລັບນັກສຶກສາຮຽນຈົບທີ່ ມີລາຍໄດ້ໜ້ອຍທີ່ສຸດ. ການປະຕິຮູບນະໂຍບາຍທີ່ໃຫ້ຄວາມຫວັງຫຼາຍຂຶ້ນ ແມ່ນການຫັນປ່ຽນຈາກເງິນກູ້ຊຳລະຄືນຕາມກຳນົດເວລາທີ່ໃຊ້ກັນຢ່າງ ກວ້າງຂວາງໄປສູ່ເງິນກູ້ທີ່ອີງໃສ່ລາຍໄດ້.

ໃນປະເທດທີ່ມີລາຍໄດ້ສູງສ່ວນໃຫຍ່ນາຍຈ້າງ ແມ່ນຜູ້ໃຫ້ບໍລິການດ້ານ ການສຶກສາ ແລະ ການຝຶກອົບຮົມສຳລັບຜູ້ໃຫຍ່ ທີ່ໃຫຍ່ທີ່ສຸດ, ໂດຍ ເນັ້ນໜັກເຖິງຄວາມຈຳເປັນຂອງນະໂຍບາຍຕໍ່ບຸກຄົນຜູ້ທີ່ຢູ່ນອກຕະຫຼາດ ແຮງງານ. ແມ່ນແຕ່ຜູ້ທີ່ມີວຽກເຮັດ, ເວລາໃນການເຂົ້າຮ່ວມຝຶກອົບຮົມ ອາດຈະມີຄວາມສຳຄັນເທົ່າໆກັບການອຸປະຖຳ, ຊຶ່ງສະແດງໃຫ້ເຫັນເຖິງ ຄວາມຈຳເປັນ ໃນການແຊກແຊງຂອງລັດ ໃນຮູບແບບຫຼັກສູດຈົບການ ສຶກສາ. ຂໍ້ມູນໄລຍະຍາວຈາກປະເທດທີ່ມີລາຍໄດ້ສູງ 6 ປະເທດ ສະແດງ ໃຫ້ເຫັນວ່າການສຶກສາຜູ້ໃຫຍ່ແມ່ນການຕິດຕາມຊ້ຳຄືນສ່ວນໜ້ອຍທີ່ມີ ຄວາມສຳຄັນ, ໂດຍສະເພາະຢ່າງຍິ່ງ ໃນບັນດາຜູ້ທີ່ມີການສຶກສາຫຼາຍກວ່າ.

ຄາດໝາຍທີ 4.4 ທັກສະສຳລັບການເຮັດວຽກ

ມີພຽງແຕ່ 10 ຈາກ 91 ປະເທດເທົ່ານັ້ນທີ່ມີຂໍ້ມູນລາຍງານກ່ຽວກັບ ຜູ້ໃຫຍ່ສ່ວນໃຫຍ່ ທີ່ມີທັກສະດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT) ຢ່າງໜ້ອຍ 5 ໃນ 9 ທັກສະທີ່ຖືກຕິດຕາມ ເພື່ອການປຽບທຽບທົ່ວໂລກ. ໃນປະມານເຄິ່ງໜຶ່ງຂອງບັນດາປະເທດ, ຜູ້ໃຫຍ່ສ່ວນໃຫຍ່ບໍ່ມີທັກສະດັ່ງກ່າວ. ໃນປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງສ່ວນໃຫຍ່, ມີໄວໜຸ່ມຈຳນວນໜ້ອຍທີ່ຮຽນບໍ່ຈົບຊັ້ນມັດທະຍົມສຶກສາ ຕອນຕົ້ນມີທັກສະດ້ານ ICT. ໃນອີຣັກ, ສປປ ລາວ ແລະ ເຊຣາລີໂອນ, ແມ່ນແຕ່ຄ່າສະເລ່ຍຜູ້ທີ່ມີການສຶກສາຫຼາຍທີ່ສຸດ ຍັງມີທັກສະທີ່ໜ້ອຍກວ່າ 2 ໃນ 9 ທັກສະ. ການເຂົ້າເຖິງອຸປະກອນ ແລະ ອິນເຕີເນັດ ເປັນອຸປະສັກ ອີກອັນໜຶ່ງ: ແມ່ນແຕ່ໃນບັນດາຊາວໜຸ່ມ 20-24 ປີ, ແມ່ຍິງ 98% ແລະ ຜູ້ຊາຍ 90% ໃນປະເທດຊັດ ລາຍງານວ່າບໍ່ເຄີຍໄດ້ນຳໃຊ້ອິນເຕີເນັດເລີຍ; ສັດສ່ວນຕາມລຳດັບຄື 61% ແລະ 63% ໃນ ສປປ ລາວ ແລະ 36% ແລະ 31% ໃນຕູນີເຊຍ.

ການຄິດແບບຄຳນວນ (Computational thinking) ກຳລັງຖືກລວມ ເຂົ້າໃນຫຼັກສູດແຫ່ງຊາດ. ຟິນແລນ ໄດ້ເຮັດໃຫ້ການຄິດແບບຂັ້ນຕອນ ເພື່ອແກ້ໄຂບັນຫາຄະນິດສາດ (algorithmic thinking) ແລະ ການຂຽນ ໂປຼແກຼມເປັນພາກບັງຄັບຕັ້ງແຕ່ຂັ້ນປະຖົມສຶກສາປີທີ 1 ເປັນກົດຈະກຳ ພິວພັນຫຼາຍວິຊາຮຽນ. ໃນການທົບທວນຄືນຂອງ 8 ປະເທດທີ່ມີລາຍໄດ້ສູງ ໃນປີ 2018, ນັກຮຽນທີ່ໃຊ້ ICT ເລື້ອຍໆໃນໂຮງຮຽນ ສຳລັບວຽກງານທີ່ ກ່ຽວຂ້ອງກັບໂຮງຮຽນບໍ່ໄດ້ຄະແນນສູງກວ່າໝູ່ເພື່ອນຂອງພວກເຂົາສະເໝີໄປ, ແລະ ນັກຮຽນທີ່ມີປະສົບການການຂຽນໂປຼແກຼມບໍ່ສາມາດໂອນທັກສະເຫຼົ່ານັ້ນໄປຫາສະພາບແວດລ້ອມທີ່ບໍ່ແມ່ນການຂຽນໂປຼແກຼມໄດ້ສະເໝີໄປ.

ຄວາມຮູ້ທາງດ້ານການເງິນ ແມ່ນທັກສະຫຼັກ ສຳລັບການດຳລົງຊີວິດຢູ່ໃນ ເສດຖະກິດທີ່ທັນສະໄໝ ແລະ ສຳລັບຊີວິດຜູ້ໃຫຍ່ໂດຍທົ່ວໄປ, ແຕ່ບໍ່ແມ່ນ ທຸກຄົນຈະມີໂອກາດທີ່ຈະຮຽນຮູ້ແນວຄວາມຄິດທາງດ້ານການເງິນທີ່ສຳຄັນ ຢູ່ໃນໂຮງຮຽນ. ໂຄງການ ການປະເມີນນັກຮຽນນາໆຊາດ (PISA) ໃນ ປີ 2018 ລວມມີໂມດູນທາງເລືອກກ່ຽວກັບຄວາມຮູ້ທາງດ້ານການເງິນ, ຊຶ່ງ ຖືກນຳໃຊ້ໂດຍລະບົບການສຶກສາທີ່ເຂົ້າຮ່ວມ 20 ແຫ່ງ. ເດັກຍິງ ມັກບໍ່ຄ່ອຍທີ່ຈະລາຍງານກົດຈະກຳໃນຫ້ອງຮຽນທີ່ກ່ຽວຂ້ອງກັບຫົວຂໍ້ທາງ ດ້ານການເງິນໃນທຸກປະເທດທີ່ເຂົ້າຮ່ວມ, ເຖິງແມ່ນວ່າການສຶກສາທາງ ດ້ານການເງິນຈະຖືກລວມເຂົ້າໃນຄະນິດສາດ, ໂດຍທົ່ວໄປແລ້ວຈະເປັນ ວິຊາທີ່ບໍ່ແມ່ນວິຊາເລືອກ.

ຄາດໝາຍທີ 4.5. ຄວາມສະເໝີພາບ

ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ຍັງຄົງເປັນຄວາມກັງວົນທີ່ສຳຄັນ, ເຖິງແມ່ນວ່າຄວາມເຂົ້າໃຈຂອງສິ່ງທ້າທາຍ ໃນລະດັບ ແລະ ສະຖານທີ່ຕ່າງໆ ຮຽກຮ້ອງໃຫ້ມີຄວາມແຕກຕ່າງກັນພຽງເລັກໜ້ອຍ. ການສຶກສາຊັ້ນ ມັດທະຍົມຕອນປາຍ ແມ່ນລະດັບທີ່ເດັກຍິງໄວລຸ້ນ ອາດຈະມີຄວາມດ້ອຍ ໂອກາດຢ່າງຮ້າຍແຮງ (ເຊັ່ນ: ໃນປະເທດເບນິນ, ຊັດ ແລະ ໄນເຈີ) ແຕ່ກໍຍັງມີຫາອ່ຽງທີ່ຈະມີຄວາມໄດ້ປຽບ ແລະ ການປ່ຽນແປງຢ່າງໄວວາ ໃນເງື່ອນໄຂທີ່ເອື້ອອຳນວຍແກ່ເຂົາເຈົ້າ. ສິ່ງນີ້ ກຳລັງເກີດຂຶ້ນຢ່າງ ກວ້າງຂວາງໃນບັນດາປະເທດ, ລວມທັງປະເທດທີ່ຢູ່ໄກທີ່ສຸດຈາກການ ບັນລຸ SDG 4 ທຽບກັບປະເທດເພື່ອນບ້ານໃນພາກພື້ນສະເພາະໃດໜຶ່ງ ເຊັ່ນ: ກຳປູເຈຍ, ຄອງໂກ, ແກມເບຍ, ການາ, ມາລາວີ ແລະ ຣາວານດາ.

ຄວາມຮັ່ງມີ ຊຶ່ງມັກຈະຖືກວັດແທກໃນລະດັບຄົວເຮືອນ ບໍ່ໄດ້ສະເໜີໃຫ້ ເຫັນເຖິງສະພາບການຂາດແຄນສະເພາະຂອງເດັກນ້ອຍສະເໝີໄປ. ໃນຫຼາຍປະເທດ, 10% ຂອງເດັກນ້ອຍທີ່ຂາດແຄນ ຢູ່ໃນຄອບຄົວທີ່ ຮັ່ງມີທີ່ສຸດ ແລະ ຫຼາຍກວ່າ 30% ຂອງເດັກນ້ອຍຢູ່ໃນຄອບຄົວທີ່ ທຸກຍາກທີ່ສຸດ ແມ່ນບໍ່ຂາດແຄນ. ລະດັບການຂາດແຄນຂອງເດັກນ້ອຍ ສາມາດເປັນຕົວຄາດຄະເນທີ່ເຂັ້ມແຂງເພີ່ມເຕີມຂອງຜົນໄດ້ຮັບທາງ ການສຶກສາ.

ເດັກນ້ອຍຈຳນວນຫຼວງຫຼາຍ ໄດ້ເຂົ້າໂຮງຮຽນທີ່ຄວບຄຸມໂດຍກຸ່ມປະກອບ ອາວຸດທີ່ບໍ່ແມ່ນລັດ. ກຸ່ມເຫຼົ່ານີ້ ມີເຫດຜົນຫຼາຍຢ່າງ ໃນການເລືອກ ເພື່ອສະໜອງການສຶກສາ, ບໍ່ວ່າຈະຜ່ານການຄວບຄຸມໂດຍກົງ, ໂຄງການ ທີ່ຄັດເລືອກມາ, ຕົວຢ່າງ: ໃນຫຼັກສູດ ຫຼື ໃຫ້ຜູ້ບໍລິການທີ່ມີຢູ່ແລ້ວສືບຕໍ່ ດຳເນີນການ. ການສຶກສາ ແມ່ນໜຶ່ງໃນບັນດາການບໍລິການທີ່ມີຄ່າທີ່ສຸດທີ່ ພົນລະເມືອງຮຽກຮ້ອງ; ຄວາມລົ້ມເຫຼວໃນການສະໜອງ ອາດນຳໄປສູ່ ຄວາມຄຽດແຄ້ນໄດ້.

ໃນການສຶກສາ ມີສິ່ງທ້າທາຍດ້ານຄວາມຫຼາກຫຼາຍທາງດ້ານພາສາ. ໃນບັນດາປະເທດອາຟຣິກາຕາເວັນຕົກ ແລະ ອາຟຣິກາກາງ ເຊັ່ນ: ປະເທດຊັດ, ແກມເບຍ ແລະ ໂຕໂກ, ເດັກນ້ອຍອາຍຸ 7 ຫາ 14 ປີ ບໍ່ເກີນ 5% ເວົ້າພາສາທີ່ສອນເວລາຢູ່ເຮືອນ. ວິທີການປະສົມປະສານ ນະໂຍບາຍກ່ຽວກັບພາສາທີ່ໃຊ້ໃນການສິດສອນເຂົ້າກັບແຫຼ່ງຂໍ້ມູນພາສາສາດ, ການຄາດຄະເນຈຳນວນປະຊາກອນໃນໄວຮຽນ ແລະ ອັດຕາການເຂົ້າຮຽນ ຊີ້ໃຫ້ເຫັນວ່າ 37% ຂອງເດັກນ້ອຍໃນປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ ໄດ້ຮຽນພາສາອື່ນທີ່ບໍ່ແມ່ນພາສາບ້ານເກີດ: 27% ເວົ້າພາສາຂຽນຂອງ

ຊົນເຜົ່າສ່ວນນ້ອຍ ແລະ 10% ເວົ້າພາສາທີ່ບໍ່ຄ່ອຍໃຊ້ທົ່ວໄປ, ໂດຍ ແຕ່ລະພາສາມີຜູ້ເວົ້າຂ້ອນຂ້າງໜ້ອຍ.

ຄາດໝາຍທີ 4.6. ການຮູ້ໜັງສື ແລະ ການຄິດໄລ່ ເລກ

ໃນກຸ່ມຜູ້ໃຫຍ່ທີ່ມີອາຍຸ 15 ປີຂຶ້ນໄປ ໃນທົ່ວໂລກ, ແມ່ຍິງ 83% ແລະ ຜູ້ຊາຍ 90% ຮູ້ໜັງສື, ໃນແງ່ຂອງການຈັດປະເພດລະຫວ່າງຜູ້ຮູ້ ແລະ ບໍ່ຮູ້ໜັງສື – ຊຶ່ງມີຊ່ອງວ່າງ 7 ຈຸດສ່ວນຮ້ອຍ. ໄວລຸ້ນຍິງຫຼາຍກວ່າ 1 ໃນ 4 ບໍ່ຮູ້ໜັງສືຢູ່ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ, ຊຶ່ງອັດຕາການຮູ້ໜັງສືຂອງໄວລຸ້ນຍິງ ໄດ້ເພີ່ມຂຶ້ນໜ້ອຍກວ່າໜຶ່ງຈຸດສ່ວນຮ້ອຍຕໍ່ປີ. ໃນທົ່ວໂລກ, ການຫຼຸດລົງຂອງຈຳນວນແມ່ຍິງທີ່ບໍ່ຮູ້ໜັງສືໃນປີ 1999 ໃນອາຊີຕາເວັນອອກ ແລະ ຕາເວັນອອກສຽງໃຕ້ ເກືອບຖືກຊົດເຊີຍ ໂດຍການເພີ່ມຂຶ້ນຂອງ ເຂດອະນຸພາກພື້ນຊາຮາຣາອາຟຣິກາ. ນອກຈາກນັ້ນ, ສົມມຸດຕິຖານທີ່ວ່າ ນັກຮຽນຈົບມັດທະຍົມທຸກຄົນຮູ້ໜັງສື ໝາຍຄວາມວ່າລະດັບການຮູ້ໜັງສືທີ່ ແທ້ຈິງ ໄດ້ຖືກຄາດຄະເນເກີນຄວາມເປັນຈິງໄວ້ກ່ອນໜ້ານີ້. ເກືອບເຄິ່ງ ໜຶ່ງຂອງນັກຮຽນທີ່ຈົບຊັ້ນມັດທະຍົມສຶກສາຕອນຕົ້ນໃນ 18 ປະເທດທີ່ມີ ຂໍ້ມູນການສຳຫຼວດທີ່ຜ່ານມາບໍ່ເຖິງລະດັບການຮູ້ໜັງສືພື້ນຖານ, ຊຶ່ງກຳນົດໄວ້ ວ່າສາມາດອ່ານປະໂຫຍກທີ່ງ່າຍດາຍໄດ້ **(ຮູບທີ 7)**.

ຂໍ້ເທັດຈິງຈາກການສົນທະນາ ທີ່ວ່າບໍ່ໄດ້ເຂົ້າໂຮງຮຽນບໍ່ໝາຍຄວາມວ່າ ບໍ່ຮູ້ໜັງສື, ເນັ້ນເຖິງຄວາມສຳຄັນຂອງການຮຽນຮູ້ໜັງສືຢູ່ນອກໂຮງຮຽນ.


ໃນການຄາດຄະເນປະຊາກອນທີ່ບໍ່ຮູ້ໜັງສື, ການເຂົ້າຮຽນຂອງຜູ້ໃຫຍ່ ໃນຫຼັກສູດ ISCED 1 ລະບົບນອກໂຮງຮຽນ ແມ່ນ 1% ຫຼື ໜ້ອຍກວ່າ ໃນໂບລິເວຍ, ຮອນດູຣັສ, ໂມຊຳບິກ, ກາຕາ ແລະ ຊູຣິນາມ, 2% ໃນ ບາເຣນ ແລະ ເປຣູ, 3% ໃນໂຄລົມເບຍ ແລະ ໄທ, 4% ໃນ ຊາອຸດີອາຣາເບຍ ແລະ 8% ໃນສາທາລະນະລັດໂດມິນິກັນ.

ຂໍ້ມູນແມ່ນແຕ່ກ່ຽວກັບທັກສະການຄິດໄລ່ທີ່ງ່າຍດາຍ ຍັງຂາດແຄນ. ການວັດແທກຕິວແທນຂອງລະດັບການຄິດໄລ່ພື້ນຖານ ແມ່ນຄິດໄລ່ ເປັນອັດຕາສ່ວນຮ້ອຍຂອງຜູ້ທີ່ສາມາດບອກອາຍຸຕົນເອງໄດ້ຢ່າງຖືກຕ້ອງ, ຊຶ່ງສະທ້ອນໃຫ້ເຫັນເຖິງຄວາມສາມາດໃນການເຮັດວຽກກັບຈຳນວນເຕັມທີ່ ງ່າຍດາຍ. ໃນຂະນະທີ່ສ່ວນໃຫຍ່ເຖິງຈະເປັນຜູ້ທຸກຍາກທີ່ສຸດກໍສາມາດ ຂ້າມຂອບເຂດນີ້ໄປໄດ້, ແຕ່ການວັດແທກແບບນີ້ ເໝາະສົມສຳລັບ ການກວດກາທ່າອ່ຽງການຄິດໄລ່ໃນປະຫວັດສາດ. ການວິເຄາະການ ສຳຫຼວດຄົວເຮືອນ ແລະ ຂໍ້ມູນການສຳຫຼວດປະຊາກອນ ເຮັດໃຫ້ ສາມາດຕິດຕາມລະດັບການຄິດໄລ່ຂອງກຸ່ມທີ່ເກີດໃນລະຫວ່າງຊຸມປີ 1960 ແລະ 2010 ທີ່ຈະຕ້ອງຕິດຕາມ ສຳລັບ 42 ປະເທດໃນເຂດ ອະນຸພາກພື້ນຊາຮາຣາອາຟຣິກາ. ການປັບປຸງໃນໄລຍະເວລາຜ່ານມາ ແມ່ນມີໜ້ອຍ ແລະ ບໍ່ຍືນຍົງໃນບັນດາຜູ້ທຸກຍາກທີ່ສຸດ. ການເພີ່ມຂຶ້ນ ໂດຍລວມຂອງລະດັບຮູ້ຄິດໄລ່ເລກໃນອາຟຣິການັ້ນ ແມ່ນຍ້ອນການ ເພີ່ມການເຂົ້າຮຽນເກືອບທັງໝົດ.

ຮູບທີ 7:

ແມ່ນແຕ່ນັກຮຽນທີ່ຈົບຊັ້ນມັດທະຍົມສຶກສາແລ້ວ ກໍບໍ່ສາມາດສັນນິຖານໄດ້ວ່າຮູ້ໜັງສື

ອັດຕາການຮູ້ໜັງສືໃນກຸ່ມອາຍຸ 20 ຫາ 24 ປີ, ຈຳແນກຕາມການຮຽນຈົບ, ໃນປະເທດທີ່ສຶກສາ ປີ 2015–19



ໝາຍເຫດ: ຂະໜາດຂອງຈຸດ ແມ່ນອັດຕາສ່ວນກັບຂະໜາດຂອງປະຊາກອນ ໃນແຕ່ລະລະດັບການຮຽນຈົບ.
GEM StatLink: https://bit.ly/GEM2021_Summary_fig7
ແຫຼ່ງຂໍ້ມູນ: ການວິເຄາະຂອງທີມງານບົດລາຍງານ GEM ຂອງຂໍ້ມູນ DHS.

ຄາດໝາຍທີ 4.7. ການພັດທະນາແບບຍືນຍົງ ແລະ ການເປັນພົນລະເມືອງໂລກ

ຄາດໝາຍທີ 4.7 ກ້າວໄປໄກກວ່າວາລະອື່ນໆຂອງ SDG 4 ໃນການແກ້ໄຂສິ່ງທີ່ຜູ້ຮຽນຕ້ອງຮຽນຮູ້ ເພື່ອບັນລຸຄວາມທະເຍີທະຍານໃນການຫັນປ່ຽນຂອງ SDG 4. ສັດສ່ວນຂອງໂຮງຮຽນທີ່ສະໜອງທັກສະຊີວິດກ່ຽວກັບຄວາມຮູ້ດ້ານ HIV ແລະ ເພດສຶກສາ ແມ່ນມີໜ້ອຍ, ໂດຍສະເພາະໃນລະດັບປະຖົມສຶກສາ, ຕົວຢ່າງ: ໂຮງຮຽນປະຖົມສຶກສາ 2.5% ໃນບູຄິນາຟາໂຊ ແລະ 6% ໃນໄນເຈີ. ເຖິງຢ່າງໃດກໍຕາມ, ຄູ່ມືແນະນຳດ້ານວິຊາການສາກົນກ່ຽວກັບເພດສຶກສາຂອງອົງການສະຫະປະຊາຊາດສະບັບປັບປຸງ ແນະນຳໃຫ້ກວມເອົາຊ່ວງການເປັນໄວຈະເລີນພັນ ແລະ ການມີປະຈຳເດືອນກ່ອນທີ່ນັກຮຽນຈະມີປະສົບການຕົວຈິງ, ເຊັ່ນ: ສຳລັບອາຍຸ 9 ຫາ 12 ປີ. ເຄື່ອງມືການທົບທວນ ແລະ ປະເມີນກ່ຽວກັບເພດສຶກສາຂອງອຸຍແນສໂກ (UNESCO's Sexuality Education Review and Assessment Tool) ອີງຕາມບົດລາຍງານຄວາມຄືບໜ້າທົ່ວໂລກກ່ຽວກັບເພດສຶກສາຮອບດ້ານ ສະບັບລ່າສຸດ. ໃນບັນດາ 24 ປະເທດ, ມີພຽງ 3 ປະເທດເທົ່ານັ້ນທີ່ຖືກປະເມີນວ່າສະໜອງເນື້ອໃນຫຼັກສູດ "ຂັ້ນສູງ" ກ່ຽວກັບສຸຂະພາບທາງເພດ ແລະ ການຈະເລີນພັນສຳລັບອາຍຸ 9 ຫາ 12 ປີ, ແລະ 5 ປະເທດທີ່ມີເນື້ອໃນ "ແໜ້ນ".

ການວິໃຈການສຶກສາກ່ຽວກັບພົນລະເມືອງ ແລະ ການເປັນພົນລະເມືອງສາກົນປີ 2016 (The 2016 International Civic and Citizenship Education Study) ໃນ 23 ປະເທດທີ່ມີລາຍໄດ້ປານກາງລະດັບສູງ ແລະ ລາຍໄດ້ສູງ ພົບວ່າອັດຕາສ່ວນຂອງນັກຮຽນທີ່ມີຄວາມເຂົ້າໃຈດີກ່ຽວກັບບັນຫາທີ່ກ່ຽວຂ້ອງກັບການເປັນພົນລະເມືອງໂລກມີປະມານ 40% ໃນສາທາລະນະລັດໂດມີນິກັນ, ລັດເວຍ ແລະ ເນເທີແລນ ໄປຈົນເຖິງເກືອບ 70% ໃນໂຄຼເອເຊຍ, ສ. ເກົາຫຼີ ແລະ ສະວີເດນ. TIMSS ປີ 2019 ສະແດງໃຫ້ເຫັນວ່າມີນັກຮຽນປະມານ 30% ເທົ່ານັ້ນທີ່ມີຄວາມຮູ້ດ້ານວິທະຍາສາດສິ່ງແວດລ້ອມ. ການສຶກສາການປ່ຽນແປງດິນຟ້າອາກາດມີຈຸດປະສົງຊ່ວຍໃຫ້ປະຊາຊົນເຂົ້າໃຈ, ແກ້ໄຂ, ຫຼຸດຜ່ອນ ແລະ ປັບຕົວເຂົ້າກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ. ຂໍ້ມູນຂອງປະເທດຕ່າງໆຊຸດໃໝ່ກ່ຽວກັບການສື່ສານ ແລະ ການສຶກສາການປ່ຽນແປງດິນຟ້າອາກາດໂດຍບົດລາຍງານ GEM ແລະ ໂຄງການການຕິດຕາມ ແລະ ປະເມີນຜົນການສື່ສານ ແລະ ການສຶກສາສະພາບອາກາດ ນຳສະເໜີທັດສະນະໃນການປຽບທຽບ. ຂໍ້ມູນຂອງປະເທດຕ່າງໆ 20 ຊຸດທຳອິດກວມເອົາທຸກຊີ້ງເຂດ ແລະ ກຸ່ມລາຍໄດ້ຂອງປະເທດ. ຊຸດຂໍ້ມູນທີສອງຂອງປະເທດຕ່າງໆມີເຖິງ 50 ຊຸດ ມີກຳນົດທີ່ຈະເຜີຍແຜ່ໃນປີ 2022. ການວິເຄາະເບື້ອງຕົ້ນ ຊີ້ໃຫ້ເຫັນວ່າການສຸມໃສ່ການປ່ຽນແປງດິນຟ້າອາກາດ ພົບເຫັນໄດ້ໃນກົດໝາຍການສຶກສາແຫ່ງຊາດພຽງແຕ່ 40% ແລະ ໃນແຜນການ ຫຼື ຍຸດທະສາດຂອງຂະແໜງການສຶກສາ 45%.

ຄາດໝາຍທີ 4.ກ. ສິ່ງອຳນວຍຄວາມສະດວກດ້ານການສຶກສາ ແລະ ສະພາບແວດລ້ອມການຮຽນຮູ

ການຮຽນຮູ້ທີ່ມີຄຸນນະພາບດີ ບໍ່ສາມາດເກີດຂຶ້ນໄດ້ ຖ້າຫາກວ່າສະພາບແວດລ້ອມບໍ່ເໝາະສົມ, ໜ້ອຍກວ່າຫຼາຍຖ້າຫາກວ່າສະພາບແວດລ້ອມເປັນໄພຂົ່ມຂູ່ຕໍ່ຄວາມເປັນຢູ່ທີ່ດີຂອງເດັກນ້ອຍ. ຖະແຫຼງການເລື່ອງໂຮງຮຽນທີ່ປອດໄພ ແມ່ນພັນທະທາງການເມືອງລະຫວ່າງລັດຖະບານ ເພື່ອປົກປ້ອງນັກຮຽນ, ຄູອາຈານ, ໂຮງຮຽນ ແລະ ມະຫາວິທະຍາໄລຈາກການໂຈມຕີ ໃນເວລາເກີດການປະທະກັນດ້ວຍກຳລັງປະກອບອາວຸດ, ປັດຈຸບັນ ໄດ້ຮັບການຮັບຮອງຈາກ 112 ປະເທດ. ຫຼັກຖານຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງວ່າການລ່ວງໂທດທາງຮ່າງກາຍບໍ່ພຽງແຕ່ລະເມີດສິດທິຂອງເດັກນ້ອຍ, ແຕ່ຍັງມີຜົນກະທົບຕໍ່ຜົນໄດ້ຮັບທາງການສຶກສາ. ປັດຈຸບັນນີ້ການລ່ວງໂທດທາງຮ່າງກາຍ ໄດ້ຖືກຫ້າມຢ່າງເດັດຂາດໃນໂຮງຮຽນ ໃນ 156 ປະເທດ.

ໂຮງຮຽນ ອາດຈະເປັນບ່ອນດຽວທີ່ເດັກນ້ອຍບາງຄົນສາມາດເຂົ້າເຖິງນ້ຳ, ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ ແລະ ສຸຂະອະນາໄມໄດ້. ໃນປະເທດໄລບີເຣຍ, ຄິວເຮືອນຈຳນວນໜ້ອຍ ມີສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມທີ່ຖືກຕ້ອງຕາມມາດຕະຖານສາກົນພື້ນຖານ, ແຕ່ 69% ຂອງໂຮງຮຽນມີ. ເຖິງຢ່າງໃດກໍຕາມ, ໂຮງຮຽນຂະໜາດນ້ອຍທີ່ສ່ວນໃຫຍ່ຕັ້ງຢູ່ເຂດຫ່າງໄກສອກຫຼີກ ແລະ ຊົນນະບົດ ສາມາດສັນນິຖານໄດ້ຢ່າງສົມເຫດສົມຜົນວ່າມີໂອກາດທີ່ຈະມີພື້ນຖານໂຄງລ່າງຕ່ຳກວ່າມາດຖານດ້ານຄຸນນະພາບໜ້ອຍກວ່າໂຮງຮຽນຂະໜາດໃຫຍ່. ໃນປະເທດເຄັບເວີດ, 22% ຂອງໂຮງຮຽນປະຖົມໃນປີ 2018 ຂາດສິ່ງອຳນວຍຄວາມສະດວກໃນການລ້າງມືຂັ້ນພື້ນຖານ. ເຖິງຢ່າງໃດກໍຕາມ, ຕົວເລກທີ່ນ້ອຍທີ່ສຸດ 22% ຂອງໂຮງຮຽນປະຖົມຄິດເປັນພຽງແຕ່ 2% ຂອງການເຂົ້າຮຽນໃນຊັ້ນປະຖົມສຶກສາ. ໃນທົ່ວໂລກ, ສັດສ່ວນຂອງເດັກນ້ອຍທີ່ເຂົ້າໂຮງຮຽນທີ່ບໍ່ມີສິ່ງອຳນວຍຄວາມສະດວກພື້ນຖານນັ້ນ ມີທ່າອ່ຽງຕ່ຳກວ່າສັດສ່ວນຂອງຈຳນວນໂຮງຮຽນຢ່າງຊັດເຈນ.

ນອກເໜືອຈາກສິ່ງອຳນວຍຄວາມສະດວກທາງດ້ານຮ່າງກາຍ, ຍັງມີດ້ານອື່ນໆ ເຊັ່ນ: ການຈັດຕັ້ງປະຕິທິນຂອງໂຮງຮຽນ ຕັ້ງແຕ່ການແຈກຢາຍຕາຕະລາງສອນໃນອາທິດ ແລະ ປີ ຈົນເຖິງໄລຍະເວລາ ແລະ ການຈັດຕັ້ງຂອງມື້ຮຽນສາມາດສິ່ງຜົນທີ່ສຳຄັນຕໍ່ຄຸນນະພາບ ແລະ ຄວາມສະເໝີພາບຂອງລະບົບການສຶກສາ. ໂຄງສ້າງປະຕິທິນໂຮງຮຽນຂອງຫຼາຍໆປະເທດ ແມ່ນຍ້ອນອິດທິພົນທາງປະຫວັດສາດຍຸກອານານິຄົມຫຼາຍກວ່າລະດູການ, ແລະ ບໍ່ສອດຄ່ອງກັບວົງຈອນກະສິກຳໃນທ້ອງຖິ່ນ. ເວລາເລີ່ມຕົ້ນໂຮງຮຽນ ກໍມີຄວາມສຳຄັນ. ນອກເໜືອຈາກຈະໃຫ້ມີເວລານອນຫຼາຍຂຶ້ນ, ການເລີ່ມຕົ້ນຮຽນຊ້າກວ່າ ເບິ່ງຄືວ່າເຂົ້າກັບຈັງຫວະຊີວິດຂອງໄວລຸ້ນໄດ້ດີຂຶ້ນ ເນື່ອງຈາກມີຄວາມຕື່ນຕົວສູງສຸດໃນຕອນສວາຍ ແລະ ຕອນແລງ.

ຄາດໝາຍທີ 4.ຂ. ທຶນການສຶກສາ

ການຊ່ວຍເຫຼືອໂດຍລວມ ເພື່ອສະໜັບສະໜູນການເຄື່ອນໄຫວຂອງນັກຮຽນໄດ້ເພີ່ມຂຶ້ນ 30% ລະຫວ່າງປີ 2015 ແລະ 2019, ຈາກ 3.4 ຕື້ໂດລາສະຫະລັດ ເປັນ 4.4 ຕື້ໂດລາສະຫະລັດ. ການຊ່ວຍເຫຼືອດ້ານທຶນການສຶກສາທັງໝົດໃຫ້ແກ່ບັນດາປະເທດທີ່ມີລາຍໄດ້ຕ່ຳເພີ່ມຂຶ້ນສອງເທົ່າຈາກປີ 2015 ຫາ 2019, ຊຶ່ງຂະຫຍາຍຕົວຫຼາຍກວ່າການເຂົ້າຮຽນໃນການສຶກສາຊັ້ນສູງ. ແຕ່ເມື່ອພິຈາລະນາທັງປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ, ຈຳນວນນັກສຶກສາສາກົນໄດ້ຂະຫຍາຍໂຕເກີນການຊ່ວຍເຫຼືອດ້ານທຶນການສຶກສາ. ໂດຍສະເລ່ຍຕໍ່ນັກສຶກສາສາກົນ, ການຊ່ວຍເຫຼືອດ້ານທຶນການສຶກສາໃນປີ 2019 ໜ້ອຍກວ່າໃນປີ 2006. ຂໍ້ມູນທີ່ບໍ່ແນ່ນອນທີ່ມີຢູ່ຊີ້ໃຫ້ເຫັນວ່າເປົ້າໝາຍຂອງການຂະຫຍາຍທຶນການສຶກສາຈຳນວນຫຼາຍພາຍໃນປີ 2020 ຍັງບໍ່ທັນບັນລຸຜົນ. ແຕ່ໃນປັດຈຸບັນຜູ້ໃຫ້ທຶນ ມີທ່າອ່ຽງທີ່ຈະໃຫ້ທຶນການສຶກສາແກ່ປະເທດທີ່ກຳລັງພັດທະນາຫຼາຍກວ່າໃນປີ 2015, ແລະ ທີ່ສຳຄັນກວ່ານັ້ນ ປະເທດຜູ້ຮັບ ແມ່ນໜ້ອຍໜັກທີ່ຈະຂຶ້ນກັບຜູ້ໃຫ້ທຶນຫຼັກໆພຽງໜຶ່ງ ຫຼື ສອງ.

ແນວຄວາມຄິດຂອງ "ສະໝອງໄຫຼ" ທີ່ນັກສຶກສາທີ່ໄດ້ຮັບທຶນບໍ່ກັບຄືນປະເທດຕົ້ນກຳເນີດຂອງຕົນ ໄດ້ຖືກທົດແທນໂດຍຄວາມເຂົ້າໃຈທີ່

ທັນສະໄໝກ່ວ່າຄື “ການໝູນວຽນຂອງສະໝອງ”. ການຄາດຄະເນລ່າສຸດ ຊີ້ໃຫ້ເຫັນວ່າການເຄື່ອນຍ້າຍຖິ່ນຖານກັບຄືນ ເປັນສ່ວນສຳຄັນຂອງການ ເຄື່ອນຍ້າຍຖິ່ນຖານສູ່ເຂດອະນຸພາກພື້ນຊາຮາຣາອາຟຣິກາ ແລະ ອາເມລິກາລາຕິນ, ແລະ ໂດຍສະເລ່ຍແລ້ວ ຜູ້ອົບພະຍົບເຫຼົ່ານີ້ມີລະດັບ ການສຶກສາຫຼາຍກ່ວ່າ. ບາງປະເທດຮັບຮູ້ດີວ່າແມ່ນແຕ່ຄົນສັນຊາດຂອງ ຕົນທີ່ມີຄວາມຊຳນິຊຳນານສູງຈະບໍ່ກັບຄືນມາປະເທດໃນອະນາຄົດອັນໃກ້ ກໍຕາມແຕ່ກໍຖືວ່າເປັນຊັບສິນຖ້າມີສ່ວນຮ່ວມຢ່າງເໝາະສົມ. ຈາກຈຳນວນ 22 ປະເທດໃນອາເມລິກາລາຕິນ ແລະ ຄາຣິບຽນ ທີ່ໄດ້ວິເຄາະດັດຊະນີ ນະໂຍບາຍອົບພະຍົບ, 8 ປະເທດຮັກສາການເປັນສະມາຊິກເຄືອຂ່າຍ ການໝູນວຽນຂອງສະໝອງຢ່າງເປັນທາງການ. ການເຮັດແຜນທີ່ ນະໂຍບາຍຍ້າຍຖິ່ນກ່ອນໜ້ານີ້ ໃນ 35 ປະເທດ ຊຶ່ງເປັນຕົວແທນຂອງ ທຸກພາກພື້ນທົ່ວໂລກ, ລະດັບລາຍໄດ້ ແລະ ປະເພດຂອງລັດຖະບານ ພົບວ່າສອງສ່ວນສາມ ໄດ້ຮັກສາການເປັນສະມາຊິກເຄືອຂ່າຍວິທະຍາສາດ ບາງປະເພດ ແລະ ເຄິ່ງໜຶ່ງບັງຄັບການສົ່ງຄືນນັກສຶກສາທີ່ສົ່ງໄປຮຽນ ຕ່າງປະເທດດ້ວຍທຶນການສຶກສາ.

ຄາດໝາຍທີ 4.ຄ. ຄູ

ຂໍ້ມູນທີ່ລາຍງານລະບຸວ່າ ເຂດອະນຸພາກພື້ນຊາຮາຣາອາຟຣິກາ ເປັນ ພາກພື້ນທີ່ມີອັດຕາຄູອາຈານຕ່ຳທີ່ສຸດທີ່ບັນລຸມາດຕະຖານແຫ່ງຊາດ: 57% ໃນລະດັບກ່ອນຊັ້ນປະຖົມສຶກສາ (ທຽບກັບ 83% ໃນອາເມລິກາລາຕິນ ແລະ ຄາຣິບຽນ), 67% ໃນຊັ້ນປະຖົມສຶກສາ (ທຽບກັບ 85% ໃນ ອາຟຣິກາເໜືອ ແລະ ອາຊີຕາເວັນຕົກ) ແລະ 61% ໃນຊັ້ນມັດທະຍົມ ສຶກສາ (ທຽບກັບ 78% ໃນອາຊີກາງ ແລະ ໃຕ້). ດັ່ງນັ້ນ, ອັດຕາສ່ວນ ຂອງນັກຮຽນຕໍ່ຄູອາຈານທີ່ໄດ້ຮັບການຝຶກອົບຮົມ ແມ່ນສູງເກືອບສອງເທົ່າ ຢູ່ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ຂອງຄ່າສະເລ່ຍທົ່ວໂລກ, ເຖິງແມ່ນວ່າຈະມີການປັບປຸງເລັກນ້ອຍຕັ້ງແຕ່ປີ 2015 ເປັນຕົ້ນມາ.

ແມ່ນແຕ່ຄູອາຈານທີ່ມີຄຸນວຸດທິ ອາດຈະບໍ່ມີຄຸນສົມບັດສຳລັບວິຊາສະເພາະ ທີ່ເຂົາເຈົ້າສອນ. ການສອນບໍ່ຖືກສາຍວິຊາ ແມ່ນມີຢູ່ຫຼາຍໃນໂລກ. ໃນ ຈຳນວນລະບົບການສຶກສາຢ່າງໜ້ອຍ 40 ລະບົບທີ່ເຂົ້າຮ່ວມໃນການສຳຫຼວດ ລະດັບສາກົນດ້ານການຮຽນ-ການສອນ ປີ 2018, ຫຼາຍກ່ວ່າ 10% ຂອງຄູວິທະຍາສາດຊັ້ນມັດທະຍົມສຶກສາຕອນຕົ້ນ ບໍ່ເຄີຍໄດ້ຮັບການ ສຶກສາ ຫຼື ການຝຶກອົບຮົມໃນລະບົບໃນວິຊາດັ່ງກ່າວ ເຊັ່ນດຽວກັນກັບ ຄູຄະນິດສາດ. ໃນຈໍເຈຍ ແລະ ຊາອຸດີອາຣາເບຍ, ຄູວິທະຍາສາດ ແລະ ຄະນິດສາດໜ້ອຍກ່ວ່າ 60% ໄດ້ຮັບການຝຶກອົບຮົມໃນວິຊາຂອງຕົນ ຊຶ່ງເປັນສ່ວນໜຶ່ງຂອງການສຶກສາໃນລະບົບ. ການສອນບໍ່ຖືກສາຍວິຊາ ເຮັດໃຫ້ເກີດຄວາມກັງວົນຕໍ່ຄວາມສະເໝີພາບ ເນື່ອງຈາກວ່າບໍ່ແມ່ນທຸກຄົນ ທີ່ມີທ່າອ່ຽງຢ່າງເທົ່າທຽມທີ່ຈະເປັນຄູນອກສາຍວິຊາ, ຫຼື ຖືກສອນໂດຍ ຄູນອກສາຍວິຊາ, ຊຶ່ງມັກຈະພົບເລື້ອຍຢູ່ໃນເຂດຊົນນະບົດ ແລະ ໂຮງຮຽນ ທີ່ສອນນັກຮຽນທີ່ດ້ອຍໂອກາດ.

ການຄາດຄະເນໃໝ່ຂອງ UIS ກ່ຽວກັບຕົວຊີ້ບອກເງິນເດືອນຂອງຄູ ຊຶ່ງກວດເບິ່ງວ່າຄູອາຈານມີຄ່າຈ້າງແນວໃດເມື່ອທຽບກັບວິຊາຊີບອື່ນໆທີ່ ຕ້ອງການລະດັບຄຸນວຸດທິທີ່ທຽບເທົ່າກັນ ສະແດງໃຫ້ເຫັນວ່າຄວາມແຕກຕ່າງ ໂດຍສະເລ່ຍລະຫວ່າງຄູອາຈານໃນແຕ່ລະລະດັບການສຶກສາໃນປະເທດ ດຽວກັນໂດຍທົ່ວໄປ ແມ່ນໜ້ອຍຖ້າທຽບກັບຄວາມແຕກຕ່າງລະຫວ່າງ ປະເທດ. ໃນປະເທດທີ່ມີລາຍໄດ້ສູງ ຊຶ່ງຫຼັກຖານສ່ວນໃຫຍ່ມາຈາກນັ້ນ, ຄູອາຈານ ມັກຈະໄດ້ຮັບຄ່າຈ້າງໜ້ອຍກ່ວ່າຜູ້ປະກອບອາຊີບທຽບເທົ່າ ໃນຂະແໜງການອື່ນໆ **(ຮູບທີ 8)**.

ຕົວຊີ້ບອກເງິນເດືອນຂອງຄູ ມີໄວ້ເພື່ອເປັນຕົວແທນຂອງແຮງຈູງໃຈຂອງຄູ. ແຕ່ຍັງມີຫຼາຍປັດໄຈທີ່ສົ່ງຜົນກະທົບຕໍ່ແຮງຈູງໃຈ, ຈາກການວິເຄາະລ່າສຸດ ກ່ຽວກັບການຂາດວຽກຂອງຄູອາຈານຈຳນວນຫຼາຍໃນ 8 ປະເທດໃນ ອາຟຣິກາຕາເວັນອອກ ແລະ ໃຕ້. ແມ່ນແຕ່ອີງຕາມການລາຍງານຂອງ ຄູເອງ, ອັດຕາສ່ວນຂອງຜູ້ທີ່ບໍ່ມາສອນຢ່າງໜ້ອຍໜຶ່ງຄັ້ງຕໍ່ອາທິດມີຕັ້ງແຕ່ ໜ້ອຍກ່ວ່າ 10% ໃນປະເທດເຄນຢາ ແລະ ຣາວານດາ ໄປຈົນເຖິງ ເກືອບ 30% ໃນຊູດານໃຕ້. ຄູອາຈານເວົ້າວ່າພວກເຂົາຂາດວຽກ ຍ້ອນ ສຸຂະພາບ (62%) ແລະ ຍ້ອນຄອບຄົວ (35%), ຖັດມາ ແມ່ນຍ້ອນ ສະພາບອາກາດ (ໂດຍສະເພາະຝົນຕົກໜັກ ແລະ ຄວາມຮ້ອນຫຼາຍເກີນໄປ), ບັນຫາດ້ານທຸລະກິດ ແລະ ການຂົນສົ່ງ.

ການສຶກສາ ໃນເປົ້າໝາຍ SDG ອື່ນໆ

ການເຂົ້າເຖິງພະລັງງານໄຟຟ້າຢູ່ເຮືອນ ສາມາດມີບົດບາດສຳຄັນໃນການ ໃຫ້ເດັກນ້ອຍມີສ່ວນຮ່ວມໃນກິດຈະກຳການສຶກສາ. ໂຄງການພະລັງງານ ໄຟຟ້າໃນເຂດຊົນນະບົດຂອງພູຖານ ໄດ້ຊ່ວຍຫຼຸດຜ່ອນການໃຊ້ຟືນ ແລະ ເຮັດໃຫ້ໂຮງຮຽນ ໄດ້ຮຽນຕື່ນອີກ 0.8 ປີ, ຊຶ່ງມີຜົນດີຕໍ່ກັບເດັກຍິງຫຼາຍກ່ວ່າ ເດັກຊາຍ. ການເຂົ້າເຖິງພະລັງງານໄຟຟ້າໃນໂຮງຮຽນ ສາມາດຊ່ວຍ ປັບປຸງສະພາບແວດລ້ອມການຮຽນຮູ້ ແລະ ຂະຫຍາຍການເຂົ້າເຖິງແຫຼ່ງ ການຮຽນຮູ້. ໂຄງການຊ່ວຍເຫຼືອດ້ານການຄຸ້ມຄອງຂະແໜງພະລັງງານ ໄຟຟ້າພົບວ່ານີ 72% ຂອງໂຮງຮຽນໃນເຄນຢາ, ແຕ່ມີພຽງແຕ່ 22% ໃນປະເທດເອທິໂອເປຍ ທີ່ເຂົ້າເຖິງໂຄງຂ່າຍພະລັງງານໄຟຟ້າແຫ່ງຊາດ. ຖະໜົນຫົນທາງ ຊ່ວຍຫຼຸດຜ່ອນຄວາມທຸກຍາກ ແລະ ສິ່ງເສີມການ ພັດທະນາເສດຖະກິດ ແລະ ສັງຄົມ ລວມທັງຜົນໄດ້ຮັບດ້ານການສຶກສາ. ໃນອັນຕິໂອເກຍ (Antioquia) ຂອງໂຄລົມເບຍ, ການປັບປຸງເສັ້ນທາງ ຊົນນະບົດ ເຮັດໃຫ້ຜົນການຮຽນດີຂຶ້ນສຳລັບນັກຮຽນຊົນນະບົດ.

ໃນການແຂ່ງຂັນເພື່ອບັນລຸເປົ້າໝາຍ SDG ໃນປີ 2030, ມີຄວາມຄືບໜ້າທີ່ ໜ້າຊົມເຊີຍ ໃນການປັບປຸງເຕັກໂນໂລຊີພະລັງງານທົດແທນ, ໂດຍໄດ້ຮັບ ການສະໜັບສະໜູນຈາກການລົງທຶນຄັ້ງໃຫຍ່ໃນການຫັນປ່ຽນໄປສູ່ ພະລັງງານແສງຕາເວັນ ແລະ ພະລັງງານລົມ. ນອກຈາກນີ້ ຍັງມີການ ປູກຈິດສຳນຶກທີ່ເພີ່ມຂຶ້ນ ກ່ຽວກັບຄວາມຈຳເປັນໃນການບໍລິໂພກ ແລະ ການຜະລິດແບບຍືນຍົງ. ເຖິງຢ່າງໃດກໍຕາມ, ການປັບປຸງໃນຂົງເຂດ ຂອງເປົ້າໝາຍທີ່ບໍ່ເນັ້ນຕະຫຼາດຕ້ອງມີການຕໍ່ສູ້ພະຍາຍາມ ເຊັ່ນ: ການ ເຂົ້າເຖິງເຕັກໂນໂລຊີການປຸງແຕ່ງອາຫານທີ່ສະອາດ, ຄວາມຊ່ຽວຊານ ດ້ານການທົດແທນ, ການຊ່ວຍເຫຼືອດ້ານການເງິນໃຫ້ປະເທດດ້ອຍພັດທະນາ ເພື່ອສ້າງຄວາມເຂັ້ມແຂງ, ການພັດທະນາແຮງງານທີ່ຫຼາກຫຼາຍ ແລະ ສະເໝີພາບ. ການສຶກສາສະໜັບສະໜູນການບັນລຸຈຸດປະສົງຂອງຄວາມຍືນຍົງ. ສະຖາບັນການສຶກສາ ຕ້ອງປັບປຸງຄວາມເຂົ້າໃຈຂອງນັກຮຽນກ່ຽວກັບ ພະລັງງານ ແລະ ສິ່ງທ້າທາຍດ້ານຄວາມຍືນຍົງອື່ນໆ. ຄວາມຮັບຮູ້ຂອງ ປະຊາຊົນ ສາມາດປະກອບສ່ວນເຂົ້າໃນການປ່ຽນແປງທາງສັງຄົມຢ່າງ ກ້ວ້າງຂວ້າງ. ການພັດທະນາຄວາມສາມາດດ້ານວິຊາຊີບ ຕ້ອງດຳເນີນໄປ ຢ່າງທີ່ບໍ່ເຄີຍມີມາກ່ອນ ເພື່ອສະໜັບສະໜູນການຫັນປ່ຽນທີ່ເປັນມິດຕໍ່ ສິ່ງແວດລ້ອມ.

ການຕິດຕາມດ້ານການເງິນ

ສັດສ່ວນດ້ານການສຶກສາຂອງການໃຊ້ຈ່າຍສາທາລະນະທັງໝົດເພີ່ມຂຶ້ນ ຈາກ 13.8% ໃນປີ 2000 ເປັນ 14.1% ໃນປີ 2019. ຂໍ້ມູນລ່າສຸດ ຂອງ 71 ປະເທດ ຊີ້ໃຫ້ເຫັນວ່າສັດສ່ວນໜຸດລົງເປັນ 13.5% ໃນປີ 2021, ຊຶ່ງຊີ້ໃຫ້ເຫັນເຖິງຜົນກະທົບທີ່ຮຸນແຮງຂອງພະຍາດໂຄວິດ-19. ໃນຈຳນວນ 151 ປະເທດທີ່ມີຂໍ້ມູນສຳລັບປີ 2014-2019, ມີ 48 ປະເທດ ຫຼື 32% ທີ່ບໍ່ບັນລຸສອງມາດຖານທັງ 4% ຂອງ GDP ແລະ 15% ຂອງ ການໃຊ້ຈ່າຍຂອງລັດຖະບານໃສ່ການສຶກສາ. ບາງປະເທດ ມີປະສິດທິພາບ ພໍສົມຄວນໃນການຂັບຂະຫຍາຍຫຼັກສູດທີ່ເຂົ້າເຖິງຜູ້ດ້ອຍໂອກາດທີ່ສຸດ. ແອວຈີເຣຍ ໃຫ້ເງິນອຸດໜູນການສຶກສາປະຈຳປີ ທຽບເທົ່າກັບ 23 ໂດລາ ສະຫະລັດໃຫ້ແກ່ນັກຮຽນຊັ້ນປະຖົມ ແລະ ມັດທະຍົມສຶກສາ 3 ລ້ານຄົນ: ໂດຍແບ່ງເປັນ 38% ຂອງຜູ້ທຸກຍາກທີ່ສຸດ ແຕ່ 10% ຂອງຜູ້ທີ່ຮັ່ງມີທີ່ສຸດ ທີ່ໄດ້ຮັບການສະໜັບສະໜູນ.


ການຊ່ວຍເຫຼືອດ້ານການສຶກສາ ຍັງຄົງທີ່ຢູ່ທີ່ 15.3 ຕື້ໂດລາສະຫະລັດ ໃນປີ 2019. ການຊ່ວຍເຫຼືອ ທີ່ມີປະສິດທິພາບໝາຍເຖິງສິ່ງທີ່ແຕກຕ່າງ ກັນຕໍ່ກັບຄົນທີ່ແຕກຕ່າງກັນ. ນິຍາມໜຶ່ງ ເນັ້ນໃສ່ຄວາມເປັນເຈົ້າຂອງ ປະເທດ ແລະ ຜົນໄດ້ຮັບຂອງປະເທດ, ຄວາມໂປ່ງໃສ ແລະ ຄວາມ ຮັບຜິດຊອບຮ່ວມກັນ, ແລະ ເປັນຄູ່ຮ່ວມພັດທະນາທີ່ຮ່ວມກັນໝິດທຸກ ພາກສ່ວນ. ສັດສ່ວນຂອງການສະໜັບສະໜູນດ້ານງົບປະມານໂດຍກົງ ໃນການຊ່ວຍເຫຼືອທັງໝົດ ໄດ້ໜຸດລົງຈາກ 6.6% ໃນປີ 2002 ມາເປັນ 2.5% ໃນປີ 2019.

ການວິເຄາະບົດລາຍງານການສຳຫຼວດງົບປະມານຂອງຄົວເຮືອນຈາກ ປະມານ 100 ປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງໃນຊຸມປີ 2010 ພົບວ່າການສຶກສາກວມເອົາ 3.2% ຂອງລາຍຈ່າຍທັງໝົດຂອງຄົວເຮືອນ, ໂດຍສູງເຖິງ 6% ຫຼື ຫຼາຍກວ່ານັ້ນໃນປະເທດເຮຕີ ແລະ ເລບານອນ ແລະ ປະເທດໃນອະນຸພາກພື້ນຊາຮາຣາອາຟຣິກາ ເຊັ່ນ: ຣາວານດາ, ອູການດາ ແລະ ຊຳເບຍ.

ຮູບທີ 8:

ສິມທຽບກັບອາຊີບອື່ນໆ, ຄູມີທ່າອ່ຽງວ່າມີເງິນເດືອນຕ່ຳກວ່າໃນປະເທດທີ່ມີລາຍໄດ້ສູງ ແຕ່ມີເງິນເດືອນສູງກວ່າໃນບາງປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ.

ເງິນເດືອນຂອງຄູໂດຍສະເລ່ຍສິມທຽບກັບອາຊີບອື່ນທີ່ຕ້ອງການລະດັບຄຸນວຸດທິທຽບເທົ່າກັນ, ລ່າສຸດມີຢູ່ໃນປີ 2015-2019



GEM StatLink: https://bit.ly/GEM2021_Summary_fig8
ແຫຼ່ງຂໍ້ມູນ: ຖານຂໍ້ມູນຂອງ UIS.

ບົດບາດຂອງພາກສ່ວນທີ່ບໍ່ແມ່ນພາກລັດໃນວົງການການສຶກສາ:

ໃຜເປັນຜູ້ເລືອກ? ໃຜເປັນຜູ້ສູນເສຍ?

ບົດບາດຂອງພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ແມ່ນຂະຫຍາຍອອກໄປນອກເໜືອຈາກການສະໜອງໂຮງຮຽນໄປສູ່ໂຄງການຊ່ວຍເຫຼືອໃນລະດັບການສຶກສາຕ່າງໆ ແລະ ຂອບເຂດອິດທິພົນ. ຄຽງຄູ່ກັບການທົບທວນຄວາມຄືບໜ້າຂອງເປົ້າໝາຍ SDG 4, ລວມທັງຫຼັກຖານທີ່ພົ້ນເດັ່ນກ່ຽວກັບຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ-19, ບົດລາຍງານການຕິດຕາມການສຶກສາໂລກ 2021/2 ຮຽກຮ້ອງໃຫ້ລັດຖະບານເບິ່ງທຸກສະຖານັ້ນ, ນັກຮຽນ ແລະ ຄູອາຈານເປັນສ່ວນໜຶ່ງຂອງລະບົບດຽວ. ມາດຕະຖານ, ຂໍ້ມູນຂ່າວສານ, ສິ່ງຈູງໃຈ ແລະ ຄວາມຮັບຜິດຊອບ ຄວນຊ່ວຍລັດຖະບານໃນການຄຸ້ມຄອງ, ເຄົາລົບ ແລະ ປະຕິບັດສິດທິໃນການສຶກສາຂອງທຸກຄົນ, ໂດຍບໍ່ລະສາຍຕາຈາກສິດທິພິເສດ ຫຼື ການສະແຫວງຫາຜົນປະໂຫຍດ. ການສຶກສາທີ່ໄດ້ຮັບທຶນຈາກລັດຖະບານບໍ່ຈຳເປັນຕ້ອງເປີດເຜີຍໃຫ້ສາທາລະນະ, ແຕ່ການຈັດການກັບຄວາມບໍ່ສະເໝີພາບໃນຂະບວນການສຶກສາ, ຜົນການຮຽນຮູ້ຂອງນັກຮຽນ ແລະ ເງື່ອນໄຂການເຮັດວຽກຂອງຄູອາຈານ ຕ້ອງໄດ້ຮັບການແກ້ໄຂ. ປະສິດທິພາບ ແລະ ນະວັດຕະກຳແທນທີ່ຈະເປັນຄວາມລັບທາງການຄ້າ ຄວນຖືກເຜີຍແຜ່ ແລະ ປະຕິບັດໂດຍທຸກຄົນ. ໃນນັ້ນ, ຄວາມໂປ່ງໃສ ແລະ ຄວາມຊື່ສັດໃນຂະບວນການນະໂຍບາຍການສຶກສາຂອງລັດ ຕ້ອງໄດ້ຮັບການຮັກສາ ເພື່ອສະກັດກັ້ນການສະແຫວງຫາຜົນປະໂຫຍດ.

ຄວາມຮຽກຮ້ອງຕ້ອງການຂອງບົດລາຍງານ - ໃຜເປັນຜູ້ເລືອກ? ໃຜເປັນຜູ້ສູນເສຍ? - ເຊີນຊວນຜູ້ວາງນະໂຍບາຍ ໃຫ້ຕັ້ງຄຳຖາມຄວາມສຳພັນກັບພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ ໃນເລື່ອງທາງເລືອກພື້ນຖານ: ລະຫວ່າງຄວາມສະເໝີພາບ ແລະ ເສລີພາບໃນການເລືອກ; ລະຫວ່າງຊຸກຍູ້ການລິເລີ່ມ ແລະ ການກຳນົດມາດຕະຖານ; ລະຫວ່າງກຸ່ມປະຊາກອນທີ່ມີວິທີການປະຕິບັດ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ; ລະຫວ່າງພັນທະທີ່ຕ້ອງບັນລຸທັນທີພາຍໃຕ້ SDG 4 ແລະ ພັນທະທີ່ຈະຕ້ອງບັນລຸຜົນສຳເລັດຢ່າງກ້າວໜ້າຕາມລຳດັບ (ເຊັ່ນ: ການສຶກສາຫຼັງລະດັບມັດທະຍົມສຶກສາ); ແລະ ລະຫວ່າງຂະແໜງການສຶກສາ ແລະ ຂະແໜງການສັງຄົມອື່ນໆ.

ເຄື່ອງມືອອນລາຍ 2 ຢ່າງທີ່ສະໜັບສະໜູນບົດລາຍງານການຕິດຕາມການສຶກສາໂລກສະບັບທີ່ຫ້າ ຄື: PEER ເຊິ່ງເປັນແຫຼ່ງຂໍ້ມູນການສົນທະນາດ້ານນະໂຍບາຍທີ່ອະທິບາຍເຖິງກິດຈະກຳ ແລະ ກົດລະບຽບຫຼັກການທີ່ບໍ່ແມ່ນຂອງລັດໃນລະບົບການສຶກສາຂອງໂລກ; ແລະ VIEW ເຊິ່ງເປັນເວັບໄຊໃໝ່ທີ່ລວບລວມແຫຼ່ງຂໍ້ມູນ ແລະ ສະໜອງການຄາດຄະເນອັດຕາການສຳເລັດການສຶກສາໃໝ່ໃນແຕ່ລະໄລຍະ.

unesco
Global Education Monitoring Report

4 QUALITY EDUCATION

Sustainable Development Goals

www.unesco.org/publishing • wwww.unesco.org/gemreport